# ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ

**Copyright © 2007 by BAPTISTWAY PRESS®.**
ສງວນລິກຂະສິດ

ອະນຸຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 4, 5
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 4, 5, 11-13 and Easter Lesson
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 6-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 6-10
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 11-13 and Easter Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13 and Easter Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ເນັ້ນໜັກໃນອົງພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 1: 1-14

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ກິຈການ ບົດທີ 1

**ຈຸດສຳຄັນຂອງບົດຮຽນນີ້:** ສາວົກຂອງພຣະເຢຊູທຸກໆຄົນ ຈຳເປັນຕ້ອງເນັ້ນໜັກໃສ່ອົງພຣະເຢຊູ

**ຄຳຖາມເພື່ອສຳຣວດ:** ການເສີມຂະຫຍາຍໂບດທີ່ແທ້ຈິງແລ້ວ ຕ້ອງເນັ້ນໜັກໃສ່ອົງພຣະເຢຊູ

**ຈຸດປະສົງຂອງບົດຮຽນ:** ເພື່ອຈະບົ່ງບອກເຖິງທົ່ນທາງທີ່ພວກສາວົກທັງຫລາຍໄດ້ເນັ້ນໜັກໃສ່ອົງພຣະເຢຊູ ແລ້ວ ມາພິຈາລະນາວ່າໂບດຂອງພວກເຮົາ ໄດ້ພາກັນຕິດຕາມເສັ້ນທາງນີ້ແລ້ວຫລືຍັງ.

## ຄົ້ນຄວ້າ ພ້ອມກັບການປະຕິບັດ

- ຢັ້ງຢືນວ່າ ພຣະຄັມພີມີອຳນາດໃນການນຳພາຊີວິດ ແລະໃນການປ່າວປະກາດ
- ແບ່ງປັນຂ່າວປະເສີດໃຫ້ແກ່ທຸກໆຄົນ
- ເສີມຂະຫຍາຍການເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ
- ເຕົ້າໂຮມຄອບຄົວທີ່ເຊື່ອ ເພື່ອຈະກາຍມາເປັນຜູ້ຮັບໃຊ້
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍຮ່າງກາຍ, ຈິດວິນຍານ, ແລະຄວາມຄິດຕ່າງໆ
- ຍົກສູງທຸກໆຄົນ ໂດຍເຫັນວ່າ ພວກເຮົາກໍແມ່ນພຣະລັກສະນະຂອງພຣະເຈົ້າ
- ສ້າງຜູ້ນຳ

## ຄຳນຳ

ເມື່ອອ່ານການເລີ້ມຕົ້ນຂອງປື້ມກິຈການແລ້ວມາສົມທຽບໃສ່ປື້ມລູກາ (ກິຈການ 1:1 ແລະ ລູກາ 1:1-4 ) ກໍເຫັນໄດ້ວ່າ ແມ່ນຄົນໆ ດຽວກັນທີ່ຂຽນປື້ມສອງເຫລັ້ມນີ້. ຖ້າຈະເວົ້າອີກຢ່າງນຶ່ງກໍເວົ້າໄດ້ວ່າ ລູກາພາກ 1 ແລະ ລູກາພາກ 2. ຢ່າງໃດກໍຕາມ ປື້ມທັງສອງເຫລັ້ມ ກໍໃຊ້ໄດ້ດີຫລາຍໃນການເສີມຂະຫຍາຍໂບດ ທີ່ມີເປົ້າໝາຍ.

ລູກາຍັງໄດ້ສະແດງໃຫ້ພວກເຮົາເຫັນເຖິງເຫດຜົນຂອງການຕັດສິນໃຈແລະຫລັກການສຳຄັນຂອງຄຣິສຕະຈັກໃນສມັຍທຳອິດ. ພວກເຮົາຈະໄດ້ເຫັນການສະຖິດນຳພາຂອງອົງພຣະວິນຍານບໍຣິສຸດໃນຜູ້ທີ່ເຊື່ອທັງຫລາຍ.

ກ່ຽວເຣື່ອງການປ່າວປະກາດ ລູກາຍັງກ່າວວ່າພຣະເຢຊູຊົງສັ່ງສິດທັງຫລາຍໃຫ້ພາກັນສືບຕໍ່ ແລະໃຫ້ພາກັນອອກໄປປ່າວປະກາດໃນທົ່ວທຸກມຸມໂລກ, ໂດຍບໍ່ໃຫ້ປະລະແບບຢ່າງຂອງຄຣິສຕະຈັກສມັຍທຳອິດ ຈະເປັນການນຳພາ, ຄຳແນະນຳ, ຄຳຕັກເຕືອນ ຫລືເງື່ອນໄຂໃດໆກໍແລ້ວແຕ່. ຈົ່ງເຕົ້າໂຮມກັນຮັບພຣະວິນ ຍານບໍຣິສຸດແລ້ວປ່າວປະກາດເລື້ອງຂອງພຣະອົງ. ເມື່ອມາເຖິງນີ້ພວກເຮົາທັງຫລາຍເປັນຄົນຂອງພຣະເຈົ້າ ເປັນຜູ້ໃຫຍ່ໃນພຣະອົງທັງການດຳເນີນຊີວິດແລະການເຊື່ອຟັງ. ໃຫ້ພວກເຮົາມາຮຽນເຖິງການຮຽກເອີ້ນຂອງພຣະເຈົ້າ ຊຶ່ງພວກເຮົາຈະທຳງານໃນພຣະກາຍຂອງພຣະຄຣິດ.

**ເນັ້ນໜັກໃນພຣະເຢຊູຈະນຳພາໃຫ້ພວກເຮົາເຂົ້າໃຈຄຳຖາມທີ່ເລິກເຊິ່ງ** (1:1-2)
ຄຳວ່າ "ເທໂອຟີໂລ" ໄດ້ກ່າວໃນຂໍ້ທີ 1 ແລະຢູ່ໃນ ລູກາ 1:1-3. ພວກເຮົາບໍ່ຮູ້ຄັກແນ່ວ່າເທໂອຟີໂລເປັນໃຜ. ອາດຈະເປັນຜູ້ທີ່ມີຍົດຕຳແໜ່ງສູງ ໜ້ານັບຖື ລູກາຈຶ່ງກ່າວວ່າ "ທ່ານ" ຂຶ້ນກ່ອນໃນກິຈການ ແລະກ່າວວ່າ "ທີ່ນັບຖື" ໃນລູກາ 1:3. ລູກາຂຽນປຶ້ມນີ້ເພື່ອຫລາຍ ໆຄົນທີ່ຈະໄດ້ອ່ານແລ້ວນຳໄປເປັນຕົວຢ່າງໃນການຂະຫຍາຍຄຣິສຕະຈັກ. ເຖິງແມ່ນວ່າລາວຈະກ່າວເຖິງຄຣິສຕະຈັກທຳອິດກໍຕາມ ແຕ່ພຣະທັມນີ້ກໍຍັງໃຊ້ໄດ້ໃນສມັຍປັດຈຸບັນເໝືອນກັນ.

ຄຳຖາມທີ່ສຳຄັນທີ່ຄຣິສຕະຈັກທັງຫລາຍພາກັນຖາມກໍຄື: ພວກເຮົາແມ່ນໃຜ? ເປັນຫຍັງພວກເຮົາຈຶ່ງເຂົ້າມາຢູ່ໃນໂລກນີ້? ເປັນຫຍັງພຣະເຢຊູຈຶ່ງສະເດັດເຂົ້າມາໃນໂລກນີ້? ການຈະສະເດັດກັບມາອີກ, ການປ່າວປະກາດ, ການສິດສອນ, ການດຳເນີນຊີວິດ, ການສິ້ນພຣະຊົນ, ແລະການຟື້ນຄືນພຣະຊົນ ທັງໝົດເຫລົ່ານີ້ແມ່ນສະແດງເຖິງອັນໃດ?

ຄວາມເຊື່ອຢ່າງນີ້ ໄດ້ເລີ້ມຂຶ້ນທີ່ກຸງເຢຣູຊາເລັມ ແລະກໍໄດ້ແຜ່ຂະຫຍາຍອອກໄປເຖິງພວກຢູດາ. ພວກເຂົາໄດ້ເຫັນການດຳເນີນຊີວິດ ແລະຄວາມເຊື່ອນີ້ກໍໄດ້ເຂົ້າໄປເຖິງພວກຊາວຕ່າງຊາດຕ່າງ ໆ. ຄຣິສຕະຈັກສມັຍທຳອິດແມ່ນເພິ່ງພາອາສັຍພຣະວິນຍານບໍຣິສຸດຢ່າງແທ້ຈິງ ແມ່ນແຕ່ອົງພຣະເຢຊູຄຣິດກໍຍັງຕ້ອງເພິ່ງພຣະວິນຍານບໍຣິສຸດ ຈະເຫັນໄດ້ທີ່ແມ່ນ້ຳຈໍແດນ ຫລັງຈາກທີ່ພຣະອົງໄດ້ຮັບບັບຕິສມາແລ້ວ.

ຜູ້ຕິດຕາມພຣະເຢຊູຫລືຜູ້ທີ່ເອີ້ນຕົນເອງວ່າສິດຂອງພຣະອົງຈຳເປັນຕ້ອງສືບຕໍ່ການປ່າວປະກາດ. ອົງພຣະເຢຊູໄດ້ປາກົດພຣະກາຍຂອງພຣະອົງໃນການປ່າວປະກາດເຊັ່ນໃດ, ຜູ້ຕິດຕາມພຣະອົງກໍຄວນຈະປ່າວປະກາດໃຫ້ຄົນທັງຫລາຍໄດ້ເຫັນກັບຕາວ່າພຣະເຢຊູຄຣິດຊົງມີຈິງ, ເປັນຈິງຊຶ່ງເຫັນໄດ້ຈາກຕົວຂອງຜູ້ຕິດຕາມນັ້ນເອງ. ດັ່ງນັ້ນພວກເຮົາຕ້ອງເນັ້ນໃສ່ອົງພຣະເຢຊູຄຣິດ.

**ເນັ້ນໜັກໃນພຣະເຢຊູ ຮຽກຮ້ອງໃຫ້ພວກເຮົາລໍຖ້າຂອງພຣະຣາຊທານຈາກພຣະເຈົ້າ**(1:3-5)
ລູກາໄດ້ລາຍງານຕໍ່ທ່ານເທໂອຟີໂລເຖິງການປາກົດກາຍຂອງພຣະເຢຊູ. ທ່ານຢັ້ງຢືນວ່າພຣະເຢຊູຍັງຊົງພຣະຊົນຢູ່ຈິງ ເປັນເຣື່ອງທີ່ມີແກ່ນສານແລະເປັນເຣື່ອງທີ່ທ່ານໄດ້ສືບສວນຢ່າງຖີ່ຖ້ວນແລ້ວ. ພຣະອົງໄດ້ປາກົດຢູ່ກັບພວກເຂົາເຖິງສີ່ສິບວັນ ແລະໄດ້ຊົງສົນທະນາກັບພວກເຂົາເຖິງເຣື່ອງຣາຊອານາຈັກຂອງພຣະເຈົ້າ. ລູກາບົດທີ 24:36-43 ສາວົກຂອງພຣະເຢຊູກຳລັງເດີນທາງໄປເອມາອູດ ພວກເຂົາກໍພາກັນສົນທະນາກັນ ເຖິງເຣື່ອງທີ່ເກີດຂຶ້ນ. ຂະນະດຽວກັນນັ້ນ ພຣະອົງກໍປາກົດຂຶ້ນໃນທ່າມກາງພວກເຂົາ, ພວກເຂົາກໍພາກັນຕົກໃຈຄຶດວ່າຜີຫລອກ. ພຣະອົງໄດ້ເຊີນໃຫ້ພວກເຂົາທົດສອບຄວາມຈິງ ຄືໃຫ້ພວກເຂົາເອົາມືມາຈັບມາບາຍ ເພາະວ່າຜີຈະບໍ່ມີເນື້ອກາຍ. ຍັງບໍ່ພໍທໍ່ນັ້ນ ພຣະອົງຊົງຖາມອາຫານຈາກພວກເຂົາ ແລະແລ້ວພຣະອົງກໍຊົງຮັບປະທານຕໍ່ໜ້າຂອງພວກເຂົາ.

ໃນຂໍ້ທີ 4 ແລະ 5 ພຣະອົງໄດ້ຊົງສັ່ງພວກເຂົາບໍ່ໃຫ້ອອກໄປຈາກກຸງ ເຢຣູຊາເລັມ. ພະລັງອຳນາດສ່ວນໃຫຍ່ແລ້ວແມ່ນການລໍຖ້າພຣະວິນຍານບໍຣິສຸດ. ການລໍຖ້າພຣະເຈົ້າແມ່ນສິ່ງຈຳເປັນ ເພາະເປັນການລໍຖ້າປະສົບການ. ຜູ້ໃດທີ່ສາມາດລໍຖ້າໄດ້ກໍສະແດງເຖິງຄວາມອົດທົນ ສະແດງເຖິງຄວາມສາມາດທີ່ຈະທຳງານໄດ້ຢ່າງມີປະສິດທິຜົນ. (ພສສ 46:10; 130:5; ອຊຢ 40:29-31; ຣມ 8:22-25)

ການປ່າວປະກາດທີ່ໄດ້ຮັບຜົນຫລາຍໃນສມັຍທຳອິດຂຶ້ນຢູ່ຄວາມອົດທົນລໍຖ້າພຣະວິນຍານ ບໍ່ໄດ້ຂຶ້ນກັບວ່າເຈົ້າສາມາດວາງແຜນເກັ່ງ, ເຈົ້າມີຄວາມຮູ້ສູງ **ຈົ່ງຈຳເອົາໄວ້ ລໍຖ້າພຣະວິນຍານນຳພາ**

**ເນັ້ນໜັກໃນອົງພຣະເຢຊູແມ່ນການຍອມຢູ່ໃນອານາຈັກແລະອຳນາດຂອງພຣະອົງ** (1:6-8)

ການຮັບບັບຕິສະມາໂດຍພຣະວິນຍານບໍຣິສຸດປະເສີດກວ່າການຮັບບັບຕິສະມາດ້ວຍນ້ຳໂດຍໂຢຮັນ. ການຮັບບັບຕິສະມາໂດຍພຣະວິນຍານບໍຣິສຸດ ແມ່ນການຈຸ່ມໃນພຣະວິນຍານຫມົດທັງຕົວ. ການບັບຕິສະມານີ້ອ່ານໃນກິຈການ 2:7-8 ຈະໄດ້ອະທິບາຍໃຫ້ພວກເຮົາຮູ້. ການທີ່ຈະຮັບຢ່າງໃດນັ້ນຄົງຈະບໍ່ເປັນບັນຫາສຳຄັນ, ສິ່ງສຳຄັນທີ່ສຸດນັ້ນແມ່ນທ່ານຈະປ່າວປະກາດ ແລະເປັນພະຍານໃຫ້ແກ່ພຣະເຢຊູຫລືບໍ່.

ການສະຖິດຢູ່ນຳສາວົກສີ່ສິບວັນເປັນຊ່ວງສັ້ນໆ ສາວົກຈຶ່ງມີບັນຫາຖາມພຣະອົງເຣື່ອງຣາຊອານາຈັກ. ເປັນຂອງທັມດາ ຈະສຶກສາສີ່ສິບວັນກ່ຽວກັບສິ່ງທີ່ຕາບໍ່ເຫັນນັ້ນເປັນການຍາກຫລາຍ. ສາວົກຖາມພຣະອົງວ່າ "ພຣະອົງຈະຕັ້ງຣາຊອານາຈັກຄືນໃຫມ່ໃຫ້ແກ່ພວກອິສຣາເອນໃນບັດນີ້ຫລື?" ຄຳຖາມນີ້ຫມາຍຄວາມວ່າສາວົກບໍ່ຮູ້ວ່າພຣະອົງຈະກະທຳສິ່ງໃດ. ພວກເຮົາກໍເຫມືອນກັນ ຈົນສອງພັນປີກວ່າແລ້ວຍັງມີຫລາຍລ້ານຄົນທີ່ບໍ່ເຂົ້າໃຈວ່າພຣະອົງຈະກະທຳສິ່ງໃດ. ພຣະອົງຊົງສອນວ່າອານາຈັກຂອງພຣະອົງແມ່ນບໍ່ຈຳກັດຊົນຊັ້ນ, ບໍ່ຈຳກັດເຊື້ອຊາດ, ບໍ່ຈຳກັດພາສາ, ເຫັນໄດ້ໃນການທີ່ພຣະອົງສັ່ງພວກເຂົາໃຫ້ອອກໄປທົ່ວໂລກ.

ຂໍ້ທີ 7 ພຣະອົງຕອບສາວົກທັງຫລາຍວ່າ "ບໍ່ແມ່ນຫນ້າທີ່ຂອງພວກທ່ານທີ່ຈະຮູ້ເວລາຫລືຍາມກຳນົດ ຊຶ່ງພຣະບິດາໄດ້ຊົງຕັ້ງໄວ້..." ຖ້າຈະເວົ້າເຖິງເຣື່ອງເວລາກໍເປັນການຍາກເຫມືອນກັນ ເພາະເວລາຂອງພຣະອົງກັບເວລາຂອງພວກເຮົາແມ່ນແຕກຕ່າງກັນ. ແມ່ນແຕ່ເວລາຂອງມະນຸດທີ່ອາສັຍຢູ່ໃນໂລກນີ້ກໍຍັງແຕກຕ່າງກັນ. ເຊັ່ນ: ຄາລີຟໍເນັຽ ແລະຈໍເຈັຽ ກໍຍັງແຕກຕ່າງກັນເຖິງສາມຊົ່ວໂມງ ຫລາຍໆບ່ອນກໍແຕກຕ່າງກັນໄປຕາມສະຖານທີ່. ແລ້ວພຣະອົງຊົງບອກພວກເຂົາອີກວ່າ ເຣື່ອງເວລານັ້ນບໍ່ແມ່ນຫນ້າທີ່ຂອງພວກທ່ານ, ສິ່ງທີ່ທ່ານຄວນເຮັດກໍຄືທ່ານຈະໄດ້ຮັບຣິດເດດຈາກພຣະວິນຍານບໍຣິສຸດ ແລ້ວອອກໄປປະກາດທົ່ວເຂດແຄ້ວນນີ້ແລະທົ່ວໂລກ.

ພຣະເຈົ້າໄດ້ປະທານໃຫ້ສາວົກຂອງພຣະອົງປະກອບດ້ວຍພຣະວິນຍານບໍຣິສຸດ ໂດຍພຣະເຢຊູເຮົາຈະເຫັນໄດ້ໂດຍການຮັບບັບຕິສະມາຂອງພຣະອົງທີ່ແມ່ນ້ຳຈໍແດນ ແລ້ວພຣະອົງກໍໄດ້ມອບຍື່ນໃຫ້ຜູ້ທີ່ຕິດຕາມພຣະອົງ. (ເບິ່ງໃນໂຢຮັນ ບົດທີ 13)

## <u>ເນັ້ນຫນັກໃນອົງພຣະເຢຊູ ແມ່ນການຮວມເຂົ້າກັນອະທິຖານເປັນປະຈຳ</u> (1:9-14)

ພຣະເຢຊູໄດ້ສະເດັດຂຶ້ນສູ່ສວັນຕໍ່ຫນ້າຕໍ່ຕາຂອງພວກເຂົາທີ່ພູເຂົາຫມາກກອກເທດ. ເມື່ອພວກເຂົາກຳລັງຈ້ອງສາຍຕາໃສ່ພຣະເຢຊູຢູ່ນັ້ນ ກໍມີຊາຍໃສ່ຊຸດຂາວມາປາກົດແກ່ພວກເຂົາແລ້ວກ່າວວ່າ ຊາວຄາລີເລເອີຍທ່ານເບິ່ງທ້ອງຟ້າເຮັດຫຍັງ ພຣະເຢຊູອົງນີ້ໄດ້ຖືກຮັບຂຶ້ນໄປສວັນແລ້ວ ແລະພຣະອົງຈະສະເດັດມາອີກ. ໃນຂະນະທີ່ພຣະເຢຊູຊົງສະຖິດຢູ່ນຳພວກເຮົາໂດຍພຣະວິນຍານບໍຣິສຸດນີ້ ພວກເຮົາກໍຄວນສຳນຶກເຖິງພຣະອົງທຸກເວລາ ເນັ້ນຫນັກຢູ່ກັບພຣະອົງແລະປ່າວປະກາດເຣື່ອງຂອງພຣະອົງທຸກເວລາ.

ຢ່າລືມວ່າເວລາພຣະອົງຊົງມີຕົວຕົນຢູ່ໃນໂລກນີ້ພຣະອົງກໍຊົງອ້ອນວອນອະທິຖານເປັນປະຈຳ. ການອະທິຖານບໍ່ແມ່ນແຕ່ຢາກເຫັນການອັສຈັນເທົ່ານັ້ນ ແຕ່ເປັນການສົນທະນາກັບພຣະອົງດ້ວຍ. ພວກສາວົກຂອງພຣະອົງກໍພາກັນກັບໄປແລະຮ່ວມກັນອະທິຖານເປັນປະຈຳ. (ກິຈການ 1:14)

<u>ຄຳຖາມ</u>

1. ຖ້າພວກເຮົາຫາກບໍ່ເປັນຕົວຢ່າງໃນການເປັນຄຣິສຕຽນແລ້ວ ຄົນລຸ້ນຕໍ່ໄປຈະເປັນຢ່າງໃດ?

2. ລູກາ 4:18-19 "ພຣະເຢຊູຊົງກ່າວວ່າ "....ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ......" ຄຣິສຕະຈັກຂອງທ່ານ

ຍັງປະກາດຢ່າງນີ້ຫລືບໍ່?

3. ສາວົກຂອງພຣະເຢຊູ ຢູ່ກັບພຣະອົງ ເຫັນພຣະອົງ ເດີນກັບພຣະອົງ ເຖິງປານນັ້ນພວກເຂົາກໍຍັງບໍ່ເຂົ້າໃຈວ່າພຣະອົງມີເປົ້າໝາຍຢ່າງໃດໃນຊີວິດຂອງພວກເຂົາ. ພວກເຮົາແຕກຕ່າງຫຍັງກັບພວກເຂົາ?

4. ທ່ານເຫັນຄຣິສຕະຈັກທຸກວັນນີ້ປັນຢ່າງໃດ ກ່ຽວກັບການນຳພາຂອງພຣະວິນຍານບໍຣິສຸດ?

5. ທ່ານເຄີຍໄດ້ເຂົ້າຮ່ວມກຸ່ມອະທິຖານຫລືບໍ່?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 2
## ພະລັງແລະອຳນາດຕໍ່ຜູ້ປະກາດພຣະທັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 2:1-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ກິຈການ 2: 1-40

**ຈຸດສຳຄັນຂອງບົດຮຽນນີ້:** ພຣະວິນຍານບໍຣິສຸດປະທານພຣະວິນຍານບໍຣິສຸດໃຫ້ແກ່ພວກສາວົກ ເພື່ອຈະໄດ້ປ່າວປະກາດເຣື່ອງຂອງພຣະເຢຊູ.

**ຄຳຖາມເພື່ອສຳຣວດ:** ພວກເຮົາອີງໃສ່ກຳລັງຄວາມສາມາດຂອງຕົວເອງບໍ່ ? ຫລືວ່າອີງຕາມພຣະກຳລັງຂອງວິນຍານບໍຣິສຸດຊົງນຳ.

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊີ້ແຈງໃຫ້ເຫັນວ່າເມື່ອບຸກຄົນຫລືຄຣິສຕະຈັກທີ່ພຣະວິນຍານບໍຣິສຸດຊົງນຳນັ້ນຈະມີຫຍັງເກີດຂຶ້ນ?

**ສຶກສາຄົ້ນຄວ້າ ແລະການເນັ້ນຫນັກ**

- ຢັ້ງຢືນວ່າພຣະຄັມພີ ມີຣິດອຳນາດນຳພາຊີວິດແລະການປ່າວປະກາດ
- ແບ່ງປັນພຣະກິດຕິຄຸນຂອງພຣະເຢຊູໃຫ້ກັບທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂອງຄວາມເຊື່ອ
- ຣວບຣວມເອົາຄອບຄົວທີ່ເຊື່ອໃຫ້ປະກອບສ່ວນໃນການຮັບໃຊ້
- ເຫັນທຸກຄົນເປັນສິ່ພຣະທັດຂອງພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍສຸດກຳລັງ, ດ້ວຍສຸດຈິດ, ແລະດ້ວຍສຸດຄວາມຄິດທີ່ມີ
- ຈັດຕຽມຜູ້ຮັບໃຊ້ໃຫ້ພ້ອມຢູ່ສເມີ

### ຄຳນຳ

ຮູບພາບໃນພຣະຄັມພີ. ກິຈການບົດທີ 2 ເລີ້ມຕົ້ນຂຶ້ນມາ, ພວກເຮົາໄດ້ຍິນສຽງນົກຕົບປີກກ່ອນເຂົ້າສູ່ຮັງຂອງມັນ, ອີກທາງນຶ່ງເປັນຍາມເຊົ້າ ຊຶ່ງເປັນເຫມືອນຕອນເຊົ້າຂອງແຕ່ລະເຊົ້າ. ເຊົ້າມື້ນີ້ເປັນມື້ທີ່ສຳຄັນ ເປັນວັນເພັນເຕຄອສຕາມປະຕິທິນຂອງຊາວຍິວ. ເພັນເຕຄອສ ພາສາກຣີກແມ່ນຫ້າສິບ (ມື້ທີ ຫ້າສິບ) ຫລັງຈາກນັ້ນກໍຈະແມ່ນເທສການກິນເຂົ້າຈີ່ບໍ່ມີເຊື້ອແປ້ງ. ເຮົາຮູ້ຈັກກັນດີໃນພຣະຄັມພີໃຫມ່ ເທສການນີ້ຈະແກ່ຍາວໄປຈົນເຖິງອາທິດ. ແລະກໍຍັງເປັນຣະດູເກັບກ່ຽວຜົລປູກແລ້ວກໍນຳມາຖວາຍແກ່ພຣະເຈົ້າ. ວັນນີ້ເປັນວັນເພັນເຕຄອສທີ່ບໍ່ມີວັນໃດຄື ແລະກໍບໍ່ເຫມືອນເພັນເຕຄອສທີ່ຜ່ານມາ.

### ຈົ່ງມາຣວບຣວມກັນ (2:1)

ເຊົ້າວັນນີ້ທີ່ກຸງເຢຣູຊາເລັມ ຕາມທັມນຽມແລ້ວແມ່ນຫລາຍຄົນຕຽມຕົວທີ່ຈະເຂົ້າສູ່ການເຜົາເຄື່ອງບູຊາ, ຊຶ່ງມັນເປັນການລະລຶກເຖິງຄວາມເປັນມາຂອງມະນຸດຊາດ. ວັນນີ້ກໍເປັນວັນທີຫ້າສິບທີ່ພຣະເຢຊູໄດ້ຟື້ນຄືນພຣະຊົນ ແລະກໍເປັນວັນທີສິບທີ່ພຣະອົງໄດ້ສະເດັດຂຶ້ນສູ່ສວັນ. ສາວົກຂອງພຣະອົງກໍໄດ້ເຝົ້າອ້ອນວອນເຫມືອນທີ່ພຣະອົງຊົງສັ່ງໄວ້ນັ້ນ.

(ກິຈການ 1:4; 14) ພວກເຂົາທັງຫລາຍບໍ່ມີປະສົບການໃນການຄືນພຣະຊົນນີ້, ເຂົາຈຶ່ງບໍ່ຮູ້ວ່າ ແມ່ນຫຍັງຈະເກີດຂຶ້ນ ພຣະເຈົ້າຜູ້ດຽວຈຶ່ງຈະສາມາດຮູ້ໄດ້.

ທ່ານຄິດບໍ່ວ່າເປັນຫຍັງຄົນເຫລົ່ານີ້ຈຶ່ງພາກັນຮ້ອນຮົນເອົາໃຈໃສ່ໃນການອະທິຖານ? ພວກເຂົາເຈົ້າເຊື່ອຟັງພຣະອົງບໍ່? ພຣະເຢຊູຊົງສັ່ງພວກເຂົາວ່າ ໃຫ້ພາກັນອ້ອນວອນອະທິຖານແລະລໍຖ້າ. ໂດຍການສືບຕໍ່ລໍຖ້ານີ້ ພວກເຂົາກໍໄດ້ເນັ້ນໜັກໃສ່ອົງພຣະເຢຊູ. ພວກເຂົາທັງຫລາຍເຊື່ອວ່າພຣະເຈົ້າຈະກະທຳສິ່ງໃດສິ່ງນຶ່ງໃຫ້ແກ່ພວກເຂົາແມ່ນບໍ່? ພວກເຂົາລໍຖ້າຂອງພຣະຣາຊທານຈາກພຣະເຈົ້າແມ່ນບໍ່?

ສາວົກທັງຫລາຍເຫລົ່ານີ້ສອນໃຫ້ພວກເຮົາເຫັນເຖິງການເຊື່ອຟັງ, ເຫັນເຖິງການຕິດຕາມຄຳສອນ, ແລະເຫັນເຖິງຄວາມອົດທົນໃນການລໍຖ້າ.

## <u>ຄຣິສຕະຈັກເກີດຂຶ້ນແລ້ວ</u> (2:2-4)

ຂະນະທີ່ມີກຳລັງສິ່ງສຽງຮ້ອງ, ພຣະເຈົ້າກໍຢູ່ເບື້ອງຫລັງຂອງພວກເຂົາ, ຂະນະທີ່ມະນຸດອອກໄປທຳງານ, ພຣະເຈົ້າກໍຢູ່ເບື້ອງຫລັງເຂົາ. ພຣະເຈົ້າຊົງຢູ່ເບື້ອງຫລັງຂອງທຸກຢ່າງ ພຣະເຈົ້າຈະນຳສິ່ງໃຫມ່ໆມາບໍ່ຍາມໃດກໍຍາມນຶ່ງ. ຫລັງຈາກສິບວັນຜ່ານໄປພຣະອົງກໍນຳການອັສຈັນມາສູ່ວັນເພັນເຕຄອສ. ແຕ່ພວກເຮົາຢ່າຄາດວ່າພຽງແຕ່ສິບວັນ ຫລືວ່າວັນເພັນເຕຄອສເທົ່ານັ້ນ.

ການອະທິຖານຂອງພວກເຮົາແມ່ນເພື່ອຈັດຕຽມພວກເຮົາ ເພື່ອຂອງພຣະຣາຊທານທີ່ພຣະອົງຈະມອບໃຫ້ ເພື່ອພວກເຮົາຈະໄດ້ທຳງານໃຫ້ພຣະອົງຢ່າງເຕັມສ່ວນ. ເມື່ອຫລາຍຄົນມາຮວມກັນອ້ອນວອນອອກໃນພຣະນາມຂອງພຣະອົງ ພຣະອົງຈະກະທຳສິ່ງໃດສິ່ງນຶ່ງໃຫ້ເກີດຂຶ້ນໄດ້. ວັນເພັນເຕຄອສແມ່ນວັນທີ່ຄຣິສຕະຈັກກຳເນີດເກີດຂຶ້ນໂດຍການນຳພາຂອງພຣະເຈົ້າ ແລະການປ່າວປະກາດເຣື່ອງຂອງພຣະເຢຊູກໍຂຍາຍອອກໄປ.

2:2 "ໃນທັນໃດນັ້ນກໍມີສຽງມາຈາກຟ້າ........" ພວກເຮົາຈະເຫັນໄດ້ວ່າ ພຣະວິນຍານບໍຣິສຸດມີການກ່ຽວພັນກັບລົມ ແຕ່ພຣະອົງບໍ່ແມ່ນລົມ. (ເບິ່ງໃນ 1 ພົງກະສັດ 19:11; ເອເຊກຽນ 37:9)
2:3 ຕໍ່ມາພວກເຂົາກໍໄດ້ເຫັນແປວໄຟ. ພວກເຂົາໄດ້ຍິນແລະກໍໄດ້ເຫັນ ແລະຫລັງຈາກນັ້ນພວກເຂົາກໍໄດ້ສຳຜັດກັບພຣະວິນຍານບໍຣິສຸດ. ເວລາພວກເຂົາສັມຜັດກັບພຣະວິນຍານບໍຣິສຸດນັ້ນລະແມ່ນພຣະເຈົ້າໄດ້ຖອກເທພຣະວິນຍານຂອງພຣະອົງລົງມາສູ່ຄົນທັງຫລາຍ.

ມີຫລາຍຄົນກ່າວວ່າ ພຣະວິນຍານບໍຣິສຸດແມ່ນເລີ້ມຕົ້ນທີ່ວັນເພັນເຕຄອສ, ບໍ່ແມ່ນຢ່າງນັ້ນດອກ ພຣະອົງພຽງສຳແດງໃຫ້ເຫັນລັກສນະຂອງການເປັນມາຊື່ໆ. ແທ້ຈິງພຣະວິນຍານບໍຣິສຸດທຳງານມາກ່ອນນີ້ດົນນານແລ້ວ. ພຣະວິນຍານບໍຣິສຸດສະແດງໃຫ້ມາຣີອາເຫັນ ໃນລູກາ 1:35 ຊົງສຳແດງໃຫ້ ຊີເມໂອນເຫັນໃນ ລູກາ 2:25-27 ແລະຊົງສະແດງໃຫ້ພຣະເຢຊູເອງເຫັນໃນ ລູກາ 4:1, 14; 10:21. ພຣະວິນຍານບໍຣິສຸດຍັງໄດ້ສຳແດງໃຫ້ແກ່ຜູ້ທີ່ເຊື່ອ ແລະຜູ້ປ່າວປະກາດທັງຫລາຍໃນທຸກວັນນີ້ເຫັນເປັນປະຈຳ.

## <u>ການເພີ້ມພະລັງອຳນາດ ແມ່ນການປະກາດຂ່າວປະເສີດ</u> (2:5-13)

ເພັນເຕຄອ ແມ່ນເທສການປະຈຳປີທີ່ນຳພວກຍິວທັງຫລາຍໃຫ້ມາຮວມກັນ ຮວມພະລັງ ຮວມອຳນາດ ທີ່ກຸງເຢຣູຊາເລັມ. ພວກຍິວທີ່ເປັນຜູ້ຊາຍທີ່ສັງກັດຢູ່ໃນຂອບເຂດຣັສມີ 20 ໄມ໌ລ ຈຳເປັນຕ້ອງໄດ້ມາປະກອບສ່ວນ. ເທສການແມ່ນຈັດຂຶ້ນໃນຣະຫວ່າງຕົ້ນເດືອນມິຖຸນາ. ປະຊາຊົນສ່ວນຫລາຍຈະມາປະກອບສ່ວນຫລາຍກວ່າເທສການປັສຄາ.

ການປ່າວປະກາດຂ່າວປະເສີດໃນສະຫະຣັດອະເມຣິກາກໍໄດ້ມີການປ່າວປະກາດຫລາຍພາສາ ໃນນັ້ນກໍມີພາສາລາວຮ່ວມຢູ່ນຳ. ພຣະວິນຍານບໍຣິສຸດຈະຊ່ວຍຮ່ວມໃນການປ່າວປະກາດ, ໃນການເພີ້ມພະລັງເພື່ອຜູ້ປະກາດທັງຫລາຍ. ດັ່ງນັ້ນພວກເຮົາຈຶ່ງເຫັນໄດ້ໃນການປ່ຽນແປງຂອງຊາວຕ່າງຊາດຕ່າງ ໆ (ພວກທີ່ບໍ່ແມ່ນອະເມຣິກາ) ພຣະວິນຍານບໍຣິສຸດຈະທຳງານໃນທຸກຍຸກທຸກສມັຍແລະຈະທຳງານຕລອດໄປ.

ຖ້າບໍ່ມີຄວາມເຊື່ອແລະບໍ່ໄດ້ສຳຜັດຢ່າງແທ້ຈິງແລ້ວ ຄຳວ່າພຣະວິນຍານບໍຣິສຸດຈະກາຍເປັນຄຳຢອກລໍ້, ເປັນຄຳເວົ້າຫລິ້ນ ບາງຄັ້ງກໍຍັງເປັນການເຢາະເຢີ້ຍ.

<u>ການກ່າວຄຳພະຍານທີ່ບໍ່ມີໃຜຄື ແລະບໍ່ຄືໃຜ</u> (2:14-24

ສົມມຸດວ່າທ່ານເປັນຜູ້ນຶ່ງຊຶ່ງຢູ່ໃນໂບດສມັຍສັຕວັດທີ 2 ທ່ານນັ່ງຢູ່ໃນຫ້ອງຟັງຊີໂມນ ເປໂຕເທສນາກ່ຽວກັບເຣື່ອງການຮອບຮອມໂບດ. ຄັ້ງສຸດທ້າຍທີ່ເປໂຕກ່າວແມ່ນຢູ່ໃນກິຈການ 1:15-22. ຢູ່ທີ່ນັ້ນແມ່ນລາວຮັບຜິດຊອບເຣື່ອງການຈັດແຜນການຂອງໂບດ, ແລະລາວກໍໄດ້ເລືອກເອົາມັດທັຽ ແທນຢູດາອິສກາຣີອົດຜູ້ທໍຣະຍົດຕໍ່ພຣະເຢຊູ. ກ່ອນເປໂຕຈະກ່າວເທສນາ ລາວໄດ້ໂຕ້ຕອບຜູ້ທີ່ເຢາະເຢີ້ຍເສັຽກ່ອນ (2:13) ຫລັງຈາກນັ້ນແມ່ນລາວໄດ້ອີງຕາມຄຳເວົ້າຂອງໂຢເອນ ຜູ້ປະກາດພຣະທັມໃນພຣະຄັມພີເດີມວ່າພຣະເຈົ້າຈະຖອກເທພຣະວິນຍານບໍຣິສຸດລົງໃສ່ມະນຸດທັງປວງ. (2:17-21)

ພາກສ່ວນທຳອິດເລີ້ມຕົ້ນດ້ວຍຂໍ້ທີ 22 ເປໂຕຮຽກຮ້ອງໃຫ້ຕັ້ງໃຈຟັງ ເພາະເປັນເຣື່ອງກ່ຽວກັບພຣະເຢຊູຜູ້ທີ່ພຣະເຈົ້າຊົງເລືອກສັນໄວ້ສຳຫລັບໄຖ່ຄົນທັງປວງ.

ຂໍ້ທີ 25-40 ເປໂຕໄດ້ອ້າງອີງໃສ່ພຣະທັມເພງສັຣເສີນ 16:8-11 ແລະ ເພງສັຣເສີນ 110:1. ເປັນສິ່ງຈຳເປັນຫລາຍທີ່ເປໂຕຄວນຈະກ່າວເຖິງສິ່ງເຫລົ່ານີ້ແກ່ພວກຢິວ ໃຫ້ລະລຶກເຖິງຄວາມເຊື່ອ.

ທຸກວັນນີ້ພຣະເຈົ້າກໍຍັງໃຊ້ຄຳພະຍານທີ່ແປກ ໆ ໃຫ້ນຳຄົນທັງຫລາຍມາຫາພຣະອົງບໍ່ວ່າຊາຍຫລືຍິງ ຫນຸ່ມຫລືແກ່ເພື່ອເຂົາທັງຫລາຍຈະໄດ້ຮັບຄວາມລອດພົ້ນ. ພຣະເຈົ້າເພີ້ມພະລັງໃຫ້ແກ່ຄຣິສຕະຈັກໂດຍພຣະວິນຍານບໍຣິສຸດ.

<u>ຄຳຖາມ</u>

1. ທ່ານເຫັນສິ່ງໃດສຳຄັນບໍ່ໃນວັນເພັນເຕຄອສ?

2. ການອ້ອນວອນອະທິຖານຜູ້ດຽວສຳຄັນບໍ່? ຖ້າມີຫລາຍຄົນມາຮວມກັນເດຈະເປັນຢ່າງໃດ? ສາວົກຂອງພຣະເຢຊູ ພາກັນອ້ອນວອນອະທິຖານຢ່າງໃດ?

3. ທ່ານເຫັນພ້ອມຫລືບໍ່ເຫັນພ້ອມວ່າວັນເພັນເຕຄອສເປັນວັນທີ່ຄຣິສຕະຈັກເກີດຂຶ້ນເທື່ອທຳອິດ. ຈົ່ງໃຫ້ເຫດຜົນ.

4. ພຣະເຈົ້າໄດ້ຖອກເທພຣະວິນຍານບໍຣິສຸດມາເຫນືອຄົນທັງປວງ, ເດັກນ້ອຍຜູ້ໃຫຍ່, ຜູ້ຍິງຜູ້ຊາຍ. ກິຈການ 2:17-18 ທ່ານມີຄວາມຄິດຢ່າງໃດ?

5. ພຣະເຈົ້າອົງດຽວ, ພຣະວິນຍານດຽວ ສຳລັບຄຳພະຍານເດຈຳເປັນຕ້ອງຄືກັນທຸກຄົນບໍ່?

*ສາ. ດຣ. ບຸນໂຮມ ພົມມະຈັນ*

# <u>ບົດຮຽນທີ 3</u>
# <u>ຊີວິດຂອງຄຣິສຕຽນ ຕ້ອງຈະແຈ້ງໃນສັງຄົມ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ກິຈການ 2:41-47

**<u>ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:</u>** ກິຈການ 2: 41-47

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ຄຣິສຕຽນຕ້ອງດໍາເນີນຊີວິດຢ່າງຈະແຈ້ງໃນສັງຄົມ-ປະກອບສ່ວນໃນການສຶກສາຮໍ່າຮຽນເຣື່ອງຂອງພຣະເຢຊູຄຣິດ ເພື່ອຄວາມຮັກຊຶ່ງກັນແລະກັນ, ການນະມັສການພຣະເຈົ້າ, ລວມທັງຜູ້ທີ່ເຊື່ອໃຫມ່ດ້ວຍ

**<u>ຄໍາຖາມເພື່ອສໍາຣວດ</u>:** ຈະ ຈະແຈ້ງໃນວົງສັງຄົມຢ່າງໃດ ເພື່ອຈະເສີມຂຍາຍອອກໄປ ໃນໂລກແຫ່ງຄວາມເຫັນແກ່ຕົວນີ້.

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຈະວັດແທກຊີວິດຂອງຄຣິສຕະຈັກຂອງພວກເຮົາ ຕ້ອງໄດ້ເບິ່ງຄືນເຖິງຄຣິສຕະຈັກສມັຍຄັ້ງທໍາອິດ ໃນກິຈການ.

**<u>ສຶກສາຄົ້ນຄວ້າ ແລະການເນັ້ນຫນັກ</u>**

- ຢັ້ງຢືນວ່າພຣະຄັມພີ ມີຣິດອໍານາດນໍາພາຊີວິດແລະການປ່າວປະກາດ
- ແບ່ງປັນຂ່າວປະເສີດຂອງພຣະເຢຊູໃຫ້ກັບທຸກໆຄົນ
- ເສີມຂຍາຍການເຕີບໃຫຍ່ຂອງຄວາມເຊື່ອ
- ຮວບຮວມເອົາຄອບຄົວທີ່ເຊື່ອໃຫ້ປະກອບສ່ວນໃນການຮັບໃຊ້
- ເຫັນທຸກຄົນເປັນສິ່ງພຣະຫັດຂອງພຣະເຈົ້າ
- ເຊື່ອຟັງແລະຮັບໃຊ້ພຣະເຢຊູ ດ້ວຍສຸດກໍາລັງກາຍ, ດ້ວຍສຸດຈິດວິນຍານ, ແລະດ້ວຍສຸດຄວາມຄິດທີ່ມີ
- ຈັດຕຽມຜູ້ຮັບໃຊ້ໃຫ້ພ້ອມຢູ່ສເມີ

## <u>ຄໍານໍາ</u>

ອາຈານຄົນນຶ່ງ ທີ່ສະມັກເປັນສິດຍາພິບານ ກໍາລັງກ້າວຂຶ້ນສູ່ຮ້ານທໍາມາດ ເພື່ອຈະທົດລອງໃນການເທສນາ. ຄະນະກັມການຊອກຫາອາຈານໄດ້ພາກັນຕັ້ງເປົ້າຫມາຍໄວ້ວ່າຈະເອົາສິດຍາພິບານທີ່ມີລັກສນະຢ່າງໃດ.

ພວກເຂົາພາກັນອະທິຖານ, ພິຈາຣະນາເບິ່ງໃບຊີວະປະວັດ, ອະທິຖານ, ທົບທວນໄປມາໃນຄໍາແນະນໍາ, ອະທິຖານ, ໃນທີ່ສຸດກໍມາເຖິງຈຸດສໍາພາດ, ອະທິຖານ ແລ້ວກໍໃຫ້ຜູ້ສມັກ ມາເທສນາໃນຄຣິສຕະຈັກໃຫ້ສະມາຊິກຟັງລອງເບິ່ງ

ພໍເຖິງເວລາ ສິດຍາພິບານທີ່ສະມັກ ກໍກ້າວຂຶ້ນຮ້ານທັມມາດ, "ໃນເວລາຕໍ່ໄປນີ້ ທ່ານແລະຂ້າພະເຈົ້າຈະໄດ້ພາກັນຮ່ວມເດີນທາງໄປສູ່ຈຸດຫມາຍທີ່ພວກເຮົາທັງຫລາຍບໍ່ຮູ້".

**ເກີນກວ່າຈຳນວນທີ່ຄາດໝາຍ** (2:41)
ຄຳເທສນາດີໆ ສາມາດປ່ຽນແປງຄົນຫລາຍຄົນໃຫ້ມາເປັນຄຣິສຕຽນ, ຄຣິສຕຽນດີໆ ສາມາດປ່ຽນແປງກາຍເປັນຜູ້ນຳໄດ້ດີ. ຄຳເທສນາຂອງເປໂຕ ໃນວັນນີ້ກໍເປັນຄຳເທສນາທີ່ມີປະສິດທິຜົນຫລາຍ. ລາວເທສນາໃນວັນເພັນເຕຄອສ, ຫລັງຈາກທີ່ສາວົກຂອງພຣະເຢຊູໄດ້ຊົງເຈີມດ້ວຍພຣະວິນຍານບໍຣິສຸດ, ເພື່ອໃຫ້ສືບຕໍ່ໃນການປ່າວປະກາດ. ຫລາຍກວ່າພັນຄົນຕ້ອນຮັບຄຳເທສນາຂອງເປໂຕໃນເວລານັ້ນ. ພວກເຂົາຕອບຮັບຄຳເທສນາຂອງເປໂຕ ຫລືຕອບຮັບຂ່າວປະເສີດຂອງພຣະເຢຊູຄຣິດ.

ເມື່ອມາພິຈາຣະນາໃນພຣະຄັມພີທີ່ອ່ານຜ່ານມາ ພວກເຮົາຈະເຫັນການຈະເຣີນເຕີບໃຫຍ່ຂອງຄຣິສຕະຈັກ. ຂໍ້ 41 ກ່າວວ່າມີເຖິງສາມພັນຄົນທີ່ຮັບເອົາຄຳເທສນາຂອງພຣະເຢຊູ ແລະພວກເຂົາກໍໄດ້ພາກັນຮັບບັບຕິສະມາ, ແລະກໍກາຍມາເປັນຜູ້ຕິດຕາມພຣະເຢຊູ. ຖ້າຈະເວົ້າເຖິງສ່ວນຕົວຂອງແຕ່ລະບຸກຄົນແລ້ວ ແມ່ນມາຈາກຄົນລະທິດລະທາງ ມາຈາກແຕ່ລະຊົນຊາດແລະການເວົ້າກໍແມ່ນຄົນລະພາສາ ແຕ່ວ່າການຕ້ອນຮັບເອົາພຣະເຢຊູກໍແມ່ນການສະແດງອອກເຖິງການເຕີບໃຫຍ່ຂອງຄຣິສຕະຈັກ. (ກິຈການ 2:5-11)

ໃນຕອນທ້າຍນີ້ (ກຈ. 2:47) ໄດ້ສລູບວ່າ "ພຣະເຈົ້າໄດ້ຊົງເພີ້ມສະມາຊິກໃຫ້ພວກເຂົາແຕ່ລະວັນໆໄປ" ໂດຍການນຳຂອງພຣະວິນຍານບໍຣິສຸດ ພວກເຂົາຈຶ່ງໄດ້ພາກັນຮ້ອນຮົນໃນການອະທິຖານ, ພວກເຂົາພາກັນຢຳເກງພຣະເຈົ້າ, ພວກເຂົາພ້ອມໜ້າພ້ອມຕາຢູ່ບ່ອນດຽວແລະປະຕິບັດຕາມພຣະທັມຂອງພຣະເຈົ້າ.

ຍ້ອນຫຍັງຄຣິສຕຽນຈຶ່ງເພີ້ມຈຳນວນຂຶ້ນຢ່າງວ່ອງໄວ? ເພາະຄຣິສຕຽນເຫລົ່ານັ້ນມີພຣະວິນຍານບໍຣິສຸດຊົງນຳພາ, ການດຳເນີນຊີວິດຂອງພວກເຂົາຈຶ່ງເປັນຕົວຢ່າງໃຫ້ແກ່ຄົນທັງຫລາຍ.

**ການເປັນຄຣິສຕະຈັກ** (2:42-47)
ທຸກວັນນີ້ພວກເຮົາໃຊ້ຄຳວ່າ "ຄຣິສຕະຈັກ" ແມ່ນເພື່ອທີ່ຈະອະທິບາຍເຖິງຄົນທີ່ເຊື່ອທັງຫລາຍ. ພວກເຮົາຍັງເວົ້າໄດ້ອີກວ່າພວກທີ່ມີບັບຕິສະມາດຽວກັນ ບໍ່ວ່າຈະຢູ່ພາກສ່ວນໃດຂອງໂລກກໍຕາມ. ເມື່ອກ່າວເຖິງຄຣິສຕະຈັກພວກເຮົາຈະຄິດເຖິງຄຳວ່າຄອບຄົວດຽວກັນ, ມໍຣະດົກອັນດຽວກັນ, ຄວາມສັມພັນດຽວກັນ, ຄຳສອນດຽວກັນ, ປະສົບການແບບດຽວກັນ ແລະຕໍ່ໆໄປ........

ຢ່າງໃດກໍຕາມ ກ່ອນພໍ່ແມ່ຂອງພວກເຮົາ, ກ່ອນພໍ່ຕູ້ແມ່ຕູ້ຂອງພວກເຮົາ, ແລະກ່ອນພໍ່ແມ່ຂອງພວກເພິ່ນອີກ ກ່ອນນິກາຍຫລືຣະບຽບການສິດສອນອື່ນໆອີກ, ຄຣິສຕະຈັກແມ່ນຫຍັງ? ຄຣິສຕະຈັກເລີ້ມມາຢ່າງໃດ? ແມ່ນຫຍັງຄືສ່ວນປະກອບຂອງຄຣິສຕະຈັກ?

ພຣະທັມກິຈການໄດ້ບອກພວກເຮົາເຖິງການສະເດັດຂຶ້ນສູ່ສວັນຂອງພຣະເຢຊູ, ພວກທີ່ມີຄວາມເຊື່ອທັງຫລາຍໄດ້ມາຮວມກັນເພື່ອເລືອກຄົນທີ່ຈະມາແທນຢູດາ, ພຣະວິນຍານບໍຣິສຸດເປັນຜູ້ນຳພາສາວົກຂອງພຣະເຢຊູໃນວັນນັ້ນໃຫ້ພວກເຂົາມີພະລັງມີອຳນາດໃນການກໍ່ຕັ້ງສ້າງຄຣິສຕະຈັກ. ພຣະທັມກິຈການໄດ້ບອກເຖິງການນຳພາແລະໜ້າທີ່ຂອງຄຣິສຕະຈັກໃນສມັຍທຳອິດ.

ຄຳວ່າຄຣິສຕຽນອາດຈະມີມາດົນນານແລ້ວ ແຕ່ຄົນຄຣິສຕຽນທີ່ຍອມຖວາຍຕົວຢ່າງແທ້ຈິງແທ້ນັ້ນແມ່ນຍາກຫລາຍທີ່ຈະພົບ. ໃນສມັຍນີ້ ກໍຍັງຫາຄຣິສຕຽນທີ່ຖວາຍຕົວຢ່າງແທ້ຈິງນັ້ນຍາກຢູ່ , ເພາະຄຣິສຕຽນ ບໍ່ຍອມອະທິຖານ, ບໍ່ຍອມຖວາຍຕົວ, ບໍ່ຍອມຕິດຕາມຄຳສອນແລະບໍ່ຍອມຮ່ວມໃຈກັນ.

ຄຣິສຕຽນສມັຍເລີ້ມແຣກເຊື່ອຟັງພວກສາວົກ, ເຊື່ອຟັງຜູ້ນຳ (ເປໂຕ) ແລະຮ່ວມໃຈກັນຫັກເຂົ້າຈີ່ແລະໄຫວ້ວອນ. ຄຳວ່າຖວາຍຕົວ ເປັນຄຳເວົ້າງ່າຍ ແຕ່ຍາກໃນການປະຕິບັດ (2:42) ພວກເຂົາຢູ່ຮ່ວມກັນແລະຫລາຍສິ່ງຫລາຍຢ່າງກໍເປັນຂອງກາງ ເພື່ອຊ່ວຍເຫລືອຊຶ່ງກັນແລະກັນ. (2:43-44) ພວກເຂົາມີຄວາມສັດຊື່ຕໍ່ກັນ ແລະສັຣເສີນພຣະເຈົ້າໃຫ້ຄົນທັງຫລາຍເຫັນ. ເມື່ອເປັນດັ່ງນັ້ນປະຊາຊົນກໍເພິ່ງພໍໃຈ ເຮັດໃຫ້ຄົນເຂົ້າມາຮັບເອົາຄວາມລອດພົ້ນແຕ່ລະວັນໆໄປ. (2:45-47)

ການສິດສອນຂອງພວກສາວົກກໍເປັນຫນ້າເຊື່ອຖື ເພາະພວກເຂົາເນັ້ນຫນັກໃສ່ອົງພຣະເຢຊູໂດຍສະເພາະ. ພວກສິດເກົ່າກໍຮັກສິດໃຫມ່ ຮ່ວມກັນກິນເຂົ້າ ສັງສັນສາມັກຄີທຸກວັນ. ພວກເຂົາສຶກສາວ່າຈະປະຕິບັດຕາມຄຳສັ່ງສອນຂອງພຣະເຢຊູຢ່າງໃດ ຖອດຖອນບົດຮຽນຊຶ່ງກັນແລະກັນ. ດັ່ງນັ້ນຈຶ່ງເຫັນໄດ້ວ່າ ພວກເຂົາປະຕິບັດຕາມທີ່ພຣະເຢຊູສັ່ງໄວ້ໃນຄາບເຂົ້າຄາບສຸດທ້າຍກັບພຣະເຢຊູວ່າ **"ໃຫ້ພວກເຈົ້າຮັກກັນແລະກັນ."** (ໂຢຮັນ15:17; 13:35)

ບໍ່ພຽງທໍ່ນັ້ນພວກເຂົາຍັງໄດ້ພາກັນເຮັດພິທີລະນຶກເຖິງພຣະອົງ ຊຶ່ງພວກເຮົາພາກັນເອີ້ນວ່າ "ພິທີສິນລະນຶກ" ຫລື "ສິນມະຫາສນິດ" ການທຳພິທີນີ້ອາດຈະມີການນະມັສການໄປນຳ. ການນະມັສການພຣະເຈົ້າ ຊາວຍິວໄດ້ພາກັນຖືວ່າເປັນສິ່ງທັມະດາບໍ່ແມ່ນແຕ່ຊົ່ວໂມງນຶ່ງຫລືສອງຊົ່ວໂມງເທົ່ານັ້ນ ພວກເຂົາເຈົ້າຖືເປັນຊີວິດປະຈຳວັນ ແລະກໍເປັນລະບົບຂອງຊີວິດໄປເລີຍ. ຄຣິສຕຽນທຸກວັນນີ້ ພວກເຮົາຄວນຈະຮຽນເອົາແບບຢ່າງຂອງຄຣິສຕຽນເຫລົ່ານີ້ ແລະເນັ້ນຫນັກໃສ່ອົງພຣະເຢຊູ.

**<u>ຄຣິສຕະຈັກສມັຍທຳອິດ ແລະ ສມັຍນີ້</u>** (2:47)

ຕາມການເປີດເຜີຍການຄົ້ນຄວ້າ ຄຣິສຕະຈັກທຸກວັນນີ້ໃນທົ່ວສະຫະຣັດອະເມຣິກາ ສ່ວນຫລາຍແມ່ນບໍ່ໄດ້ເນັ້ນຫນັກກ່ຽວກັບພຣະວິນຍານບໍຣິສຸດ, ພວກເຂົາເນັ້ນຫນັກໃສ່ຕົວອາຄານ ແລະການສຳເຮັດດ້ານການນຳພາເທົ່ານັ້ນ. ຫລາຍໂບດມັກເອົາເຣື່ອງພຣະວິນຍານໄວ້ຕາມທີຫລັງ, ເອົາລະບົບຄອມພິວເຕີ ຫລືເອົາລະບົບສຽງ ຫລືເອົາວັດຖຸສິ່ງຂອງເປັນຈຸດເດັ່ນ.

ຖ້າໂບດຫາກຕ້ອງການທີ່ຈະເປັນໂບດຂອງພຣະເຢຊູຢ່າງແທ້ຈິງ ໂບດຈຳເປັນຕ້ອງ:

- ຮຽນເຣື່ອງລາວຂອງພຣະເຢຊູ-ສຶກສາຊີວິດຂອງພຣະເຢຊູຢ່າງແທ້ຈິງ ໂດຍສະເພາະຢ່າງຍິ່ງແມ່ນຮຽນພຣະຄຳຂອງພຣະອົງ
- ຮັກຊຶ່ງກັນແລະກັນ-ເສີມຂຍາຍຄວາມສັມພັນ, ສັດຊື່ຕໍ່ກັນແລະກັນ, ອ່ອນນ້ອມຖ່ອມຕົວດ້ວຍຄວາມເຊື່ອ
- ນະມັສການພຣະເຈົ້າຢ່າງສມ່ຳສເມີ-ເນັ້ນໃສ່ການສິດສອນເຣື່ອງຂອງພຣະເຢຊູ, ອະທິຖານ
- ຮວມຜູ້ທີ່ມີຄວາມເຊື່ອໃຫມ່ເຂົ້ານຳດ້ວຍ-ເບິ່ງແຍງຢ້ຽມຢາມ, ໃຫ້ການຊ່ວຍເຫລືອ ຕາມຄວາມສາມາດ.

ຖ້າຄຣິສຕະຈັກຫາກປະຕິບັດຕາມສິ່ງສຳຄັນຕ່າງໆເຫລົ່ານີ້ໄດ້ແລ້ວ, ສັງຄົມທັງຫລາຍກໍຈະສາມາດເຫັນຊີວິດຂອງຄຣິສຕຽນ ຫລັງຈາກນັ້ນຄວາມອັສຈັນ, ພລັງແລະອຳນາດກໍຈະເກີດຂຶ້ນໃນຄຣິສຕະຈັກ.

ຄອບຄົວຊຶ່ງເປັນສະມາຊິກຂອງໂບດ ລູກຊາຍອາຍຸສິບເກົ້າປີຖືກສົ່ງໄປສົງຄາມອີຣັກ ປະມານສາມອາທິດກໍຖືກເສັຽຊີວິດ. ທຸກໆຄອບຄົວທີ່ຢູ່ໃນໂບດກໍພາກັນມາຢ້ຽມຖາມຂ່າວ ໃຫ້ຄວາມຊ່ວຍເຫລືອຕາມທີ່ທຸກຄົນຫາມາໄດ້ ແລະກໍຫນູນຈິດໃຈ ໃຫ້ຄວາມອົບອຸ່ນແກ່ຄອບຄົວຢ່າງບໍ່ມີທີ່ຕິໄດ້. ຄວາມປຸ້ມລຸມສາມັກຄີນີ້ເຮັດໃຫ້ຫລາຍໆຄົນມີຄວາມຕ້ອງການແລະຢາກສມັກເຂົ້າເປັນສະມາຊິກ.

ໂບດທີ່ມີຄຸນລັກສະນະເໝືອນພຣະເຢຊູ ຕິດຕາມຕົວຢ່າງຂອງຄຣິຕະຈັກຄັ້ງທຳອິດ ຈະມີປະສິດທິພາບຫລາຍ. ຖ້າຜູ້ຕິດຕາມພຣະເຢຊູຫາກມີຄວາມຢ້ານຢຳນັບຖື ສິ່ງອັສຈັນກໍຈະເກີດຂຶ້ນ.

ຄຳວ່າ "ຢ້ານຢຳນັບຖື" ແມ່ນຄຳເວົ້າທີ່ຜ່ານຄວາມສົງສັຍມາໝົດແລ້ວຈຶ່ງຢ້ານຢຳນັບຖື-ພຣະຄຸນຈະຢູ່ທີ່ນັ້ນ, ຄວາມເມດຕາກາຣຸນາຈະຢູ່ທີ່ນັ້ນ, ຄວາມຮັກທັງໝົດຈະຢູ່ທີ່ນັ້ນ, ຄວາມຊອບທັມຈະຢູ່ທີ່ນັ້ນ ທຸກສິ່ງທຸກຢ່າງຈະອອກມາຈາກພຣະຫັດຂອງພຣະເຈົ້າ.

ເຮົາຈະເສີມຂຍາຍໂບດໄດ້ ກໍຕໍ່ເມື່ອເຮົາພາກັນອະທິຖານ, ມອບກາຍຖວາຍຕົວ, ເບິ່ງນິມິດໝາຍໂດຍອີງໃສ່ພຣະເຈົ້າ. ຖ້າຫ້ອງຮຽນຂອງພວກເຮົາຫາກ ອະທິຖານແລ້ວ ທາງໂບດອະທິຖານ ການນະມັສການເຮັດໃຫ້ເປັນຊີວິດຈິດໃຈແລ້ວທຸກສິ່ງຈະມາຈາກເບື້ອງເທິງ.

## <u>ຄຳຖາມ</u>

1. ແມ່ນຫຍັງແດ່ເປັນທີ່ມັດໃຈຄົນທັງຫລາຍໃຫ້ຕິດຢູ່ໃນໂບດ? ໃຫ້ເລືອກເອົາ 5 ຢ່າງ:
   ກ. ຄຳເທສນາ
   ຂ. ການນະມັສການ
   ຄ. ການສິດສອນ
   ງ. ດົນຕຣີ
   ຈ. ການເປີດກວ້າງຕໍ່ຜູ້ມາໃໝ່
   ສ. ຄວາມຢ້ານຢຳນັບຖື
   ຊ. ອ້ອນວອນອະທິຖານ
   ຍ. ຮັກຊຶ່ງກັນແລະກັນ

ຂ. ເມື່ອມີຄົນຖາມເລື້ອງໂບດ ຮູບພາບອັນໃດໂຜ່ຂຶ້ນມາໃນສມອງຂອງທ່ານກ່ອນໝູ່? ເຮົາຈະຊ່ວຍຄົນນອກໂບດໃຫ້ເຂົ້າໃຈໂບດຄືແນວໃດ? ຈຶ່ງເຂົ້າໃຈວ່າໂບດບໍ່ແມ່ນຕຶກອາຄານທີ່ພວກເຮົາໃຊ້ມາຮວມກັນເທົ່ານັ້ນ

3. ທ່ານມີປະສົບການຢ່າງໃດ ໃນການທີ່ມາຢູ່ໃນສັງຄົມຂອງຄຣິສຕຽນແລ້ວ?

4. ທ່ານມີການຖວາຍຕົວຢ່າງໃດ ໃນຄຣິສຕະຈັກຂອງທ່ານ?
   ✓ ຮຽນຈາກພຣະຄຣິດບໍ່?
   ✓ ຮັກຊຶ່ງກັນແລະກັນບໍ່?
   ✓ ການນະມັສການບໍ່?
   ✓ ການນຳພາຄົນໃໝ່ມາບໍ່?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 4
# ຕຽມປະກາດວິທີໃໝ່

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 6:1-7
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ກິຈການ 6:1-7
**ຈຸດສຳຄັນຂອງບົດຮຽນນີ້:** ປະສິດທິພາບຂອງໂບດແມ່ນມີຄວາມສາມາດຊ່ອຍຄົນໄດ້
**ຄຳຖາມເພື່ອການສຳຣວດ:** ເຮົາຄ້າງຄາກັບວິທີການປະກາດແບບເກົ່າແກ່.
**ຈຸດປະສົງຂອງບົດຮຽນນີ້:** ສຶກສາເບິ່ງວິທີການໂບດເຣື່ອງເລີ່ມສ້າງວິການໃໝ່ໃນການປະກາດ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູຍຊ່ອຍເຫລືອຜູ້ອື່ນດ້ານຮ່າງກາຍ, ຈິນວິນຍານ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.

## ບົດນຳ

ວິທີການປະກາດແບບໃໝ່ໄດ້ເກີດຂຶ້ນໃນເວລາເປໂຕແລະໂຢຮັນໄດ້ປົວຄົນງ່ອຍຜູ້ນຶ່ງທີ່ປະຕູງາມໃນຂະນະທີ່ສາວົກທັງສອງກຳລັງມຸ້ງໜ້າໄປໄຫວ້ວອນທີ່ພຣະວິຫານ (ກິຈການ 3). ດ້ວຍເຫດການນີ້ຄົນທັງຫລາຍຈຶ່ງເຫັນຄວາມສຳຄັນຂອງຄຣິສຕະຈັກຂອງພຣະເຈົ້າເມື່ອສາມາດຊ່ອຍຄົນທີ່ບໍ່ເຊື່ອທາງດ້ານຮ່າງກາຍ ແລະດ້ວຍການນີ້ຄົນທັງຫລາຍຈະກາຍມາເປັນຜູ້ເຊື່ອພຣະເຈົ້າໃນໂອກາດຕໍ່ໄປ.

**ວຽກງານຊ່ອຍເຫລືອ** ( 6:1 )
ສິ່ງແຣກທີ່ພວກສາວົກໄດ້ປະເຊີນບັນຫາແມ່ນເຣື່ອງຄົນໃນໂບດທະວີຂຶ້ນດ້ວຍຊົນຊາດຕ່າງໆ ເຊັ່ນພວກທີ່ປາກພາສາກຣິກ ແລະປາກພາສາເຮັບເຣີ, ພວກຢິວທີ່ເກີດໃນດິນແດນຟີລິສຕິນປາກພາສາຂອງຕົນຄືພາສາເຮັບເຣີ ບໍ່ຄ່ອຍລົງລອຍກັບພວກກຣີກທີ່ເກີດໃນບ້ານເມືອງຂອງຢິວແລ້ວເວົ້າພາສາຢິວ. ພວກນາງໝ້າຍກຣີກບໍ່ຄ່ອຍໄດ້ຮັບຄວາມຊ່ອຍເຫລືອ ຈາກໂບດເທົ່າໃດ, ຕາມປົກກະຕິໂບດໃນສມັຍນັ້ນໄດ້ຮັບໂຮມອາຫານການກິນຈາກຜູ້ມີໃຈເມຕານາໄວ້ໂບດເພື່ອຄົນທຸກຍາກຂາດເຂີນພ້ອມທັງພວກນາງໝ້າຍຈະໄດ້ຮັບການເບິ່ງແຍງຈາກໂບດ. ພວກນາງໝ້າຍຊາວກຣີກໄດ້ຈົ່ມຟ້ອງຮ້ອງມາຍັງສາວົກສິບສອງຄົນໃຫ້ຊາບໃນເຣື່ອງນີ້. *"ໃນຄາວເມື່ອຈຳນວນພວກສິດກຳລັງທະວີຫລາຍຂຶ້ນພວກທີ່ປາກພາສາກຣີກໄດ້ຈົ່ມຕໍ່ພວກທີ່ປາກພາສາເຮັບເຣີວ່າ ໃນການແຈກທານທຸກໆວັນນັ້ນ ເຂົາເວັ້ນບໍ່ໄດ້ແຈກໃຫ້ພວກແມ່ໝ້າຍ ຊາວກຣີກ"* (ຂໍ້ 1). ໂບດກຳລັງຈະເຣີ່ມຜູ້ຄົນເຂົ້າມາຮັບເຊື່ອກໍທະວີຂຶ້ນ ພ້ອມກັນນັ້ນບັນຫາກໍເພີ້ມຂຶ້ນເຊັ່ນດຽວກັນຊຶ່ງມັນເປັນຂອງທັມມະດາ ເມື່ອໂບດຈະເຣີນບັນຫາເລັກນ້ອຍກໍຈະຕາມມາບັນຫາຂອງໂບດດັ່ງກ່າວ

ແມ່ນບັນຫາເຣື່ອງເຊື້ອຊາດ ແລະສັນຊາດມີການລຳອຽງແບ່ງແຍກໃນການແຈກຢາຍອາຫານການກິນບໍ່ສເມີກັນຫລື ອາດຈະເວົ້າໄດ້ວ່າໂບດໃຫຍ່ເກີນໄປຈົນພວກສາວົກເບິ່ງບໍ່ທົ່ວເຖີງ. ເຮົາເຫັນໂບດໃຫຍ່ໆຫລາຍໂບດທີ່ຢູ່ອ້ອມຂ້າງເຮົາ ແລ້ວເຮົາກໍພູມໃຈດ້ວຍ ເຫັນແຕ່ທາງນອກ ແຕ່ເຮົາບໍ່ຮູ້ວ່າເພິ່ນມີບັນຫາຫລາຍປານໃດ? ແລະເພິ່ນແກ້ໄຂກັນແນວໃດ? ໃນພຣະທັມຕອນນີ້ເຮົາເຫັນພວກສາວົກແກ້ໄຂບັນຫາ ຄືພວກເພິ່ນແຕ່ງຕັ້ງຜູ້ຮັບຜິດຊອບຫລືຊອກຫາອາສາສມັກເພີ້ມ ອີກເພື່ອເປັນຜູ້ຮັບຜິດຊອບຊ່ອຍພວກສາວົກ ສ່ວນພວກສາວົກມີໜ້າທີ່ສຳຄັນເຊັ່ນ ເຂົ້າເຝົ້າພຣະເຈົ້າແລະຈັດຕຽມການ ເທສນາແລະສັ່ງສອນພຣະທັມພຣະເຈົ້າ, ດັ່ງນັ້ນສາວົກຈຶ່ງໃຫ້ມີການຈັດຕັ້ງກັມມະການໂບດຂຶ້ນ. ບົດຮຽນອັນດີສຳ ລັບເຮົາຄື; ໂບດຂອງເຮົາຄວນຮຽນເອົາແບບຢ່າງຂອງພວກສາວົກທີ່ຈັດຕັ້ງກັມການໂບດເພື່ອຮັບຜິດຊອບໃນການ ງານຕ່າງໆໃນໂບດ.

<u>**ສຶກສາແລະແກ້ໄຂ**</u> (6:2-4 )

*ຝ່າຍພວກສາວົກສິບສອງຄົນຈຶ່ງເອີ້ນບັນດາພວກສິດໃຫ້ປະຊຸມກັນແລ້ວກ່າວວ່າ ຊຶ່ງພວກເຮົາຈະປະພຣະທັມຂອງ ພຣະເຈົ້າໄປ ເພື່ອໄປຮັບໃຊ້ການກິນການດື່ມກໍບໍ່ສົມຄວນ ເຫດສັນນັ້ນພີ່ນ້ອງທັງຫລາຍເອີຍ, ຈົ່ງຊອກຫາເຈັດຄົນໃນ ຖ້າມກາງພວກທ່ານທີ່ມີຊື່ສຽງດີ ຜູ້ເຕັມໄປດ້ວຍພຣະວິນຍານບໍຣິສຸດແລະສະຕິປັນຍາ ເຮົາຈະຕັ້ງໃຫ້ເຂົາດູແລການນີ້"* (ຂໍ້ 2-3). ໃນຂະນະທີ່ພວກສາວົກພາກັນເອົາໃຈໃສ່ເຣື່ອງຂອງຈິດວິນຍານຄືການປະກາດພຣະທັມເປັນການສຳຄັນ ແລະຍັງບໍ່ເປັນການຈຳເປັນເຣື່ອງຂອງເນື້ອໜັງຮ່າງກາຍ, ເພາະມັນເປັນຂອງທັມມະດາສຳລັບຜູ້ທີ່ຢູ່ຝ່າຍຈິດວິນຍານ ບໍ່ຄ່ອຍສົນໃຈເຣື່ອງຝ່າຍເນື້ອໜັງ, ເຖີງຢ່າງໃດກໍຕາມ ຕາບໃດທີ່ເຮົາຍັງຢູ່ໃນໂລກນີ້ ເຮົາບໍ່ສາມາດຫລີກລ້ຽງບັນຫາ ຕ່າງໆໄດ້ໂດຍງ່າຍ. ດັ່ງນັ້ນສາວົກສິບສອງຄົນໄດ້ສະແດງຄວາມເປັນຜູ້ນຳຝ່າຍຈິດວິນຍານ ທີ່ປະກອບດ້ວຍສະຕິປັນ ຍາແລະຄວາມກ້າຫານ. ສັ່ງໃຫ້ມີການປະຊຸມບັນດາລູກສິດທັງໝົດ ແລະໃຫ້ເລືອກເອົາເຈັດຄົນໃນຈຳນວນລູກສິດໃຫ້ ມາຮັບຕຳແໜ່ງສິງເຄາະ ຫລືເປັນຜູ້ແຈກຢາຍເຂົ້າປາອາຫານຕາງໜ້າພວກສາວົກ. ຄົນທີ່ຈະຖືກເລືອກຈະຕ້ອງມີຄຸນ ສົມບັດຢູ່ສາມປະການຄື;

1. ເປັນຄົນມີຊື່ສຽງດີ ແປວ່າເປັນຄົນທີ່ຜູ້ອື່ນນັບຖື,ເປັນຄົນສັດຊື່, ວາງຕົວຕາມຖານະໂດຍບໍ່ຖືຕົວ, ພ້ອມທັງ ກິຣິຍາວາຈາສຸພາບອ້ອນນ້ອມ.
2. ເປັນຜູ້ທີ່ເຕັມໄປດ້ວຍພຣະວິນຍານບໍຣິສຸດ ແປວ່າເປັນຄົນເອົາໃຈໃສ່ໃນການໄຫວ້ວອນ, ອ່ານພຣະທັມ ແລະປະຕິບັດຕາມພຣະທັມນັ້ນ.
3. ເປັນຄົນມີສະຕິປັນຍາ ແປວ່າຮູ້ຈັກພິຈາຣະນາວຽກງານຕ່າງ ແລະສາມາດແກ້ໄຂບັນຫາໃນເຣື່ອງການ ຜິດຖຽງກັນຫລືບໍ່ເຂົ້າໃຈກັນ.

ຫາກຜູ້ໃດມີຄຸນສົມບັດສາມປະການນີ້ ພວກສາວົກກໍຈະແຕ່ງຕັ້ງເຂົາໃຫ້ເປັນກັມມະການເຣື່ອງການແຈກຢາຍອາຫານ ໃຫ້ທົ່ວເຖີງກັນເພື່ອຄົນໃນໂບດຈະຢູ່ດ້ວຍກັນຢ່າງສັນຕິສຸກ ໂດຍບໍ່ມີຄຳເວົ້ານ້ອຍໃຫຍ່ໃສ່ກັນອີກ. ທັງນີ້ກໍເພາະວ່າຄົນ ໃນໂບດຂອງເຮົາທຸກຄົນເປັນເປົ້າສາຍຕາຂອງຜູ້ບໍ່ເຊື່ອ ດັ່ງນັ້ນຄວາມຖືກຕ້ອງປອງດອງຮັກແພງຊ່ອຍເຫລືອກັນໃນ ໂບດສາມາດຊັກຈູງຈິດໃຈຜູ້ບໍ່ເຊື່ອເຂົ້າມາເຊື່ອພຣະເຈົ້າກໍເປັນໄດ້. ບົດຮຽນສຳລັບຜູ້ນຳແມ່ນ; ສແດງຄວາມເປັນຜູ້ ນຳຝ່າຍວິນຍານເມື່ອມີເຫດການຫລືບັນຫາເກີດຂຶ້ນ. ບົດຮຽນສຳລັບສະມາຊິກທົ່ວໄປແມ່ນການຢູ່ດ້ວຍກັນຢ່າງສັນຕິ ສຸກ ພ້ອມທັງຊ່ອຍເຫລືອເບິ່ງແຍງຜ່ອນໜັກຜ່ອນເບົາຊຶ່ງກັນແລະກັນ ເພາະທ່ານທັງຫລາຍເປັນຕົວອັກສອນຂອງພຣະ ເຈົ້າໃຫ້ຄົນທີ່ບໍ່ເຊື່ອໄດ້ອ່ານແຕ່ລະວັນ.

*"ສ່ວນພວກສາວົກກໍຈະເອົາໃຈໃສ່ໃນການອ້ອນວອນ ແລະການສັ່ງສອນພຣະທັມ "* (ຂໍ້ 4). ການອ້ອນວອນເປັນໜ້າທີ່ ສຳຄັນຂອງພວກສາວົກຫລືຜູ້ນຳ, ເທສນາສັ່ງສອນເປັນງານໃຫຍ່ແລະສຳຄັນທີ່ສຸດທີ່ພຣະເຈົ້າມອບໝາຍໃຫ້ສາວົກ ແລະພວກຜູ້ນຳພາກັນເອົາໃຈໃສ່ໃນການເທສນາສັ່ງສອນພຣະທັມຂອງອົງພຣະຜູ້ເປັນເຈົ້າ ແລະຄອຍເຝົ້າຣະວັງອ້ອນ ວອນຢູ່ບໍ່ຂາດດ້ວຍວ່າໃນຂະນະທີ່ລາວເຂົ້າເຝົ້າອ້ອນວອນຢູ່ນັ້ນພຣະເຈົ້າຈະຊົງເວົ້າກັບລາວ ແລະຈະບອກລາວໃຫ້ໄປ

ເວົ້າກັບປະຊາຊົນຂອງພຣະອົງ. ດ້ວຍເຫດນີ້ຜູ້ນຳຄຣິສຕະຈັກຄວນຖືໜັກໃນສອງເຣື່ອງນີ້ຢ່າງເຄັ່ງຄັດ. ສ່ວນງານອື່ນໆນັ້ນສົມຄວນສົດສອນມອບໝາຍໃຫ້ພວກສິດມີໜ້າທີ່ຮັບຜິດຊອບຮັບໃຊ້ພຣະເຈົ້ານຳກັນ.

<u>**ນຳພາໂບດໂດຍວິທີໃໝ່**</u> (6:5-7)

ພຣະຄັມພີບໍ່ໄດ້ບອກວ່າວິທີເລືອກໂດຍການປ່ອນບັດຫລືການຍົກມືດັ່ງທີ່ເຮົາເຮັດທຸກວັນນີ້ ແຕ່ເຮົາແນ່ໃຈວ່າພວກສາວົກໄດ້ພາເຂົາອ້ອນວອນກ່ອນຈະເລືອກເອົາເຈັດຄົນມາເປັນກັມມະການປະຕິບັດງານຝ່າຍນີ້. ໃນຈຳນວນພວກທີ່ຖືກຄັດ ເລືອກເຈັດຄົນນີ້ເຮົາຈະເຫັນ ຊື່ຂອງຊະເຕຟາໂນອອກໜ້າກ່ອນຊື່ຜູ້ອື່ນເພາະວ່າໃນສມັຍເພິ່ນມັກບັນທຶກຜູ້ສຳຄັນກ່ອນຜູ້ອື່ນໆ ພຣະຄັມພີບົ່ງບອກວ່າຊະເຕຟາໂນເອງເປັນຄົນທີ່ເຕັມໄປດ້ວຍພຣະວິນຍານບໍຣິສຸດ. "*ຄົນທັງໝົດໄດ້ມີຄວາມເຫັນຊອບກັບຄຳສເນີນີ້ ຈຶ່ງເລືອກເອົາຊະເຕຟາໂນ ຜູ້ເຕັມໄປດ້ວຍຄວາມເຊື່ອແລະພຣະວິນຍານບໍຣິສຸດກັບຟີລິບ, ໂປໂຄໂຣ, ນີກາໂນ, ຕີໂມນ, ປາເມນາ, ແລະນີໂກລາໂອ*" (ຂໍ້ 5). ອີກປະການນຶ່ງຊື່ຂອງຊະເຕຟາໂນແລະ ຟີລິບຈະມີບັນທຶກໃນພຣະທັມກິຈການອີກ, ສ່ວນພວກຫ້າຄົນນັ້ນເຮົາຈະບໍ່ໄດ້ຍິນຊື່ພວກເພິ່ນເທົ່າໃດ. ສາສນາສາດຜູ້ນຶ່ງໃຫ້ຄຳເຫັນວ່າ ຄົນທັງເຈັດຄົນນີ້ເປັນຄົນກຣີກທັງໝົດ ແຕ່ຮູ້ຈັກສັງຄົມແລະຮັກແພງກັບຄົນກຣີກແລະຄົນຢິວເທົ່າທຽມກັນ ຈຶ່ງເປັນການຖືກຕ້ອງທີ່ຈະເລືອກຄົນທັງເຈັດນີ້ມາເປັນກັມມະການຝ່າຍສົງເຄາະ ແລະຍັງເປັນພື້ນທາງໃນການປະກາດໃຫ້ຄົນກຣີກອີກເພາະທັງເຈັດເປັນຄົນກຣີກ.

ຫລັງຈາກການເລືອກທັງເຈັດຄົນແລ້ວກໍເຂົ້າພົບກັບສາວົກສິບສອງຄົນແລະສາວົກຈຶ່ງອ້ອນວອນແລະວາງມືໃສ່ເຂົາທັງເຈັດ. "*ຄົນທັງເຈັດນີ້ເຂົາໄດ້ນຳມາສເນີຕໍ່ພວກອັຄສາວົກ ເມື່ອພວກສາວົກໄດ້ອ້ອນວອນແລ້ວກໍວາງມືໃສ່ເຂົາ*" (ຂໍ້ 6). ການວາງມືຢ່າງເປັນທາງການນີ້ມີຄວາມໝາຍວ່າໄດ້ມອບໝາຍໜ້າທີ່ໃນພຣະນາມແຫ່ງພຣະເຢຊູຄຣິດເພື່ອງານນີ້ຈະສຳເຣັດຜົນໂດຍການຊົງນຳຂອງພຣະວິນຍານບໍຣິສຸດ. ອີກປະການນຶ່ງພວກຜູ້ນຳທີ່ຄັດເລືອກມານີ້ເປັນຜູ້ນຳຝ່າຍຈິດວິນຍານ ແຕ່ຕອນນີ້ກຳລັງຈະໃຫ້ເປັນຜູ້ແຈກຢາຍອາຫານຝ່າຍຮ່າງກາຍ ດັ່ງນັ້ນຈຶ່ງເປັນການຈຳເປັນທີ່ຈະວາງມືໃສ່ທັງເຈັດຄົນ. ຫລັງຈາກທັງເຈັດໄດ້ຮັບໜ້າທີ່ມອບໝາຍແລະເຮັດໜ້າທີ່ຂອງຕົນ ພວກສາວົກກໍຕັ້ງໃຈໃນການອ້ອນວອນແລະເທສນາຢ່າງເຄັ່ງຄັດ ໂບດຫລັງນີ້ຈຶ່ງຈະເຣີນຂຶ້ນທຸກວັນ ເພາະວ່າທຸກຄົນເຮັດວຽກງານຊ່ອຍກັນ. "*ພຣະທັມຂອງພຣະເຈົ້າໄດ້ຈະເຣີນຂຶ້ນ ແລະຈຳນວນພວກສິດກໍທະວີຫລາຍຂຶ້ນໃນກຸງເຢຣູຊາເລັມແລະມີພວກປະໂຣຫິດຈຳນວນຫລາຍໄດ້ຍອມເຊື່ອໃນພຣະສາສນາເໝືອນກັນ*" (ຂໍ້ 7).

<u>**ຄຳຖາມ:**</u>

1. ອີງຕາມຂນາດຄວາມນ້ອຍຫລືໃຫຍ່ຂອງໂບດທ່ານໆເຫັນບັນຫາຫຍັງແດ່?

2. ໃນຖານະທີ່ເຮົາເປັນຜູ້ນຳ ເຮົາສົມຄວນຈະແກ້ໄຂແນວໃດ?

3. ພວກສາວົກແກ້ໄຂປັນຫາແນວໃດ?

4. ເປັນຫຍັງຈຶ່ງເລືອກເຈັດຄົນລ້ວນແຕ່ເປັນຄົນກຣີກ?

5. ຄຸນສົມບັດຂອງທັງເຈັດມີຫຍັງແດ່?

6. ຫລັງຈາກຖືກເລືອກແລ້ວພວກສາວົກເຮັດແນວໃດ? ມີຄວາມໝາຍອັນໃດ?

7. ເປັນຫຍັງພວກສາວົກບໍ່ເຮັດວຽກງານນີ້ເອງ?

8. ທ່ານຈະຊ່ອຍອາຈານຂອງທ່ານຮັບໃຊ້ພະແນກໃດໃນໂບດຂອງທ່ານ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

## ບົດຮຽນທີ 5
## ປະກາດດ້ວຍການເສັຍສະລະ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 8:1-8, 14-17, 26-36
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ກິຈການ 8:1-40
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງໃຊ້ໄປຮອດຊົນຊາດທີ່ປະຕິເສດເຮົາ.
**ຄຳຖາມເພື່ອການສຳຣວດ:** ພຣະເຈົ້າໄດ້ຊົງເອີ້ນເຮົາໄປຫາຜູ້ໃດແດ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຶກສາເບິ່ງວ່າພຣະເຈົ້າໄດ້ຊົງໃຊ້ພວກຜູ້ປະກາດໄປໃສແດ່?

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຊ່ອຍເຫລືອຜູ້ອື່ນດ້ານຮ່າງກາຍ, ຈິນວິນຍານ
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.

### ບົດນຳ

ບົດຮຽນອາທິດແລ້ວໄດ້ເວົ້າເຖິງສາວົກສິບສອງຄົນເລືອກລູກສິດເຈັດຄົນໃຫ້ເປັນຜູ້ຮັບຜິດຊອບພະແນກປະຊາສົງເຄາະ ໃນຈຳນວນພວກສິດທີ່ເລືອກມານັ້ນແມ່ນຊະເຕຟາໂນເປັນຄົນທຳອິດທີ່ຖືກເລືອກ ຕໍ່ມາກໍແມ່ນທ່ານຟີລິບ ພວກສິດເຫລົ່ານີ້ພາກັນປະຕິບັດງານໄດ້ດີຕລອດມາຈົນເຂົາຂ້າຊະເຕຟາໂນໂດຍການຄວ່າງກ້ອນຫີນໃສ່ຈົນຕາຍຄາທີ່, ເຣື່ອງນີ້ໂຊໂລກໍເຫັນພ້ອມກັບເຂົາແລະໂຊໂລເອງຍັງຊອກຫາວິທີທາງກົດຂີ່ຂົ່ມເຫັງຄຣິສຕຽນຈົນພວກສິດແຕກກະຈັດກະຈາຍກັນໄປທົ່ວແຂວງຢູດາຍແລະແຂວງຊາມາເຣັຽ ແຕ່ທຸກບ່ອນທີ່ເຂົາໄປເຂົາກໍໄດ້ປະກາດເຣື່ອງຂອງພຣະເຢຊູຄຣິດ.

**ຂ່າວປະເສີດຂຍາຍຕົວ** (8:4-8 )

ເຮົາສັງເກດເຫັນວ່າຂ່າວປະເສີດຄັ້ງແຣກນັ້ນເກີດຂຶ້ນທີ່ກຸງເຢຣູຊາເລັມ ຕໍ່ມາພວກທີ່ນະມັສການພຣະເຈົ້າກໍຖືກຂົ່ມເຫັງບໍ່ໃຫ້ເຊື່ອຖືແລະປະກາດເຣື່ອງຂອງພຣະເຢຊູຄຣິດ ດັ່ງນັ້ນພວກສິດທັງຫລາຍທີ່ຖືກບີບບັງຄັບຈຶ່ງພາກັນອອກຈາກກຸງເຢຣູຊາເລັມໄປຕັ້ງຖິ່ນຖານບ້ານຊ່ອງຕາມບ້ານເມືອງຕ່າງໆ ຊຶ່ງບ່ອນທີ່ເຂົາຄິດວ່າປອດພັຍຈາກການກົດຂີ່ຂົ່ມເຫັງ. *"ຝ່າຍສິດທັງຫລາຍທີ່ແຕກກະຈັດກະຈາຍໄປນັ້ນ ກໍພາກັນໄປປະກາດຂ່າວປະເສີດແຫ່ງພຣະທັມຕາມບ່ອນຕ່າງໆ"* (ຂໍ້ 4). ຄຳວ່າສິດໃນຕອນນີ້ແມ່ນພວກສິດຂອງສາວົກສິບສອງຄົນທີ່ໄດ້ອົບຮົມແລ້ວໃນກຸງເຢຣູຊາເລັມ, ສິດຜູ້ນຶ່ງຮອງຈາກຊະເຕຟາໂນມີຊື່ວ່າຟີລິບກໍອອກໄປຍັງແຂວງຊາມາເຣັຽ, ພວກສິດເຫລົ່ານີ້ອາດຈະໝາຍເຖິງພວກເຖົ້າແກ່, ຫລືກັມມະການໂບດ ແລະຜູ້ຮັບໃຊ້ອື່ນໆທີ່ຮ່ວມຮັບໃຊ້ໃນໂບດ. *"ສ່ວນຟີລິບໄດ້ລົງໄປຍັງເມືອງນຶ່ງໃນແຂວງຊາມາເຣັຽປະກາດເຣື່ອງພຣະຄຣິດໃຫ້ໄທເມືອງນັ້ນຟັງ"* (ຂໍ້ 5). ອີງຕາມຄຳເຫັນຂອງສາສນາສາດເວົ້າວ່າຂ່າວປະເສີດຂຍາຍອອກ ໄປບໍ່ແມ່ນຍ້ອນພວກສາວົກ ແຕ່ແມ່ນຍ້ອນພວກສິດທັງຫລາຍທີ່ເວລານີ້ຮ້ອງກັນວ່າ ພວກເຖົ້າແກ່, ພວກກັມມະ

ການແລະຜູ້ຮັບໃຊ້ໃນໂບດ, ທ່ານຟີລິບບໍ່ແມ່ນສາວົກຫລືສິດຍາພິບານຫລືອາຈານແຕ່ແມ່ນເຖົ້າແກ່ຜູ້ປົກຄອງ ຫລືຫົວໜ້າພະແນກແລະກັມມະການອື່ນໆໃນໂບດ ດັ່ງທີ່ຮູ້ກັນແລ້ວວ່າຟີລິບຖືກເລືອກມາເປັນຜູ້ຮັບໃຊ້ພະແນກປະຊາສົງເຄາະໃນກິຈການ 6:5 ມາເຖິງບັດນີ້ການຮັບ ໃຊ້ຂອງທ່ານຖືກບີບບັງຄັບຂົ່ມເຫັງຂອງຈັກກະພັດໂຣມ. ໃນເຣື່ອງການຖືກຂົ່ມເຫັງນີ້ລາງຄົນມີຄໍາເຫັນວ່າເປັນແຜນການຂອງພຣະເຈົ້າໃຫ້ຂ່າວປະເສີດແຜ່ກວ້າງອອກໄປ ດັ່ງນັ້ນເມື່ອຟີລິບອອກໄປຍັງຊາມາເຣັຽເພິ່ນກໍປະກາດຂ່າວປະເສີດຢູ່ທີ່ນັ້ນ *"ເມື່ອຄົນທັງຫລາຍໄດ້ຍິນແລະໄດ້ເຫັນໝາຍສໍາຄັນທີ່ທ່ານກໍາລັງເຮັດຢູ່ ເຂົາກໍພ້ອມໃຈກັນຟັງຖ້ອຍຄໍາປະກາດຂອງທ່ານ "* (ຂໍ້ 6).

ຟີລິບໄດ້ເຮັດການອັຈຈັນຫລາຍຢ່າງໃຫ້ໄທເມືອງຊາມາເຣັຽໄດ້ເຫັນເຊັ່ນ; ຂັບໄລ່ຜີທີ່ສິງໃນຮ່າງຂອງປະຊາຊົນ, ປິ່ນປົວຄົນງ່ອຍ, ປິ່ນປົວຄົນຂາເສັ້ງດີເປັນປົກກະຕິ ເມື່ອປະຊາຊົນເຫັນສິ່ງເຫລົ່ານີ້ຈຶ່ງພາກັນເຊື່ອຟັງຄໍາເທສນາຂອງເພິ່ນ *"ດ້ວຍວ່າຜີຖ່ອຍຮ້າຍທີ່ສິງຢູ່ໃນຫລາຍຄົນໄດ້ຮ້ອງດ້ວຍສຽງດັງແລະອອກມາຈາກຄົນເຫລົ່ານັ້ນ ຄົນທີ່ເປັນງ່ອຍແລະຄົນຂາເສັ້ງຫລາຍຄົນກໍໄດ້ດີເປັນປົກກະຕິ ຈຶ່ງບັງເກີດມີຄວາມຍິນດີອັນໃຫຍ່ໃນເມືອງນັ້ນ "* (ຂໍ້ 7-8). ການອັສຈັນທີ່ພວກສາວົກແລະພວກຜູ້ຮັບໃຊ້ພຣະເຈົ້າໄດ້ສໍາແດງແມ່ນຣິດອໍານາດຊຶ່ງມາຈາກພຣະເຈົ້າ ທີ່ສໍາແດງໃຫ້ເຫັນເພື່ອໃຫ້ຜູ້ເຫັນການອັສຈັນນີ້ຈະໄດ້ວາງໃຈເຊື່ອໂດຍທັນທີ. ຟີລິບໄດ້ເຮັດການອັສຈັນແນວນີ້ຈຶ່ງມີຫລາຍຄົນຮັບເຊື່ອແລະຕິດຕາມພຣະເຢຊູຄຣິດຍ້ອນເຂົາເຫັນການອັສຈັນແບບນີ້, ສ່ວນການອັສະຈັນອື່ນໆທີ່ເກີດຂຶ້ນແບບຊ້າໆ ນັ້ນບໍ່ຄ່ອຍເຂົ້າໃຈເບິ່ງເທົ່າໃດ ເຊັ່ນການອັສຈັນທີ່ເກີດຂຶ້ນໃນພວກເຮົາທັງຫລາຍ ຄືເມື່ອກ່ອນເຮົາບໍ່ເປັນຄົນແນວນີ້ ແຕ່ເມື່ອມາຮູ້ກັບພຣະເຈົ້າແລ້ວຊີວິດຂອງເຮົາກໍປ່ຽນຈາກໜ້າມືເປັນຫລັງມື ແມ່ນການອັສຈັນທີ່ເກີດຊ້າ ໆ.

**<u>ພຣະເຈົ້າຊົງນໍາ</u>** (8:14-17 )

ຟີລິບໄດ້ມາຕັ້ງຖິ່ນຖານຢູ່ຊາມາເຣັຽແລະປະກາດຂ່າວປະເສີດໂດຍບໍ່ຮູ້ວ່າຈະມີຫຍັງເກີດຂຶ້ນ ແຕ່ທ່ານກໍເອົາໃຈໃສ່ໃນການປະກາດພຣະທັມຂອງພຣະເຈົ້າໃນເຂດຊາມາເຣັຽ ຈົນເຮັດໃຫ້ຄົນຊົ່ວຮ້າຍທີ່ທໍາມາຫາກິນໂດຍໃຊ້ເວດມົນຄາຖາບໍ່ພໍໃຈກັບຟີລິບ ເມື່ອຄົນທັງຫລາຍຫາຍດີພະຍາດແລະຜີຊົ່ວຮ້າຍບໍ່ສາມາດມາຄວບຄຸມຜູ້ທີ່ເຊື່ອໃນພຣະເຈົ້າອີກຕໍ່ໄປ. *"ເມື່ອພວກອັຄສາວົກທີ່ຢູ່ໃນກຸງເຢຣູຊາເລັມໄດ້ຍິນຂ່າວວ່າໄທຊາມາເຣັຽໄດ້ຮັບເອົາພຣະທັມພຣະເຈົ້າແລ້ວ ຈຶ່ງໄດ້ໃຊ້ເປໂຕແລະໂຢຮັນໄປຫາເຂົາ ທ່ານທັງສອງໄດ້ລົງໄປອ້ອນວອນສໍາລັບເຂົາ ເພື່ອໃຫ້ເຂົາຮັບພຣະວິນຍານ ບໍຣິສຸດ "* (ຂໍ້ 14-15). ໃນພຣະທັມຕອນນີ້ ເຮົາໄດ້ເຫັນແຈ້ງແລ້ວວ່າຂ່າວປະເສີດແຜ່ກວ້າງອອກໄປຍ້ອນພວກສິດທັງຫລາຍ ສ່ວນພວກສາອັຄວົກແມ່ນຢູ່ໃນກຸງເຢຣູຊາເລັມຄືສູນກາງໃຫຍ່ຂອງຂ່າວປະເສີດ, ອັຄສາວົກເປໂຕແລະໂຢຮັນຖືກສົ່ງຈາກສູນກາງຂ່າວປະເສີດທີ່ກຸງເຢຣູຊາເລັມໃຫ້ລົງໄປຢ້ຽມຢາມພວກທີ່ຮັບເຊື່ອນໍາຟີລິບເພື່ອຈະໄດ້ ອ້ອນວອນໃຫ້ພວກເຂົາເພື່ອເຂົາທັງຫລາຍຈະໄດ້ຮັບພຣະວິນຍານບໍຣິສຸດ.

*"ເພາະພຣະວິນຍານບໍຣິສຸດຍັງບໍ່ທັນລົງມາຍັງເຂົາຈັກຄົນ ມີແຕ່ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະເຢຊູເທົ່ານັ້ນ "* (ຂໍ້ 16). ເຣື່ອງນີ້ເປັນເຣື່ອງທີ່ຖືກຖຽງກັນມາຕັ້ງແຕ່ໃດມາແລ້ວ ດ້ວຍວ່າຄຣິສຕຽນມີຄວາມເຊື່ອວ່າວັນທີ່ຮັບເຊື່ອຫລືວັນຮັບບັບຕິສະມາແມ່ນວັນທີ່ໄດ້ຮັບພຣະວິນຍານບໍຣິສຸດໂລດ, ເມື່ອເປັນເຊັ່ນນັ້ນເຮົາລອງມາສຶກສາພຣະຄັມພີສາມຂໍ້ຄື;

1. *"ຂະນະທີ່ເປໂຕກໍາລັງກ່າວດັ່ງນີ້ຢູ່ພຣະວິນຍານບໍຣິສຸດໄດ້ສະເດັດລົງມາເທິງຄົນທັງປວງທີ່ກໍາລັງຟັງພຣະທັມນັ້ນ "* (ກິຈການ 10:44). ແປວ່າໃນຂະນະທີ່ເປໂຕກໍາລັງເທສນາພຣະທັມຢູ່ນັ້ນພວກຜູ້ຟັງພຣະທັມກໍໄດ້ຮັບພຣະວິນຍານບໍຣິສຸດ ແລະຕໍ່ມາເປໂຕຈຶ່ງສັ່ງເຂົາໃຫ້ບັບຕິສະມາໃນນາມຂອງພຣະເຢຊູຄຣິດ. (ກິຈການ 10:48).
2. *"ຈຶ່ງຖາມເຂົາວ່າ ເມື່ອທ່ານທັງຫລາຍເຊື່ອນັ້ນ ພວກທ່ານໄດ້ຮັບພຣະວິນຍານບໍຣິສຸດຫລືບໍ່? ເຂົາຕອບວ່າບໍ່ (ກິຈການ* 19: 2). ໂປໂລຈຶ່ງຊັກຖາມຕໍ່ໄປໄດ້ຄວາມວ່າ ເຂົາຮັບບັບຕິສະມາຈາກໂຢຮັນ ແຕ່ໃຫ້ບອກ

ວາງໃຈເຊື່ອພຣະເຢຊູຜູ້ທີ່ມາຕາມຫລັງ ແຕ່ບໍ່ທັນໄດ້ຮັບພຣະວິນຍານບໍຣິສຸດ ຈົນກວ່າໂປໂລວາງມືໃສ່ເຂົາ(ກິຈການ 19:6).

3. *"ເມື່ອໄດ້ຍິນພຣະທັມອັນສັດຈິງຄືຂ່າວປະເສີດເຣື່ອງຂອງຄວາມພົ້ນຂອງພວກທ່ານແລະໄດ້ວາງໃຈໃນພຣະອົງກໍຊົງໄດ້ປະທັບຕຣາໝາຍໄວ້ດ້ວຍພຣະວິນຍານບໍຣິສຸດທີ່ຊົງສັນຍາໄວ້ນັ້ນ"* (ເອເຟໂຊ 1: 13).

ຫາກສລູບຈາກຂໍ້ 1 ແລະ 2 ເຮົາເຫັນວ່າຄົນທີ່ຮັບບັບຕິສະມາໃນນາມພຣະເຢຊູອາດຈະເປັນເພາະວ່າເຂົາເຫັນໝາຍສຳຄັນຫລືເຫັນການອັສຈັນເທົ່ານັ້ນ ແຕ່ເມື່ອບໍ່ວາງໃຈເຊື່ອໃນພຣະເຢຊູຈຶ່ງບໍ່ທັນໄດ້ຮັບພຣະວິນຍານບໍຣິສຸດ, ສັງເກດເບິ່ງຂໍ້ 3 ຈະເຫັນວ່າ ເມື່ອເຂົາໄດ້ຍິນພຣະທັມອັນສັດຈິງຄືຂ່າວປະເສີດເຣື່ອງຄວາມພົ້ນ ໝາຍຄວາມວ່າໄດ້ຍິນແລະເຂົ້າໃຈແລ້ວຮັບເຊື່ອ ພຣະວິນຍານກໍໄດ້ປະທັບຕຣາໝາຍໄວ້ແລ້ວ ຫລືໄດ້ຮັບພຣະວິນຍານແລ້ວນັ້ນເອງ. ເຣື່ອງທີ່ເຮົາຖົກຖຽງກັນກໍ ຈົບລົງວ່າ ຜູ້ຮັບເຊື່ອນັ້ນແມ່ນຮັບເຊື່ອດ້ວຍຄວາມເຂົ້າໃຈໃນພຣະວິນຍານບໍຣິສຸດຫລືບໍ່? ດ້ວຍເຫດນີ້ເຮົາຈຶ່ງມັກໄດ້ຍິນຄຣິສຕຽນເຮົາເວົ້າວ່າ ເປັນຄຣິສຕຽນມາຕັ້ງຫລາຍປີຫາກໍໄດ້ຮັບພຣະວິນຍານອັນນີ້, ແຕ່ບໍ່ໄດ້ໝາຍຄວາມວ່າມີຄົນວາງມືໃສ່ແລ້ວໄດ້ຮັບພຣະວິນຍານບໍຣິສຸດ ດ້ວຍວ່າບໍ່ມີຜູ້ໃດວາງມືໃສ່ຄົນແລ້ວໄດ້ຮັບພຣະວິນຍານບໍຣິສຸດເຣື່ອງນີ້ຂຶ້ນ ກັບຜູ້ເຊື່ອແລະພຣະວິນຍານບໍຣິສຸດເອງ. *"ເປໂຕກັບໂຢຮັນໄດ້ວາງມືໃສ່ເຂົາ ແລ້ວເຂົາກໍໄດ້ຮັບພຣະວິນຍານ ບໍຣິສຸດ"* (ຂໍ້ 17).

<u>**ຊົງຈັດຕຽມ**</u> (8: 26-37 )

ຫລັງຈາກເປໂຕກັບໂຢຮັນກັບໄປຍັງກຸງເຢຣູຊາເລັມແລ້ວພຣະວິນຍານຂອງພຣະເຈົ້າຊົງນຳຟີລິບອອກຈາກຊາມາເຣັຽໄປທາງທິດໃຕ້ຂອງກຸງເຢຣູຊາເລັມ *"ເທວະດາຕົນນຶ່ງຂອງອົງພຣະຜູ້ເປັນເຈົ້າໄດ້ສັ່ງຟີລິບວ່າ ຈົ່ງລຸກຂຶ້ນໄປທາງທິດໃຕ້ຕາມທາງລົງຈາກກຸງເຢຣູຊາເລັມໄປເຖິງເມືອງຄາສາ"* (ຂໍ້ 26). ຟີລິບເປັນຄົນບັງເກີດໃຫມ່ຢູ່ພາກກາງຄືກຸງເຢຣູຊາເລັມ, ຕໍ່ມາກໍແຕກໜີໄປຢູ່ທາງເໜືອຍ້ອນການຖືກຂົ່ມເຫງເຣື່ອງການເຊື່ອຖືຈຶ່ງໄປຕັ້ງຖິ່ນຖານບ້ານຊ່ອງແລະປະກາດພຣະທັມຢູ່ພາກເໜືອຈົນມີຊື່ສຽງດີໄປຮອດກຸງເຢຣູຊາເລັມສູນກາງການປະກາດຂ່າວປະເສີດ ຈົນສູນກາງໄດ້ສົ່ງເປໂຕກັບໂຢຮັນຂຶ້ນໄປຊ່ອຍອ້ອນວອນໃຫ້ພວກຮັບເຊື່ອໃຫມ່, ເມື່ອພວກຮັບເຊື່ອໃຫມ່ໄດ້ຮັບພຣະວິນຍານບໍຣິສຸດແລ້ວພຣະເຈົ້າສົ່ງຟີລິບໄປພາກໃຕ້. ຄຳວ່າໃຕ້ນີ້ແມ່ນໃຕ້ກຸງເຢຣູຊາເລັມບ່ອນທີ່ເພິ່ນບໍ່ເຄີຍໄປຈັກເທື່ອ, ຟີລິບເປັນຂ້າທາດທີ່ເຊື່ອຟັງເຈົ້ານາຍຂອງຕົນ ເພິ່ນຈຶ່ງໄປດ້ວຍຄວາມຍິນດີ.

*"ທ່ານຈຶ່ງລຸກຂຶ້ນເດີນທາງໄປ ແລະເບິ່ງແມ, ມີໄທເອທີໂອເປັຽ ຄົນນຶ່ງເປັນເທືອຍ, ເປັນຂ້າຣາຊການຊັ້ນສູງຂອງກັນດາເກ ຄືພຣະຣາຊີນີຂອງຊາວເອທີໂອເປັຽ, ເປັນນາຍຄັງຊັບທັງໝົດຂອງພຣະຣາຊີນີນັ້ນ ເພິ່ນໄດ້ມາກຸງເຢຣູຊາເລັມເພື່ອນະມັສການ"* (ຂໍ້ 27). ເອທີໂອເປັຽຕັ້ງຢູ່ໃນອັຟຣິກາ ແລະຍັງຢູ່ໃຕ້ປະເທດເອຢິບ, ຂ້າຣາຊການຊັ້ນສູງຜູ້ນີ້ເດີນທາງ ມານະມັສການພຣະເຈົ້າຈາກທາງໄກ ແຕ່ເພິ່ນບໍ່ຮູ້ແລະບໍ່ເຂົ້າໃຈຂ່າວປະເສີດຫຍັງເລີຍ ເພິ່ນມີພຣະທັມເອຊາຢາຢູ່ໃນມື *"ຂນະທີ່ນັ່ງຣົດກຳລັງກັບເມືອທ່ານໄດ້ອ່ານໜັງສືຂອງເອຊາຢາຜູ້ປະກາດພຣະທັມຢູ່ ຝ່າຍພຣະວິນຍານຊົງສັ່ງຟີລິບວ່າຈົ່ງເຂົ້າຕິດຣົດນີ້ໄປ ຟີລິບຈຶ່ງແລ່ນເຂົ້າໄປແລະໄດ້ຍິນທ່ານກຳລັງອ່ານໜັງສືເອຊາຢາຜູ້ປະກາດພຣະທັມຈຶ່ງຖາມວ່າ ສິ່ງທ່ານອ່ານນັ້ນທ່ານເຂົ້າໃຈຫລື"* (ຂໍ້ 28-30). ຊາຍເອທີໂອເປັຽຜູ້ນີ້ບໍ່ຕ້ອງບອກເຮົາກໍຮູ້ວ່າເພິ່ນເປັນຄົນຮັ່ງມີ ແຖມຍັງເປັນເຈົ້ານາຍຜູ້ນຶ່ງອີກ, ພຣະວິນຍານຂອງພຣະເຈົ້າຊົງນຳຟີລິບໃຫ້ຕິດຣົດນີ້ໄປ. ເມື່ອຟີລິບໄດ້ຍິນເພິ່ນອ່ານໜັງສືເອຊາຢາຈຶ່ງຖາມວ່າ *ສິ່ງທ່ານອ່ານນັ້ນທ່ານເຂົ້າໃຈຫລື* ທ່ານຂ້າຣາຊການຕອບ ຟີລິບວ່າ *"ຖ້າບໍ່ມີຜູ້ໃດແນະນຳໃຫ້ຈະເຂົ້າໃຈໄດ້ຢ່າງໃດ"* (ຂໍ້ 31ກ). ແປວ່າຖ້າຫາກບໍ່ມີຜູ້ແປຈະບໍ່ເຂົ້າໃຈ.

ຫລາຍເທື່ອເຮົາໄດ້ອ່ານແຕ່ບໍ່ເຂົ້າໃຈຄ້າຍຄືຂ້າຣາຊການຜູ້ນີ້ ແຕ່ເພິ່ນຕອບດ້ວຍຄວາມຖ່ອມໃຈ *ຖ້າບໍ່ມີຜູ້ໃດແນະນຳໃຫ້ຈະເຂົ້າໃຈໄດ້ຢ່າງໃດ* ເປັນບົດຮຽນທີ່ດີແກ່ພວກເຮົາວ່າ ຫາກບໍ່ຮູ້ຈົ່ງວ່າບໍ່ຮູ້, ຫາກບໍ່ເຂົ້າໃຈຈົ່ງຕອບວ່າບໍ່ເຂົ້າໃຈ ແຕ່

ສິ່ງທີ່ເຂົ້າໃຈແລ້ວກໍບໍ່ຄວນຖາມພາໂລໃຫ້ເພິ່ນຄາ. ເມື່ອຂ້າຣາຊການຜູ້ນີ້ຕອບດ້ວຍຄວາມຖ່ອມໃຈແລ້ວ ເພິ່ນກໍເຊີນຟີລິບຂຶ້ນຂີ່ຣົດໄປນຳ *"ແລ້ວທ່ານຈຶ່ງເຊີນຟີລິບຂຶ້ນນັ່ງຣົດນຳ"* (ຂໍ້ 31ຂ). ຫາກເຮົາຄຶດຄືນຫລັງວ່າຟີລິບຮັບໃຊ້ຢູ່ພາກເໜືອເຢຣູຊາເລັມຊຶ່ງລະຍະນີ້ງຈົນມີພວກສິດຫລວງຫລາຍເປັນຜູ້ຊ່ອຍງານຕ່າງ ໆແລ້ວພຣະເຈົ້າກໍໃຊ້ເພິ່ນໄປພາກໃຕ້ຄືເມືອງຄາສາ ໃນຄວາມຄຶດຂອງເຮົາຄຶດວ່າເພິ່ນຈະເອົາພາຫະນະອັນໃດໄປຈຶ່ງຈະເດີນໄກປານນັ້ນ ມາບັດນີ້ເຮົາເຫັນວ່າພຣະເຈົ້າໄດ້ຈັດຣົດມ້າໄວ້ໃຫ້ເພິ່ນແລ້ວ. ເມື່ອຂຶ້ນນັ່ງຣົດແລ້ວຟີລິບກໍອະທິບາຍພຣະທັມທີ່ຂ້າຣາຊການອ່ານຢູ່ນັ້ນໃຫ້ເພິ່ນຟັງຊຶ່ງແມ່ນຕອນນີ້ງຈາກພຣະທັມເອຊາຢາ 53:7-8 ຊຶ່ງກ່າວເຖິງພຣະເຢຊູອາຍພຣະຊົນທີ່ໄມ້ກາງແຂນ. ເມື່ອຂ້າຣາຊການຜູ້ນີ້ເຂົ້າໃຈແລ້ວເພິ່ນຈຶ່ງກ່າວຕໍ່ຟີລິບວ່າ *"ເບິ່ງແມ, ນ້ຳມີຢູ່ທີ່ນີ້ ມີອັນໃດຂັດຂ້ອງບໍ່ໃຫ້ຂ້າພະເຈົ້າຮັບບັບຕິສະມາ ຝ່າຍຟີລິບຈຶ່ງຕອບວ່າ ຖ້າທ່ານເຕັມໃຈເຊື່ອກໍຮັບໄດ້"* (ຂໍ້ 36-37).

<u>ຄຳຖາມ</u>

1. ເປັນຫຍັງຟີລິບຈຶ່ງໄປປະກາດຢູ່ຊາມາເຣັຽ?

2. ການປະກາດຂອງເພິ່ນທີ່ຊາມາເຣັຽເປັນແນວໃດ?

3. ແມ່ນໃຜມາຢາມຟີລິບຈາກເຢຣູຊາເລັມ? ມາເຮັດຫຍັງແດ່?

4. ເປັນຫຍັງຊາວຊາມາເຣັຽບໍ່ໄດ້ຮັບພຣະວິນຍານບໍຣິສຸດຈົນອັຄສາວົກວາງມືໃສ່?

5. ພຣະເຈົ້າເອີ້ນຟີລິບຈາກຊາມາເຣັຽໃຫ້ໄປໃສ?

6. ພຣະເຈົ້າຊົງຈັດຕຽມຫຍັງໃຫ້ຟີລິບ?

7. ພຣະເຈົ້າຊົງໃຊ້ຟີລິບເພາະວ່າເພິ່ນເປັນຂ້າທາດທີ່ເຊື່ອຟັງ, ທ່ານເດຈະເຮັດຄືຟີລິບບໍ່?

*ສຈ. ດຣ. ຄູນພັນ ວົງສຸຣິດທ໌*

# ບົດຮຽນທີ 6
# ຢ່າລືມຜູ້ຕໍ່າຕ້ອຍ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ກິຈການ 9:10-28

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ກິຈການ 9: 1-31

**ຈຸດສໍາຄັນຂອງບົດຮຽນນີ້:** ຄຣິສຕະຈັກທີ່ຕິດຕາມພຣະຄຣິດຈະຕ້ອງຫາທາງໃຫ້ທຸກຄົນສາມາດເຂົ້າຮ່ວມໃນກຸ່ມໄດ້.

**ຄໍາຖາມເພື່ອການສໍາຣວດ:** ຄຣິສຕະຈັກຂອງທ່ານສາມາດຮັບຄົນ "ນອກ" ໄດ້ດີເທົ່າໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວິທີວ່າໂຊໂລຜູ້ເຄີຍຂົ່ມເຫັງຄຣິສຕຽນ ສາມາດເຂົ້າຢູ່ໃນກຸ່ມຜູ້ເຊື່ອໄດ້ຢ່າງໃດ ແລະຊອກວິທີທີ່ຄຣິສຕະຈັກຂອງທ່ານຈະສາມາດໃຫ້ທຸກຄົນສາມາດເຂົ້າຮ່ວມໃນກຸ່ມຂອງທ່ານໄດ້.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆ ຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການຕັດສິນໃຈ.
- ຮັບຮູ້ວ່າທຸກຄົນມີຄຸນຄ່າໃນພຣະລັກສະນະຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຜູ້ມີຄວາມຕ້ອງການດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຮັບໃຊ້.

## ຄໍານໍາ

ບົດຮຽນໃນມື້ນີ້ຈະພິຈາຣະນາເບິ່ງວ່າພວກສິດໃນສມັຍທໍາອິດໃຊ້ວິທີໃດແດ່ເຣື່ອງການຮັບຜູ້ເຊື່ອໃໝ່ໃຫ້ເຂົ້າຮ່ວມເປັນສະມາຊິກ ແລະພວກເຂົາເຈົ້າໄດ້ເຮັດແນວໃດຈຶ່ງສາມາດປ່ຽນສັດຕຣູຜູ້ສໍາຄັນຂອງຄຣິສຕຽນໃຫ້ມາເປັນຜູ້ນໍາຂອງພວກເຂົາ.

**ການຍອມຮັບຄົນອື່ນຈະຕ້ອງມີການສ່ຽງພັຍ** (9: 10-12)

ໂຊໂລແຫ່ງເມືອງຕາໂຊເປັນພັຍສໍາລັບກຸ່ມຄຣິສຕຽນໃນສມັຍທໍາອິດ. ຈາກຄໍາເວົ້າຂອງລາວເອງພວກເຮົາຮູ້ວ່າ ໂຊໂລເປັນຄົນຫ້າວຫັນແລະເຄັ່ງຄັດສາສນາຢູດາຍ (ຟີລິບປອຍ 3:2-6; ຄາລາເຕັຽ 1:13-14). ລາວເກີດໃນຄອບຄົວທີ່ມີຖານະດີ ເປັນຊາວຢິວ ແຕ່ມີສັນຊາດເປັນຄົນໂຣມ. ທ່ານໄດ້ຮັບການສຶກສາຈາກອາຈານທີ່ເດັ່ນດັງທີ່ກຸງເຢຣູຊາເລັມ (ກິຈການ 22:3) ແລະມີຕໍາແໜ່ງເປັນຟາຣີຊາຍ. ໂຊໂລເປັນນຶ່ງໃນຈໍາພວກພຍານທັງຫລາຍຕອນທີ່ຊະເຕຟາ

ໂນຖືກປະຫານ (ກິຈການ 7:58).   ຜູ້ເຊື່ອໄດ້ພາກັນໜີຈາກກຸງເຢຣູຊາເລັມແລະໄດ້ແຕກຢາຍໄປທົ່ວສາຣະທິດເພາະການຂົ່ມເຫງ (ກິຈການ 8:1; 9:1).

ມາເຖິງຕອນນີ້, ໂຊໂລໄດ້ຮັບໜັງສືສັ່ງຈັບຈາກມະຫາປະໂລຫິດເພື່ອຈະເດີນທາງໄປປາບຄຣິສຕຽນທີ່ເມືອງດາມາເຊ. ແຕ່ໃນຣະຫວ່າງການເດີນທາງໃກ້ຈະເຖິງເມືອງດາມາເຊ, ພຣະເຢຊູໄດ້ຊົງປາກົດຕົວຕໍ່ໂຊໂລ. ພຣະຣັສມີຂອງພຣະອົງເປັນເໝືອນແສງຟ້າແມບ ຈຶ່ງເຮັດໃຫ້ໂຊໂລຕາບອດ. ໂຊໂລໄດ້ຍິນພຣະສຸຣະສຽງ ແລະໄດ້ຍອມຮັບພຣະເຢຊູ ແລະພຣະບັນຊາ. ໂຊໂລ ເດີນທາງຕໍ່ໄປເຖິງເມືອງດາມາເຊໂດຍການຊ່ວຍເຫລືອຂອງພວກຜູ້ຕິດຕາມເພາະທ່ານບໍ່ສາມາດເຫັນສິ່ງໃດເລີຍເປັນເວລາສາມວັນ. ເມື່ອໄປເຖິງເມືອງແລ້ວທ່ານກໍໄດ້ລໍຖ້າຢູ່ບ້ານຫລັງນຶ່ງທີ່ຖນົນຊື່.

ໃນຂະນະດຽວກັນພຣະເຢຊູໄດ້ຊົງຈັດຕຽມສິດຜູ້ນຶ່ງຊື່ອານາເນັຽເພື່ອຈະໄປຊ່ວຍ ແລະແນະນຳໂຊໂລເຣື່ອງວຽກງານທີ່ເຂົາຈະຕ້ອງເຮັດ. ອານາເນັຽຮູ້ຊື່ສຽງແລະຄວາມໂຫດຮ້າຍຂອງໂຊໂລ. ແທນທີ່ເຂົາຈະຕ້ອງຫລົບຫລີກຈາກບຸກຄົນດັ່ງກ່າວ ພຣະເຢຊູໄດ້ຊົງໃຊ້ເຂົາໃຫ້ໄປຫາຄາຕະກອນຜູ້ມີຊື່ສຽງ.

ທ່ານຄິດບໍ່ວ່າແມ່ນຫຍັງຄືຜົນເສັຽຫາຍ ຖ້າອານາເນັຽບໍ່ຍອມສ່ຽງພັຍແລະໄປຫາຄົນທີ່ຊື່ໂຊໂລ ແລະໃນບັ້ນປາຍໄດ້ກາຍເປັນອັຄສາວົກໂປໂລ? ຜົນເສັຽກໍຄື: ພວກເຮົາອາດຈະບໍ່ມີພຣະທັມກິຈການ ຫລືອາດຈະບໍ່ມີຈົດໝາຍທັງຫລາຍທີ່ໂປໂລຂຽນເຖິງຄຣິສຕະຈັກຕ່າງໆໃນສມັຍນັ້ນ (ສອງສ່ວນສາມຂອງພຣະສັນຍາໃໝ່ແມ່ນຈົດໝາຍຂອງໂປໂລ).

<u>**ການຍອມຮັບຄົນອື່ນຈະຕ້ອງຮູ້ສັງເກດ**</u> (9:13)

ການຍອມຮັບຄົນອື່ນ ໆບໍ່ໄດ້ໝາຍຄວາມວ່າພວກເຮົາເປັນຄົນເຊື່ອຊ້າ. ພວກເຮົາຍອມສ່ຽງພັຍເພາະເຮົາຮູ້ຈັກສັງເກດ. ພຣະເຢຊູບໍ່ໄດ້ຊົງຕຳນິອານາເນັຽເພາະເຂົາມີຄວາມຣະມັດຣະວັງ. ເນື່ອງຈາກວ່າອານາເນັຽຮູ້ຊື່ສຽງແລະຄວາມໂຫດຮ້າຍຂອງໂຊໂລດີ ເຂົາຈຳຕ້ອງໄດ້ຣະວັງຕົວ. ສະນັ້ນອານາເນັຽຈຶ່ງຍອມສ່ຽງແບບບໍ່ປິດຫູລັບຕາ. ນອກນັ້ນການຍອມຮັບຄົນໃໝ່ເຂົ້າໃນກຸ່ມກໍບໍ່ໄດ້ໝາຍຄວາມວ່າພວກເຮົາຕ້ອງແຕ່ງຕັ້ງເຂົາໃຫ້ເປັນຜູ້ນຳ ຫລືແບ່ງວຽກສຳຄັນໃຫ້ເຮັດ. ພວກເຮົາທຸກຄົນຈະຕ້ອງສະແດງຜົນງານຂອງຕົວເອງກ່ອນຈະຮັບໜ້າທີ່. ໂຊໂລຈາກເມືອງຕາໂຊບໍ່ໄດ້ເປັນອັຄສາວົກໂປໂລໃນທັນທີທັນໃດ. ການກ້າວສູ່ການເປັນຜູ້ນຳຄຣິສຕຽນຂອງທ່ານໄດ້ໃຊ້ເວລາຫລາຍປີ.

ໃນຕອນນຶ່ງ, ໂປໂລເລົ່າໄວ້ວ່າທ່ານໄດ້ອອກຈາກດາມາເຊໄປຢູ່ທີ່ອາລາເບັຽ. ຫລັງຈາກຢູ່ທີ່ນັ້ນສາມປີແລ້ວ, ທ່ານໄດ້ເດີນທາງໄປກຸງເຢຣູຊາເລັມ ແລະໄດ້ພົບອັຄສາວົກເປໂຕເປັນເວລາສອງອາທິດ ແລະໂປໂລຍັງໄດ້ພົບກັບຢາໂກໂບຜູ້ເປັນນ້ອງຄົນລະພໍ່ຂອງພຣະເຢຊູ (ຄາລາເຕັຽ 1:13-24). ຫລັງຈາກນັ້ນໂປໂລໄດ້ກັບໄປບ້ານເກີດທີ່ເມືອງຕາໂຊ ຈົນເຖິງເວລາທີ່ບາຣະນາບາໄດ້ມາພົບແລະນຳໄປຊ່ວຍຮັບໃຊ້ທີ່ເມືອງອັນຕີໂອເຂັຽ (ກິຈການ 11:19-26). ໂປໂລໄດ້ຕິດຕາມບາຣະນາບາໃນການໄປປະກາດຄັ້ງທີນຶ່ງ (13:1-3); ພາຍຫລັງມາໂປໂລກໍໄດ້ກາຍເປັນຜູ້ໃຫ້ຄຳປຶກສາສຳລັບຕີໂມທຽວໃນການບໍຣິຫານຄຣິສຕະຈັກ (1 ຕີໂມທຽວ3:2-6).

<u>**ການຍອມຮັບຄົນອື່ນຈະຕ້ອງມີການເຊື່ອຟັງ**</u> (9:14-17)

ອານາເນັຽຍອມສ່ຽງພັຍເພື່ອໄປພົບໂຊໂລ ບໍ່ແມ່ນເພາະຄວາມຮັກທີ່ມີຕໍ່ຜູ້ຂົ່ມເຫັງຄຣິສຕຽນ ແຕ່ເພາະການຍອມເຊື່ອຟັງສຽງຂອງພຣະຜູ້ເປັນເຈົ້າ. ເມື່ອອານາເນັຽໄດ້ຍິນສຽງຂອງພຣະເຢຊູສັ່ງໃຫ້ໄປຊ່ວຍໂຊໂລ, ລາວບໍ່ມີທາງອື່ນທີ່ຈະເລືອກ ນອກຈາກເຮັດຕາມພຣະບັນຊາ. ການເຊື່ອຟັງຄືສັນຍາລັກຂອງການເປັນສິດ. ການເປັນສິດຂອງພຣະຄຣິດໝາຍເຖິງການຍອມທີ່ຈະຢູ່ຫລືຈະໄປຖ້າພຣະອົງຊົງເອີ້ນ.

ພຣະມະຫາບັນຊາຂອງພຣະຄຣິດສໍາລັບພວກສິດໃນທຸກໆສມັຍແມ່ນການອອກໄປ ແລະສ້າງສາວົກ (ມັດທາຍ 28: 19-20). ພວກເຮົາຈະຕ້ອງຖາມຕົວເອງສເມີວ່າ ພວກເຮົາໄດ້ເຊື່ອຟັງການຊົງເອີ້ນຂອງພຣະອົງຫລືບໍ່? ຫລາຍຄົນທີ່ຢູ່ໂລກນີ້ ແລະໃນອ້ອມຂ້າງພວກເຮົາຍັງບໍ່ເຄີຍໄດ້ຍິນຂ່າວປະເສີດຂອງພຣະເຢຊູຄຣິດ. ພວກເຮົາໄດ້ພະຍາຍາມແນວໃດແດ່ທີ່ຈະປະກາດພຣະທັມກັບພວກເຂົາ?

<u>ການຍອມຮັບຄົນອື່ນຈະຕ້ອງມີການຫນູນໃຈ</u> (9:18-28)
ໃນຕອນນີ້ ສິ່ງນຶ່ງທີ່ໂຊໂລຈາກເມືອງຕາໂຊຕ້ອງການທີ່ສຸດຄືການໜູນໃຈ. ເພື່ອນເດີນທາງຮ່ວມກັນມາຈາກເຢຣູຊາເລັມບໍ່ສາມາດຊ່ວຍທ່ານໄດ້. ມີໃຜແດ່ທີ່ດາມາເຊຈະເຊື່ອໃຈໂຊໂລ? ໂຊໂລພັກຢູ່ບ້ານທີ່ຖນົນຊື່ເປັນເວລາສາມວັນໂດຍບໍ່ສາມາດເບິ່ງເຫັນຫຍັງ. ແຕ່ໃນນິມິດໂຊໂລໄດ້ເຫັນຄົນຊື່ອານາເນັຽທີ່ຈະເປັນຄົນຊ່ວຍໄດ້; ແລະເມື່ອອານາເນັຽໄດ້ມາເຖິງບ້ານທີ່ໂຊໂລຢູ່ ກໍບໍ່ຈໍາເປັນຕ້ອງມີການແນະນໍາຕົວເອງ.

ອານາເນັຽໄດ້ວາງມືໃສ່ໂຊໂລຕາມທີ່ພຣະເຢຊູໄດ້ຊົງສັ່ງ, ແລະໃນທັນໃດນັ້ນໂຊໂລກໍໄດ້ເຫັນຮຸ່ງແລະໄດ້ເຕັມດ້ວຍພຣະວິນຍານບໍຣິສຸດ. ການວາງມືໃສ່ຄົນອາດຈະບໍ່ເປັນເຣື່ອງອັສຈັນ ແຕ່ເປັນສິ່ງສະແດງເຖິງການຍອມຮັບ. ໂຊໂລໄດ້ຮັບກໍາລັງໃຈຈາກການມາຂອງອານາເນັຽ ແລະທ່ານໄດ້ຮັບການບັບຕິສະມາຊຶ່ງສະແດງເຖິງການຮັບເຂົ້າໃນກຸ່ມຂອງຜູ້ທີ່ເຊື່ອໃນເມືອງດາມາເຊ. ໃນຂະນະດຽວກັນ ຄຣິສຕຽນໃນທີ່ອື່ນໆຍັງມີຄວາມສົງສັຍໃນການກັບໃຈຂອງໂຊໂລ.

ບາຣະນາບາເປັນອີກຜູ້ນຶ່ງທີ່ໄດ້ຊ່ວຍໂຊໂລໃຫ້ເປັນທີ່ຮັບຮູ້ຂອງຄຣິສຕຽນທົ່ວໆໄປໂດຍສະເພາະທີ່ເຢຣູຊາເລັມ. ບາຣະນາບາ ເປັນຄົນເລວີຈາກເກາະກຸບໂຣ; ພວກເຮົາໄດ້ເຫັນຄວາມເສັຽສະລະຂອງທ່ານຜູ້ນີ້ໃນກິຈການ 4:36-37. ບາຣະນາບາ ເປັນຜູ້ທີ່ມີພຣະພອນເຣື່ອງການຫນູນໃຈ (ພວກເຮົາຈະໄດ້ເຫັນການຮ່ວມງານລະຫວ່າງບາຣະນາບາແລະໂຊໂລ ໃນບົດຮຽນຕໍ່ໆໄປ).
ການໜູນໃຈເປັນເຣື່ອງສໍາຄັນໃນການຮັບໃຊ້ພຣະເຈົ້າ. ຄຣິສຕຽນມີໜ້າທີ່ໃນການໜູນໃຈຊຶ່ງກັນແລະກັນ (ເຮັບເຣີ 10:25). ຫລາຍກວ່ານັ້ນຄຣິສຕຽນຍັງມີພຣະວິນຍານບໍຣິສຸດເປັນຜູ້ຄອຍໜູນໃຈຢູ່ສເມີ (ໂຢຮັນ 14:16).

ໃນຖານະ ຜູ້ເຊື່ອແລະຜູ້ຕິດຕາມພຣະເຢຊູ, ພວກເຮົາຈະຕ້ອງຊອກຫາວິທີ ທີ່ຈະໃຫ້ຄົນອື່ນໆມີໂອກາດເຂົ້າຮ່ວມຢູ່ໃນຄຣິສຕະຈັກຂອງພວກເຮົາ. ພຣະເຈົ້າກໍາລັງທໍາງານຢູ່ໃນຊີວິດຂອງຄົນທັງຫລາຍ ຊຶ່ງອາດຈະຮ່ວມທັງຜູ້ທີ່ພວກເຮົາຄິດວ່າພວກເຂົາກໍາລັງເປັນສັດຕຣູຂອງຄວາມເຊື່ອ.

<u>ຄໍາຖາມ:</u>
1. ມີຈັກຄົນທີ່ເຂົ້າມາຢູ່ຄຣິສຕະຈັກຂອງທ່ານໃນລະຍະສາມປີທີ່ຜ່ານມາ ຍັງເປັນສະມາຊິກຢູ່ດ້ວຍກັນ?

2. ເວລາທ່ານເປັນຄຣິສຕຽນໃໝ່, ມີໃຜແດ່ທີ່ໜູນໃຈ, ໃຫ້ການປຶກສາ, ແລະຮັບທ່ານເຂົ້າໃນຄຣິສຕະຈັກ?

3. ຄຣິສຕະຈັກຂອງທ່ານຕິດຕາມ ຜູ້ເຊື່ອໃໝ່ແນວໃດແດ່?

4. ຄຣິສຕະຈັກຂອງທ່ານຮັບຜູ້ເຊື່ອໃໝ່ເຂົ້າມາໃນຄຣິສຕະຈັກວິທີໃດ?

*ສາ. ດຣ. ສິດນີ ຄານ*

## ບົດຮຽນທີ 7

## ທຳລາຍກຳແພງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 11: 1-18

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ກິຈການ 10:1--11:18

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕະຈັກເພື່ອການປະກາດຕິດຕາມການນຳພາຂອງພຣະເຈົ້າເວລາພຣະອົງຊົງທ້າທາຍພວກເຂົາໃຫ້ທຳລາຍກຳແພງທີ່ກີດກັ້ນພວກເຂົາເພື່ອຈະໄດ້ມີສ່ວນໃນພັນທະກິດຂອງພຣະເຈົ້າເຣື່ອງການອອກ ໄປຫາທຸກໆຄົນຢ່າງເຕັມສ່ວນ.

**ຄຳຖາມເພື່ອການສຳຣວດ:** ມີສິ່ງໃດແດ່ທີ່ຂັດຂວາງຄຣິສຕະຈັກຂອງທ່ານບໍ່ໃຫ້ໄດ້ເຮັດທຸກຢ່າງທີ່ພຣະເຈົ້າຊົງຕ້ອງການໃຫ້ເຮັດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວ່າມີກຳແພງໃດແດ່ທີ່ພຣະເຈົ້າກຳລັງທ້າທາຍພວກເຮົາໃຫ້ທຳລາຍເສັຍເພື່ອພວກເຮົາຈະໄດ້ມີສ່ວນໃນພັນທະກິດຂອງພຣະອົງເຈົ້າຢ່າງເຕັມສ່ວນ?

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການຕັດສິນໃຈ.
- ຮັບຮູ້ວ່າທຸກຄົນມີຄຸນຄ່າໃນພຣະລັກສະນະຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຜູ້ມີຄວາມຕ້ອງການດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

### ຄຳນຳ

ພຣະເຈົ້າຊົງນຳພາເປໂຕໃຫ້ຂ້າມກຳແພງເຣື່ອງເຊື້ອຊາດແລະວັທນະທັມເພື່ອຈະປະກາດກັບທຸກຄົນ. ພວກເຮົາຈະໄດ້ຮຽນຮູ້ວິທີທີ່ຄຣິສຕະຈັກຈະສາມາດເອົາຊະນະກຳແພງຕ່າງ ໆເພື່ອຈະໄດ້ເປັນຄຣິສຕະຈັກເພື່ອການປະກາດທີ່ແທ້ຈິງ.

ປະສົບການຂອງເປໂຕກັບໂກເນລີໂອທີ່ເມືອງກາຊາເຣັຽເປັນຈຸດສຳຄັນທີ່ສຸດໃນພຣະທັມກິຈການ. ໃນກິຈການ 11: 1-18, ພວກເຮົາໄດ້ເຫັນຄຳສລູບຂອງເປໂຕເຖິງເຫດການທີ່ເກີດຂຶ້ນໃນກິຈການ 10. ມາເຖິງຕອນນີ້ພວກສາວົກຂອງພຣະເຢຊູຄິດວ່າຄົງມີແຕ່ຊົນຊາດຢິວເທົ່ານັ້ນທີ່ຈະໄດ້ຮັບຄວາມພົ້ນ. ພວກເຂົາເຈົ້າຮັກສາຄວາມຄິດນີ້ຢູ່ສເມີ ເຖິງວ່າຈະມີເຫດການອື່ນໆເກີດຂຶ້ນກ່ອນແລ້ວ ເຊັ່ນຟີລິບກັບຊາວຊາມາເຣັຽ ແລະກັບຊາວເອທີໂອເປັຽຜູ້ນຶ່ງໃນກິຈການ 8. ພຣະເຈົ້າຊົງປ່ຽນແປງຄວາມຄິດຂອງເປໂຕກ່ຽວກັບຊາວຕ່າງຊາດ ໂດຍຊົງໃຫ້ທ່ານເຫັນນິມິດໃນຂນະທີ່ກຳລັງອ້ອນວອນຢູ່ຫລັງຄາທີ່ເມືອງຢົບເປ ແລະໃຫ້ມີປະສົບການກັບໂກເນລີໂອທີ່ເມືອງກາຊາເຣັຽ. ເຫດການເຫລົ່ານີ້ເປັນເຣື່ອງ

ສຳຄັນໃນການຕັດສິນຂອງກອງປະຊຸມທີ່ເຢຣູຊາເລັມ (ກິຈການ 15:1-21). ໃນທີ່ສຸດ, ຄຣິສຕະຈັກໃນສມັຍແລກກໍພາກັນປະກາດຄວາມລອດພົ້ນໂດຍຄວາມເຊື່ອໃນອົງພຣະເຢຊູຄຣິດ ກັບຄົນທຸກຊາດ ແລະທຸກພາສາ.

ມີສິ່ງໃດແດ່ທີ່ພວກເຮົາສາມາດຮຽນຈາກປະສົບການຂອງເປໂຕທີ່ຈະຊ່ວຍພວກເຮົາໃຫ້ເຂົ້າໃຈ ແລະເອົາຊະນະກຳແພງທີ່ກີດກັ້ນບໍ່ໃຫ້ພວກເຮົາໄປປະກາດກັບຄົນທຸກໆຄົນໃນສັຕວັດທີ 21 ນີ້?

## ກຳແພງອັນຍິ່ງໃຫຍ່ແມ່ນຢູ່ໃນພວກເຮົາ

ຄຣິສຕະຈັກຫລາຍໆບ່ອນທີ່ບໍ່ເຮັດພັນທະກິດການປະກາດມັກເບິ່ງແຕ່ເຣື່ອງພາຍນອກ. ຫລາຍບ່ອນອ້າງວ່າຂາດເງິນ ແລະບໍ່ສາມາດເຮັດໄດ້. ສິ່ງທີ່ຄວນຄິດກໍຄື ເງິນບໍ່ໄດ້ເປັນອຸປສັກສຳລັບຄຣິສຕະຈັກໃນສມັຍແລກ. ແມ່ນແຕ່ໃນສມັຍນີ້, ຄຣິສຕະຈັກທີ່ກຳລັງຂາດເຂີນ ໄດ້ກາຍເປັນຄຣິສຕະຈັກທີ່ເຮັດພັນທະກິດຫລາຍທີ່ສຸດ.

## ສ່ວນຫລາຍແລ້ວເຣື່ອງພາຍນອກບໍ່ແມ່ນອຸປສັກສຳລັບການເຮັດວຽກ.

ຄຣິສຕະຈັກສມັຍແລກມີອຸປສັກຫລາຍຢ່າງທີ່ກີດກັ້ນພວກເຂົາເຈົ້າໃນການປະກາດກັບຄົນທົ່ວໂລກ. ພວກເຂົາເຈົ້າຖືກຂົ່ມເຫງ. ການເດີນທາງບໍ່ສະດວກ ແລະເຕັມໄປດ້ວຍອັນຕະລາຍ. ພວກເຂົາເຈົ້າບໍ່ມີເງິນ. ແຕ່ສິ່ງເລົ່ານັ້ນບໍ່ແມ່ນອຸປສັກທີ່ແທ້ຈິງສຳລັບການເຊື່ອຟັງພຣະມະຫາບັນຊາ. ອຸປສັກທີ່ຍາກສຳລັບການເອົາຊະນະສຳລັບພວກເຂົາເຈົ້າແມ່ນອຸປສັກທີ່ຢູ່ໃນຕົວຂອງພວກເຂົາເອງ.

## ປະເພນີເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ

ນິມິດແລະປະສົບການຂອງເປໂຕເປັນສິ່ງທ້າທາຍຕໍ່ປະເພນີທີ່ຊາວຢິວຍຶດຖືກັນມານານ. ໃນຖານະຄົນຢິວຜູ້ເຄັ່ງຄັດ, ເປໂຕໄດ້ຮັກສາກົດເຣື່ອງອາຫານທີ່ປູ່ຍ່າຕາຍາຍໄດ້ເຮັດມາ. ການຄົບຄ້າສະມາຄົມຂອງທ່ານກໍແມ່ນຢູ່ໃນກຸ່ມຂອງຊົນຊາດຢິວເທົ່ານັ້ນ. ແຕ່ຄວາມເຊື່ອໃນອົງພຣະຄຣິດໄດ້ທ້າທາຍທ່ານກ່ຽວກັບສິ່ງເຫລົ່ານັ້ນ. ພຣະເຢຊູໄດ້ຊົງກ່າວວ່າອຸປສັກອັນສຳຄັນທີ່ເຮັດໃຫ້ຫລາຍຄົນບໍ່ຍອມເຊື່ອແລະຕິດຕາມພຣະອົງແມ່ນປະເພນີ (ມາຣະໂກ 7:1-8). ໂປໂລໄດ້ສາຣະພາບວ່າການຮັກສາປະເພນີໄດ້ເຮັດໃຫ້ທ່ານກາຍເປັນຜູ້ຂົ່ມເຫັງຄຣິສຕະຈັກຂອງພຣະຄຣິດ (ຄາລາເຕັຽ 1: 13-14).

ປະເພນີມີດີຫລາຍຢ່າງ; ປະເພນີເຮັດໃຫ້ຊີວິດຂອງພວກເຮົາສົມບູນຂຶ້ນ. ໂປໂລສັ່ງໃຫ້ຄຣິສຕຽນທີ່ເທຊະໂລນິກໃຫ້ "... ຈົ່ງຕັ້ງໝັ້ນຄົງຢູ່ແລະຍຶດຖືເອົາຄຳສອນທີ່ສືບມາ..." (ເທຊະໂລນິກສອງ 2:15). ແຕ່ຖ້າພວກເຮົາປ່ອຍໃຫ້ປະເພນີເປັນສິ່ງປິດບັງເຣື່ອງພຣະເຈົ້າກຳລັງໂຜດມະນຸດໃນທຸກທີ່ທຸກແຫ່ງ ປະເພນີນັ້ນກໍໄດ້ກາຍເປັນກຳແພງ ແລະເປັນສິ່ງກີດກັ້ນ. ຫລາຍໆຄົນມັກເວົ້າວ່າ ເຮົາບໍ່ເຄີຍເຮັດແນວນີ້ຈັກເທື່ອ. ສະນັ້ນພວກເຮົາຈະຕ້ອງແກ້ໄຂປະເພນີໃຫ້ຖືກກັບໂລກທີ່ກຳລັງປ່ຽນແປງຢ່າງວ່ອງໄວນີ້.

## ຂາດການອ້ອນວອນເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ

ພຣະເຈົ້າໄດ້ໃຫ້ນິມິດກັບເປໂຕໃນຂະນະທີ່ທ່ານກຳລັງອ້ອນວອນຢູ່ເທິງຫລັງຄາທີ່ເມືອງຢົບປາ. ພວກເຮົາບໍ່ຮູ້ວ່າເປໂຕໄດ້ອ້ອນວອນເປັນເວລານານປານໃດ ແຕ່ທ່ານໄດ້ເລີ່ມໃນເວລາທີ່ກໂມງ ຫລືທ່ຽງ (10:9). ຖ້າເປໂຕບໍ່ໄດ້ອ້ອນວອນທ່ານກໍຄົງບໍ່ໄດ້ເຫັນນິມິດຈາກພຣະເຈົ້າ; ແລະທ່ານກໍຈະບໍ່ໄປທີ່ກາຍຊາເຣັຽ; ແລ້ວຂ່າວປະເສີດກໍຍັງຄ້າງຢູ່ກັບຊົນຊາດຢິວເພາະວັທນະທັມ ແລະປະເພນີຂອງພວກເຂົາເຈົ້າ. ການອ້ອນວອນເປັນກຸນແຈໄຂປະຕູສຳລັບໂອກາດຮັບໃຊ້.

ກິຈການ 10: 1-6 ບອກລາຍລະອຽດກ່ຽວກັບໂກເນລີໂອ. ໂກເນລີໂອເປັນນາຍຮ້ອຍບັງຄັບກອງອີຕາເລັຽ ຊຶ່ງມີທະ

ທານປະມານນຶ່ງຮ້ອຍຄົນ. ທ່ານເປັນຄົນມີກຽດແລະມີອຳນາດ ແລະທ່ານກໍເປັນຄົນທີ່ຢຳເກງພຣະເຈົ້າແລະອ້ອນວອນ ຢູ່ສເມີ (10:2). ເທວະດາຂອງພຣະເຈົ້າໄດ້ປາກົດໃຫ້ທ່ານເຫັນ ແລະສັ່ງໃຫ້ສົ່ງຄົນໄປເອົາເປໂຕທີ່ເມືອງຢົບປາມາ. ຖ້າໂກເນລີໂອບໍ່ໄດ້ອ້ອນວອນ ທ່ານກໍຄົງບໍ່ໄດ້ຮັບຄຳສັ່ງ ແລະທ່ານກໍຈະບໍ່ໄດ້ສົ່ງຄົນໄປນຳເອົາເປໂຕມາບອກທ່ານເຣື່ອງຂ່າວປະເສີດຂອງພຣະເຢຊູຄຣິດ.

ໃນພຣະສັນຍາໃໝ່, ການອ້ອນວອນສຳຄັນສຳລັບການຂ້າມກຳແພງທີ່ກີດກັ້ນລະຫວ່າງຂ່າວປະເສີດແລະຄົນທັງຫລາຍໃນໂລກ. ການອ້ອນວອນນັ້ນແຕກຕ່າງກັບການອ້ອນວອນທີ່ພວກເຮົາເຄີຍອ້ອນວອນເປັນປະຈຳ. ການອ້ອນວອນຂອງພວກເຮົາສ່ວນຫລາຍເນັ້ນເຣື່ອງສ່ວນຕົວ ເຊັ່ນເຣື່ອງສຸຂພາບ, ຄວາມປອດພັຍ, ແລະຄວາມຈະເຣີນກ້າວໜ້າ. ສຳລັບຜູ້ເຊື່ອໃນສມັຍແລກ ການອ້ອນວອນແມ່ນວິທີທີ່ພຣະເຈົ້າຊົງຕິດກັບພວກເຂົາ. ການອ້ອນວອນເພື່ອເຣື່ອງສ່ວນຕົວກໍບໍ່ມີຫຍັງຜິດ ແຕ່ການອ້ອນວອນທີ່ສຳຄັນທີ່ສຸດແມ່ນການອ້ອນວອນເພື່ອໃຫ້ຣາຊອານາຈັກສວັນເກີດຂຶ້ນໃນແຜ່ນດິນໂລກ (ມັດທາຍ 6:10). ໃນຂະນະທີ່ໂປໂລຖືກຄຸມຂັງ ທ່ານບໍ່ໄດ້ຂໍຮ້ອງໃຫ້ຄຣິສຕຽນອ້ອນວອນເພື່ອການປົດປ່ອຍຈາກທີ່ຄຸມຂັງ ແຕ່ທ່ານໄດ້ຂໍໃຫ້ພວກເຂົາເຈົ້າອ້ອນວອນເພື່ອ "ພຣະເຈົ້າຈະໄດ້ຊົງໂຜດໄຂປະຕູໄວ້ສຳລັບພຣະ ທັມ..." (ໂກໂລຊາຍ 4:3).

## ການບໍ່ເຫັນພຣະນິມິດເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ

ຈຸດສຳຄັນໃນເຣື່ອງທີ່ສຶກສາຢູ່ນີ້ແມ່ນນິມິດທີ່ພຣະເຈົ້າໄດ້ຊົງໃຫ້ກັບເປໂຕ (ກິຈການ 10:9-16; 11:4-10). ໃນຂະນະທີ່ເປໂຕອ້ອນວອນຢູ່ເທິງຫລັງຄາ ລາວໄດ້ເຫັນຜ້າຜືນໃຫຍ່ທີ່ລົງມາຈາກສວັນ; ຜ້ານັ້ນມີຮູບສັດທຸກຊະນິດ. ແລະໃນນິມິດນັ້ນພຣະເຈົ້າຊົງສັ່ງໃຫ້ເປໂຕ "ລຸກຂຶ້ນ ຂ້າກິນເສັຽ" (10:13). ຕອນແລກເປໂຕບໍ່ເຂົ້າໃຈຄວາມໝາຍຂອງນິມິດນີ້; ແຕ່ໃນທີ່ສຸດທ່ານກໍເຂົ້າໃຈເຈຕນາຂອງພຣະເຈົ້າ ເມື່ອພວກຄົນໃຊ້ຂອງໂກເນລີໂອໄດ້ມາເຖິງ ແລະບອກເຖິງຈຸດປະສົງຂອງພວກເຂົາ. ປາສຈາກນິມິດ ເປໂຕອາດຈະປະຕິເສດຄຳເຊີນ ແລະພັນທະກິດຂອງພຣະເຈົ້າກໍຈະພົບປັນຫາຕໍ່ໄປ.

ການເຂົ້າໃຈນິມິດໝາຍຂອງພຣະເຈົ້າເປັນບັນຫາໃນຫລາຍຄຣິສຕະຈັກ. ຄຣິສຕຽນຈະຕ້ອງຮູ້ນິມິດໝາຍຂອງພຣະເຈົ້າສຳລັບຕົນ. ຄຣິສຕະຈັກຈະຕ້ອງຮູ້ນິມິດໝາຍຂອງພຣະເຈົ້າສຳລັບຄຣິສຕະຈັກ. ຄຣິສຕະຈັກຫລາຍແຫ່ງມີນິມິດໝາຍຂຽນໄວ້ໃນກະດາດ ແຕ່ສະມາຊິກຫລາຍຄົນບໍ່ເຂົ້າໃຈ. ນິມິດໝາຍທີ່ມາຈາກພຣະເຈົ້າຢ່າງແທ້ຈິງ ຈະພາພວກເຮົາໄປເຖິງຈຸດທີ່ພວກບໍ່ເຄີຍຄາດຝັນມາກ່ອນ; ນິມິດນີ້ແຕກຕ່າງກັບນິມິດທີ່ພວກເຮົາຄິດຝັນແລະວາດພາບຂຶ້ນມາເອງ.

ມີວິທີໃດທີ່ພວກເຮົາຈະໄດ້ນິມິດໝາຍຈາກພຣະເຈົ້າ? ຖ້າພວກເຮົາຢາກເຫັນນິມິດກຈາກພຣະເຈົ້າ, ພວກເຮົາຈະຕ້ອງ..

(1) ຢາກໄດ້ນິມິດຈາກພຣະເຈົ້າ ຫລາຍກວ່ານິມິດທີ່ຂຽນແຕ່ງເອງ
(2) ໃຊ້ເວລາໃນການອ້ອນວອນ
(3) ໃຊ້ເວລາສຶກສາພຣະທັມ
(4) ຮູ້ວ່າພຣະເຈົ້າສ້າງທ່ານ ຫລື ຄຣິສຕະຈັກຂຶ້ນມາພິເສດແນວໃດ
(5) ເບິ່ງວ່າພຣະເຈົ້າກຳລັງເຮັດຫຍັງແດ່ຢູ່ໃນໂລກ
(6) ຟັງຄຣິສຕຽນຄົນອື່ນໆ
(7) ເຊື່ອຟັງແລະເຮັດໃນສິ່ງທີ່ທ່ານຮູ້
(8) ຟັງເບິ່ງໃຈຂອງທ່ານເອງ

## ແຜນການຂອງພວກເຮົາເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ

ນິມິດເທິງຫລັງຄາເປັນເຣື່ອງລົບກວນສຳລັບເປໂຕ. ພວກເຮົາບໍ່ຮູ້ວ່າທ່ານກຳລັງມີແຜນຈະເຮັດຫຍັງໃນມື້ນັ້ນ. ແຕ່

ເປໂຕໄດ້ປະຖິ້ມທຸກຢ່າງເພື່ອຈະເຊື່ອຟັງການຊົງເອີ້ນຂອງພຣະເຈົ້າ (ກິຈການ 11:11-12). ຫລາຍໆເທື່ອແຜນທີ່ພວກເຮົາວາງໄວ້ກາຍມາເປັນກຳແພງກັ້ນໃນການປະກາດກັບຄົນອື່ນ. ພວກເຮົາມົວເຮັດຕາມແຜນຫລາຍຈົນບໍ່ຍອມໃຫ້ສິ່ງໃດສິ່ງນຶ່ງມາລົບກວນ.

ພວກເຮົາຮູ້ວ່າໃນຊີວິດການຮັບໃຊ້ຂອງພຣະເຢຊູ ມີຫລາຍຢ່າງໄດ້ເກີດຂຶ້ນເພາະພຣະອົງຊົງຖືກລົບກວນ ເຊັ່ນເຣື່ອງຜູ້ຍິງຊາວຊາມາເຣັຽທີ່ນ້ຳສ້າງ (ໂຢຮັນ 4); ຄົນເປ້ຽ (ມາຣະໂກ 2:1-12); ຄົນທີ່ຜີຮ້າຍສິງ (ມາຣະໂກ 5:1-20); ຜູ້ຍິງທີ່ເປັນພຍາດເລືອດຕົກ (ມາຣະໂກ 5: 25-34); ຄົນຕາບອດຊື່ບາຣະຕີມາຍ (ລູກາ 18: 35-43), ແລະອື່ນໆ.

## ການບໍ່ເຊື່ອຟັງເປັນບໍ່ເກີດຂອງອຸປສັກສຳລັບພັນທະກິດ

ເມື່ອເປໂຕໄດ້ຮັບນິມິດຈາກພຣະເຈົ້າ ທ່ານກໍໄດ້ເຮັດຕາມນິມິດນັ້ນ (ກິຈການ 10: 19-23;11: 12). ຫລາຍເທື່ອພວກເຮົາມັກເອົາຄວາມເຂົ້າໃຈມາແທນການເຊື່ອຟັງ. ການກະທຳເຊັ່ນນີ້ເປັນການອວດຕົວ; ການຄິດວ່າຕົວເອງມີຄວາມເຂົ້າໃຈພຣະຄັມພີດີ ກໍເປັນກາດອວດແບບຜິດ. ຜູ້ນຳທາງສາສນາໃນສມັຍພຣະເຢຊູ ຮູ້ພຣະທັມດີຫລາຍ ຈົນກາຍເປັນຄົນສິນບໍ່ໄດ້ເລີຍ. ພວກເຂົາບໍ່ຍອມເຊື່ອຟັງພຣະອົງ. ພຣະເຢຊູຄຣິດຊົງເນັ້ນເຣື່ອງການເຊື່ອຟັງ; ໃນມັດທາຍ 7:24 ພຣະອົງຊົງກ່າວວ່າ "ທຸກຄົນທີ່ຟັງ...ແລະປະຕິບັດຕາມ ຄົນນັ້ນກໍປຽບເໝືອນຄົນສລາດທີ່ກໍ່ສ້າງຕຶກຂອງຕົນເທິງດານຫີນ."

**ຄຳຖາມ:**

1. ມີປະເພນີແນວໃດແດ່ໃນຄຣິສຕະຈັກຂອງທ່ານທີ່ເປັນກຳແພງກີດກັ້ນການປະກາດກັບຄົນທົ່ວໆໄປ?

2. ພຣະເຈົ້າມີນິມິດໝາຍແນວໃດສຳລັບຕົວທ່ານ? ໃຫ້ອະທິບາຍ.

3. ພຣະເຈົ້າມີນິມິດໝາຍແນວໃນແດ່ສຳລັບຄຣິສຕະຈັກຂອງທ່ານ? ໃຫ້ອະທິບາຍ.

4. ທ່ານໄດ້ເຫັນການລຳອຽງ ຫລືຄວາມບໍ່ຍຸດຕິທັມຢູ່ໃສແດ່ ໃນລະຍະບໍ່ດົນມານີ້?

*ສຈ. ດຣ. ສີດນີ ຄານ*

# ບົດຮຽນທີ 8
## ປະກາດກັບທຸກຄົນ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ກິຈການ 11: 19-26
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ກິຈການ 11:19-26
**ຈຸດສໍາຄັນຂອງບົດຮຽນນີ້:** ຄຣິສຕະຈັກເພື່ອການປະກາດຊອກຫາວິທີທາງທີ່ຈະປະກາດກັບທຸກຄົນ.
**ຄໍາຖາມເພື່ອການສໍາຣວດ:** ຖ້າຍັງບໍ່ມີຄໍາວ່າ "ຄຣິສຕຽນ," ຄົນທັງຫຼາຍຈະເອີ້ນຄຣິສຕະຈັກຂອງທ່ານວ່າແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທີ່ຄຣິສຕະຈັກຂອງພວກເຮົາຈະສາມາດອອກປະກາດກັບຄົນທັງຫຼາຍໃຫ້ໄດ້ດີກວ່ານີ້.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກ ໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການຕັດສິນໃຈ.
- ຮັບຮູ້ວ່າທຸກຄົນມີຄຸນຄ່າໃນພຣະລັກສະນະຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຜູ້ມີຄວາມຕ້ອງການດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຮັບໃຊ້.

### ຄໍານໍາ

ເມືອງອັນຕີໂອເຊັຽເປັນບ່ອນທໍາອິດທີ່ພວກລູກສິດຂອງພຣະເຢຊູໄດ້ຖືກເອີ້ນວ່າຄຣິສຕຽນ. ເຣື່ອງຂອງເມືອງອັນຕີໂອເຊັຽຈະຊ່ວຍພວກເຮົາໃຫ້ເຂົ້າໃຈວິທີທີ່ຄຣິສຕະຈັກຈະສາມາດອອກປະກາດກັບຄົນທັງຫລາຍຢ່າງໄດ້ຜົນດີ.

ຂ່າວປະເສີດໄດ້ມາເຖິງເມືອງອັນຕີໂອເຊັຽຜ່ານພວກຄຣິສຕຽນທີ່ໜີຜ່າຍການຖືກຂົ່ມເຫັງທີ່ກຸງເຢຣູຊາເລັມ ຊຶ່ງມີລາຍລະອຽດໃນກິຈການ 8:1,4. ພວກເຂົາເຈົ້າບໍ່ໄດ້ແມ່ນຜູ້ຮັບໃຊ້ ແຕ່ເປັນສະມາຊິກທັມມະດາ. ເມືອງອັນຕີໂອເຊັຽ ເປັນເມືອງເອກຂອງຊີເຣັຽ ແລະຢູ່ຫ່າງຈາກກຸງເຢຣູຊາເລັມປະມານ 300 ໄມ ທາງພາກເໜືອ. ເມືອງອັນຕີໂອເຊັຽເປັນເມືອງໃຫຍ່ລໍາດັບທີ່ສາມໃນເຄືອຈັກພົບຂອງອານາຈັກໂຣມ. ນີໂກລາໂອ, ນຶ່ງໃນຈໍານວນຜູ້ຮັບໃຊ້ເຈັດຄົນທີ່ຖືກແຕ່ງຕັ້ງ (6:1-7), ເປັນຊາວເມືອງອັນຕີໂອເຊັຽ ແລະເປັນຄົນຕ່າງຊາດທີ່ມາເຊື່ອພຣະເຢຊູຄຣິດ.

### ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງເວົ້າເຣື່ອງຂ່າວປະເສີດທຸກຄົນ

ຄຣິສຕຽນໄດ້ພົບຄວາມທຸກລໍາບາກ ທີ່ກຸງເຢຣູຊາເລັມ ແລະໄດ້ແຕກຢາຍໄປເຖິງເມືອງຟອຍນີເກ, ເກາະກຸບໂຣ, ແລະເມືອງອັນຕີໂອເຊັຽ. ພວກເຂົາເຈົ້າໄດ້ປະກາດພຣະທັມແຕ່ກັບພວກຄົນຍິວ (11:19). ແຕ່ບາງຄົນທີ່ມາຈາກເກາະກຸບ

ໂອ ແລະຊາວກີເຣເນໄດ້ພາກັນປະກາດຂ່າວປະເສີດເຣື່ອງພຣະເຢຊູກັບຊາວກຣີກ ຊຶ່ງຖືວ່າເປັນຄົນຕ່າງຊາດ. ຄົນຕ່າງຊາດເປັນຈຳນວນຫລາຍໄດ້ມາເຊື່ອ (11:21).

ພວກເຮົາຫລາຍຄົນເຄີຍເຊີນຄົນມາໂບດ ແລະພວກເຮົາມັກຈະເຊີນຄົນທີ່ເຮົາຄິດວ່າຈະຢູ່ນຳກັນໄດ້. ສ່ວນຫລາຍພວກເຮົາຈະເຊີນຄົນທີ່ມີຖານະຫລືນິສັຍໃຈຄໍຄ້າຍໆ ກັບພວກເຮົາ. ເວລາພວກເຮົາຈະເຊີນຄົນທີ່ແຕກຕ່າງຈາກພວກເຮົາ, ເຮົາກໍຄິດວ່າພວກເຂົາຈະບໍ່ຍອມຮັບ. ຄົນທີ່ຍັງບໍ່ເຊື່ອບໍ່ຮູ້ວ່າພຣະເຢຊູຄຣິດແມ່ນໃຜ ແລະພຣະອົງຊົງໄດ້ມາເຮັດຫຍັງຢູ່ໃນໂລກນີ້ ສະນັ້ນພວກເຂົາມັກຕິຕຽນຄຣິສຕຽນ ແລະຄຣິສຕະຈັກຂອງພຣະເຈົ້າ. ຄຣິສຕຽນໃນສມັຍແລກໄດ້ພົບວ່າເມື່ອເວົ້າກັບຊາວກກຣີກແລະຄົນອື່ນ ໆ ເຣື່ອງພຣະເຢຊູຄຣິດ (11:20), ຜູ້ຄົນເຫລົ່ານັ້ນໄດ້ຕຽມພ້ອມແລ້ວທີ່ຈະເຊື່ອ.

## ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງເປັນຄົນທີ່ໄດ້ປ່ຽນແປງຊີວິດແລ້ວ

ເມື່ອບາຣະນາບາໄດ້ເດີນທາງມາເຖິງເມືອງອັນຕີໂອເຊັຽ ທ່ານກໍໄດ້ເຫັນເຖິງສິ່ງທີ່ພຣະເຈົ້າກຳລັງກະທຳຢູ່ໃນຂົງເຂດນີ້. ບາຣະນາບາມີຄວາມຫ່ວງໃຍເຣື່ອງຈິດວິນຍານຂອງຜູ້ເຊື່ອໃໝ່. ທ່ານໄດ້ຕັກເຕືອນໃຫ້ເຂົາເຈົ້າໄດ້ຕັ້ງໝັ້ນຕິດສນິດຢູ່ກັບອົງພຣະຜູ້ເປັນເຈົ້າ. ຄຣິສຕຽນທີ່ອັນຕີໂອເຊັຽໄດ້ເຂັ້ມແຂງຂຶ້ນ ແລະເມືອງນີ້ໄດ້ກາຍເປັນສູນປະກາດຂ່າວປະເສີດຂອງສມັຍທຳອິດ (13:1-13).

ຖ້າພວກເຮົາຈະປະກາດຂ່າວປະເສີດກັບຄົນໃນສມັຍນີ້ ພວກເຮົາຈະຕ້ອງເປັນສາວົກ ຫລືລູກສິດທີ່ດີຂອງພຣະເຢຊູຄຣິດ. ຫລາຍຄົນຄິດວ່າຕົວເອງເປັນສາວົກເພາະໄດ້ເກີດຢູ່ໃນຄອບຄົວຄຣິສຕຽນ, ໄດ້ໄປໂບດເປັນປະຈຳ, ແລະໄດ້ຮັບບັບຕິສະມາແລ້ວ. ການເປັນສາວົກຂອງພຣະຄຣິດ ຫລືເປັນຄຣິສຕຽນໝາຍເຖິງການໄດ້ເກີດໃໝ່ທາງຝ່າຍວິນ ຍານ, ການຖິ້ມໃຈເກົ່າເອົາໃຈໃໝ່, ແລະການດຳເນີນຊີວິດທີ່ພຣະເຈົ້າຊົງພໍພຣະທັຍ. ການປະກາດທີ່ເມືອງອັນຕີໂອເຊັຽເກີດຜົນດີເພາະຄຣິສຕຽນທີ່ເມືອງນັ້ນໄດ້ປ່ຽນແປງຊີວິດ ແລະໄດ້ຕິດຕາມພຣະທັມຄຳສອນຢ່າງຖືກຕ້ອງ. ຖ້າຊີວິດຂອງພວກເຮົາທີ່ເອີ້ນຕົວເອງວ່າ "ຄຣິສຕຽນ" ບໍ່ໄດ້ມີການປ່ຽນແປງການປະກາດພຣະທັມກໍຈະບໍ່ໄດ້ຜົນດີເທົ່າທີ່ຄວນ.

## ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງຊອກຫາບ່ອນເກັບກ່ຽວ

ພຣະເຢຊູຄຣິດມັກເວົ້າເຣື່ອງການເກັບກ່ຽວຢູ່ສເມີ (ມັດທາຍ 9:37-38; ລູກາ 10:2; ໂຢຮັນ 4:35). ພຣະອົງຊົງກ່າວວ່າ, "ທ່ານທັງຫລາຍເວົ້າວ່າອີກສີ່ເດືອນຈະເຖິງຣະດູກ່ຽວເຂົ້າບໍ່ແມ່ນຫລື ນີ້ແຫລະ, ເຮົາບອກທ່ານທັງຫລາຍວ່າ ຈົ່ງເງີຍໜ້າເບິ່ງທົ່ງນາເພາະເຂົ້າກໍເຫລືອງພໍກ່ຽວແລ້ວ" (ໂຢຮັນ 4:3). ພຣະຜູ້ເປັນເຈົ້າຄືເຈົ້າຂອງນາ; ພຣະເຢຊູຊົງສັ່ງສາວົກໃຫ້ອ້ອນວອນຕໍ່ເຈົ້າຂອງນາເພື່ອເພິ່ນຈະໄດ້ສົ່ງຜູ້ກ່ຽວອອກໄປທົ່ງນາ (ລູກາ 10:2). ພຣະເຢຊູຊົງບອກໃຫ້ສາວົກຫລຽວເບິ່ງທົ່ງນາທີ່ກຳລັງເຫລືອງແລ້ວໃຫ້ເຂົາເຈົ້າຫາວິທີທີ່ຈະມີສ່ວນໃນການເກັບກ່ຽວ.

ເມື່ອພວກເຮົາເບິ່ງສິ່ງທີ່ພຣະເຈົ້າໄດ້ຊົງສ້າງໄວ້ ແລະເບິ່ງພຣະທັມຂອງພຣະອົງ ພວກເຮົາຈະເຫັນວ່າຣະດູມີຄວາມສຳຄັນຫລາຍ. ພຣະທັມໄດ້ເວົ້າເຖິງຣະດູຂອງການປູກ ແລະຣະດູຂອງການເກັບກ່ຽວ. ການເກັບກ່ຽວຝ່າຍຈິດວິຍານກຳລັງເກີດຂຶ້ນທົ່ວໆໄປໃນໂລກຂອງພວກເຮົາ ໂດຍສະເພາະໃນເຂດອະເມຣິກາໃຕ້, ອັຟຣິກາ, ແລະເອເຊັຍ. ແຕ່ການເກັບກ່ຽວນີ້ຈະບໍ່ຢັ້ງຢືນຢູ່ຕລອດໄປ. ເມືອງອັນຕີໂອເຊັຽຊຶ່ງເປັນຈຸດເລີ້ມຕົ້ນຂອງການປະກາດ ປັດຈຸບັນໄດ້ກາຍເປັນບ່ອນຢູ່ຂອງຊາວມຸສລິມ. ພຣະເຢຊູຊົງກ່າວວ່າ, "ເມື່ອຍັງເວັນຢູ່ເຮົາທັງຫລາຍຕ້ອງເຮັດພຣະຣາຊກິດຂອງພຣະອົງທີ່ຊົງໃຊ້ ເຮົາມາ ເວລາກາງຄືນກໍຈະໄດ້ມາເຖິງ ຄືເວລາທີ່ບໍ່ມີຜູ້ໃດອາດເຮັດການໄດ້" (ໂຢຮັນ 9: 4).

## ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງໜູນໃຈການເກັບກ່ຽວ

ເວລາພວກອັຄສາວົກເລືອກບາຣະນາບາໃຫ້ໄປເມືອງອັນຕີໂອເຊັຽ ພວກເຂົາໄດ້ເລືອກບຸກຄົນທີ່ມັກໜູນນ້ຳໃຈ (ກິຈການ 4:36). ບາຣະນາບາເປັນຄົນເສັຽສະລະ ແລະເປັນຄົນມັກໜູນໃຈຄົນອື່ນໆ. ເມື່ອລາວໄດ້ເຫັນພຣະຄຸນຂອງພຣະເຈົ້າຖ້າມກາງຊາວເມືອງອັນຕີໂອເຊັຽ ບາຣະນາບາກໍໄດ້ຕັກເຕືອນໜູນໃຈພວກຜູ້ເຊື່ອໃໝ່ທັງຫລາຍ (11: 23).

ການເກັບກ່ຽວໃນຫລາຍໆເຂດທີ່ອະເມຣິກາກຳລັງອ່ອນເພັຽ, ບາງເຂດການເກັບກ່ຽວຍັງຖືກຍົກເລີກເສັຽ. ສະນັ້ນ ການ ໜູນໃຈເປັນຂອງຂວັນອັນຍິ່ງໃຫຍ່ ທີ່ພວກເຮົາສາມາດໃຫ້ກັບຜູ້ຮັບໃຊ້ພຣະເຈົ້າ ໂດຍສະເພາະໃນທົ່ງນາທີ່ການ ເກັບກ່ຽວກຳລັງຂາດຄົນງານ.

## ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງພົວພັນກັບຄົນອື່ນໆ

ເມື່ອບາຣະນາບາໄດ້ເຫັນສິ່ງທີ່ພຣະເຈົ້າກຳລັງເຮັດຢູ່ໃນເມືອງອັນຕີໂອເຂັຽ ລາວກໍໄປນຳຫາໂຊໂລ ຫລືໂປໂລ. ບາຣະ ນາບາເປັນຜູ້ທີ່ຮັບຮູ້ໂຊໂລກ່ອນຄົນອື່ນໆ ໃນສມັຍທີ່ໂຊໂລໄດ້ມາຮັບໃຊ້ໃໝ່ (ກິຈການ 9:10-28). ບາຣະນາບາໄດ້ໄປ ເຊີນອັຄສາວົກໂຊໂລທີ່ກຳລັງຢູ່ໃນເມືອງຕາໂຊ (ບ້ານເກີດຂອງໂຊໂລ) ໃຫ້ມາຮ່ວມງານທີ່ເມືອງອັນຕີໂອເຂັຽ.

ບາຣະນາບາເຫັນວ່າໂຊໂລຈະເປັນປໂຍດຫລາຍສຳລັບຄຣິສຕະຈັກເມືອງອັນຕີໂອເຂັຽ ແລະສຳລັບໂຊໂລເອງ. ໂຊໂລ ເປັນນັກປາດຂອງສາສນາຢູດາຍ, ທ່ານສາມາດເວົ້າພາສາກຣີກ, ແລະທ່ານເປັນຜູ້ຮູ້ພຣະທັມຢ່າງແຈ່ມແຈ້ງ. ຄຣິສຕະ ຈັກເມືອງອັນຕີໂອເຂັຽເປັນບ່ອນທີ່ກຳລັງເຕີບໃຫຽ ແລະຕ້ອງການຜູ້ນຳຢ່າງໂຊໂລເພື່ອຈະໄດ້ເຂັ້ມແຂງ. ພວກເຮົາຮູ້ ວ່າຖ້າຂາດໂຊໂລຫລືໂປໂລໃນຕອນນັ້ນ ພຣະທັມກິຈການຄົງຈະເປັນໄປອີກໃນປະເພດອື່ນ. ການພົວພັນຂອງບາຣະນາ ບາແລະໂປໂລ ຖືກຕາມເວລາຢ່າງໜ້າອັສຈັນ.

## ຖ້າຈະປະກາດກັບຄົນທັງຫລາຍພວກເຮົາຈະຕ້ອງມີສ່ວນໃນການເກັບກ່ຽວ

ບາຣະນາບາບໍ່ໄດ້ເມີນເສີຍເມື່ອເຫັນການທຳງານຂອງພຣະເຈົ້າ. ບາຣະນາບາແລະໂປໂລໄດ້ທຳງານຮ່ວມກັນຢູ່ທີ່ນັ້ນ ຫລາຍກວ່ານຶ່ງປີ, ເຂົາເຈົ້າໄດ້ສັ່ງສອນພຣະທັມແລະໄດ້ພົວພັນແບບໃກ້ຊິດໃນຄຣິສຕະຈັກເມືອງອັນຕີໂອເຂັຽ(11:26). ຈາກເມືອງນີ້ ພຣະເຈົ້າໄດ້ຊົງເອີ້ນທ່ານທັງສອງໃຫ້ອອກໄປປະກາດໃນເມືອງອື່ນໆຕໍ່ໄປ (13:1-3).

ພວກເຮົາຈະເຮັດແນວໃດເພື່ອໃຫ້ວຽກງານຂອງພຣະເຈົ້າເກີດຜົນດີຂຶ້ນ? ຈົ່ງເລີ້ມເຮັດໃນສິ່ງທີ່ທ່ານເຮັດໄດ້ ໃນບ່ອນ ທີ່ທ່ານກຳລັງຢູ່ນັ້ນ. ທ່ານອາດຈະເປັນຜູ້ສອນພຣະຄັມພີສະມາຊິກໃນກຸ່ມນ້ອຍ, ຫລືເຂົ້າຮ່ວມທີມປະກາດ. ເມື່ອທ່ານ ເລີ້ມມີສ່ວນໃນວຽກງານຂອງພຣະເຈົ້າ, ເຮັດໃນສິ່ງທີ່ທ່ານເຮັດໄດ້, ແລະປະກາດຂ່າວປະເສີດກັບຄົນອື່ນໆ ພຣະເຈົ້າ ຈະຊົງເປີດປະຕູໃຫ້ທ່ານ ເພາະພຣະອົງຊົງເປັນພຣະເຈົ້າຂອງການເກັບກ່ຽວ.

**ຄຳຖາມ:**

1. ຄົນປະເພດໃດທີ່ທ່ານຢາກຈະເຊີນມາໂບດ ຫລືຄຣິສຕະຈັກຂອງທ່ານ?

2. ຖ້າມີຄົນແປກໜ້າເຂົ້າມາໂບດຂອງທ່ານ ທ່ານມີບ່ອນສຳລັບຄົນຜູ້ນັ້ນບໍ່?

3. ທ່ານໄດ້ເວົ້າເຣື່ອງພຣະເຢຊູກັບຄົນທີ່ບໍ່ຢູ່ໃນໂບດຂອງທ່ານບໍ່? ໄດ້ເວົ້າຄົນປານໃດແລ້ວ?

4. ການເປັນສິດຫລືສາວົກຂອງພຣະເຢຊູໝາຍເຖິງຫຍັງສຳລັບຕົວທ່ານ?

5. ມີໃຜແດ່ທີ່ທ່ານຮູ້ຈັກ ແລະຮູ້ວ່າເຂົາຄວນຈະມີສ່ວນໃນວຽກງານຂອງພຣະເຈົ້າໃນໂບດຂອງທ່ານ?

6. ທ່ານໃຊ້ວິທີໃດເພື່ອໜູນໃຈ ແລະເພື່ອລ້ຽງຄຣິສຕຽນໃໝ່ໃນໂບດຂອງທ່ານ?

*ສຈ. ດຣ. ສິດນີ ຄານ*

# ບົດຮຽນທີ 9
# ສ່ຽງພັຍເພື່ອເຮັດຕາມການຊົງນໍາ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ກິຈການ 13:1-6, 13-16,42-52; 14:19-22

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ກິຈການ 13-14

**ຈຸດສໍາຄັນຂອງບົດຮຽນນີ້:** ຕິດຕາມພຣະເຈົ້າອາດຈະໄດ້ເຮັດບາງຢ່າງ ເບິ່ງຄ້າຍກັບວ່າເປັນການສ່ຽງພັຍ.

**ຄໍາຖາມເພື່ອການສໍາຣວດ:** ທ່ານ ຫລືຄຣິສຕະຈັກຂອງທ່ານເຄີຍເຮັດຫຍັງແດ່ທີ່ເບິ່ງຄ້າຍກັບວ່າເປັນການສ່ຽງເພື່ອຈະຕິດຕາມການຊົງນໍາຂອງພຣະເຈົ້າ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວ່າມີຫຍັງແດ່ທີ່ຂ້າພະເຈົ້າແລະຄຣິສຕະຈັກສາມາດຮຽນຮູ້ຈາກສິ່ງທີ່ຄຣິສຕຽນໃນສມັຍທໍາອິດໄດ້ເຮັດເພື່ອຕິດຕາມການຊົງນໍາ ຊຶ່ງເບິ່ງແລ້ວຄືການສ່ຽງພັຍ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກ ໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການຕັດສິນໃຈ.
- ຮັບຮູ້ວ່າທຸກຄົນມີຄຸນຄ່າໃນພຣະລັກສະນະຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຜູ້ມີຄວາມຕ້ອງການດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຮັບໃຊ້.

## ຄໍານໍາ

ໂປໂລແລະບາຣະນາບາໄດ້ຍອມສ່ຽງຕໍ່ຄວາມທຸກລໍາບາກ, ຄວາມຕໍາໜິຕິຕຽນ, ແລະຄວາມຕາຍເພື່ອເຫັນແກ່ຂ່າວປະເສີດທີ່ໄດ້ມອບໃຫ້ພວກເຂົາເຈົ້າເພາະຄວາມເຊື່ອໃນອົງພຣະເຢຊູຄຣິດ. ຄຣິສຕະຈັກເມືອງອັນຕິໂອເຂັຽທີ່ໄດ້ສົ່ງທ່ານທັງສອງອອກໄປປະກາດກໍໄດ້ສ່ຽງພັຍເໝືອນກັນ. ນີ້ແມ່ນບາດກ້າວສໍາຄັນສໍາລັບຄຣິສຕະຈັກ; ພັນທະກິດຂອງພຣະເຈົ້າໄດ້ເລີ່ມຂຍາຍຕົວຢ່າງໄວຫລັງຈາກມີການຂົ່ມເຫັງຄຣິສຕຽນທີ່ກຸງເຢຣູຊາເລັມ.

ພວກເຮົາບໍ່ເຂົ້າໃຈວ່າເປັນຫຍັງ ພຣະເຈົ້າຊົງອະນຸຍາດໃຫ້ເກີດມີການຂົ່ມເຫັງຄຣິສຕຽນ; ແຕ່ຖ້າສຶກສາພຣະທັມກິຈການໃຫ້ລະອຽດແລ້ວ ພວກເຮົາເຫັນວ່າການຂົ່ມເຫງຄຣິສຕຽນອາດຈະມີສ່ວນໃນການຂຍາຍຕົວຂອງຄຣິສຕະຈັກໃນສມັຍທໍາອິດ. ກ່ອນການຖືກຂົ່ມເຫງ ຄຣິສຕຽນບໍ່ໄດ້ອອກໄປປະກາດເມືອງອື່ນ ໆນອກຈາກຢູ່ໃນກຸງເຢຣູຊາເລັມ.

**ຄັດເອົາແລະສົ່ງອອກ** (13:1-6)

ຄຣິສຕຽນຫລາຍຄົນໄດ້ອອກໜີຈາກການຂົ່ມເຫັງທີ່ກຸງເຢຣູຊາເລັມ ແລ້ວຍ້າຍໄປຢູ່ເມືອງອັນຕິໂອເຂັຽ ຊຶ່ງຕັ້ງຢູ່ທາງ

ເໜືອຂອງຄາລີເລ. ແລະຢູ່ທີ່ນັ້ນ "ຄົນເປັນຈຳນວນຫລາຍທີ່ເຊື່ອກໍໄດ້ກັບໃຈຕ່າວຄືນຫາອົງພຣະຜູ້ເປັນເຈົ້າ" (ກິຈການ 11:21). ໃນກຸ່ມຄົນເຊື່ອມີຊາວຢິວແລະຊາວຕ່າງຊາດຮວມກັນຢູ່; ດ້ວຍເຫດນີ້ ຄຣິສຕະຈັກເມືອງອັນຕີໂອເຂັຽຈຶ່ງມີທັສນະແຕກຕ່າງກັບຄຣິສຕະຈັກທີ່ກຸງເຢຣູຊາເລັມ.

ກິຈການ 13 ເລີ້ມຕົ້ນດ້ວຍການກ່າວເຖິງຜູ້ປະກາດພຣະທັມແລະອາຈານຫ້າທ່ານ ຊຶ່ງໃນນັ້ນກໍມີບາຣະນາບາແລະໂຊໂລຜູ້ເປັນຄົນຕ່າງຖິ່ນ ແຕ່ໄດ້ຮັບໃຊ້ຮ່ວມກັບຄົນອື່ນໆຢູ່ທີ່ນັ້ນ. ບາຣະນາບາແລະໂຊໂລໄດ້ຖືກຄັດເອົາເພື່ອຈະໄປເປັນຜູ້ປະກາດ ຫລືສາສນາທູດ (13:2). ສິ່ງສຳຄັນກ່ອນການຄັດເລືອກ ຄຣິສຕະຈັກໄດ້ມີການ "ຖືສິນອົດອາຫານແລະໄຫວ້ວອນ" (13:3) ເພື່ອຂໍການນຳພາຈາກພຣະເຈົ້າ. ຜູ້ນຳໃນຄຣິສຕະຈັກໄດ້ວາງມືໃສ່ບາຣະນາບາແລະໂຊໂລ ແລ້ວຈຶ່ງໃຫ້ອອກໄປ. ການວາງມືໃສ່ຜູ້ຮັບໃຊ້ບໍ່ແມ່ນການໃຫ້ຂອງພຣະຣາຊທານພິເສດ ຫລືຮັບຮູ້ການແຕ່ງຕັ້ງ, ແຕ່ແມ່ນເພື່ອຮັບຮູ້ສິ່ງທີ່ພຣະວິນຍານບໍຣິສຸດໄດ້ຊົງກະທຳໃນຊີວິດຂອງເຂົາເຈົ້າ. ການເອີ້ນຜູ້ຮັບໃຊ້ບໍ່ແມ່ນວຽກຂອງມະນຸດແຕ່ເປັນພັນທະກິດຂອງພຣະເຈົ້າໂດຍພຣະວິນຍານບໍຣິສຸດ.

<u>**ຕັກເຕືອນ ແລະຊູກຳລັງ**</u> (13:13-16, 42-52)

ເມື່ອຄະນະຜູ້ປະກາດໄດ້ໄປເຖິງແຂວງປາຟີເລັຽ ຊຶ່ງເປັນແຂວງນ້ອຍຂອງຈັກພົບໂຣມ, ໂຢຮັນ ຫລືມາຣະໂກໄດ້ແຍກກຸ່ມເພື່ອເດີນທາງກັບເຢຣູຊາເລັມ. ການກະທຳຂອງມາຣະໂກໃນຄັ້ງນີ້ເຮັດໃຫ້ໂຊໂລເຂົ້າໃຈວ່າມາຣະໂກເປັນຄົນບໍ່ເອົາໃຈໃສ່ໃນການຮັບໃຊ້ (ກິຈການ 13:13; 15:38). ສິ່ງນຶ່ງທີ່ປ່ຽນແປງໃນຕອນນີ້ຄື ໂຊໂລໄດ້ເປັນຜູ້ນຳຄະນະແລະໄດ້ມີຊື່ໃໝ່ວ່າໂປໂລ. ກິຈການ 13:13 ໄດ້ເລີ່ມເອີ້ນກຸ່ມປະກາດນີ້ວ່າ "ໂປໂລກັບພວກຂອງທ່ານ."

ພຣະທັມບໍ່ໄດ້ໃຫ້ລາຍລະອຽດວ່າໂປໂລແລະຄະນະໄດ້ເຮັດຫຍັງແດ່ໃນຕອນຕົ້ນຂອງການເດີນທາງ, ແຕ່ເມື່ອມາເຖິງເມືອງອັນຕີໂອເຂັຽໃນແຂວງປີຊີເດັຽ ພວກເຂົາເຈົ້າໄດ້ເຂົ້າໄປໃນໂຮງທັມ ແລະໄດ້ຖືກເຊີນໃຫ້ແບ່ງປັນພຣະທັມພຣະເຈົ້າ (13:15). ໂປໂລໄດ້ປະກາດເຣື່ອງຊີວິດ, ການຕາຍ, ແລະການຄືນພຣະຊົນຂອງພຣະຄຣິ ວ່າເປັນຄວາມສຳເຣັດຂອງພຣະສັນ ຍາຂອງພຣະເຈົ້າຕໍ່ຊົນຊາດອິສຣາເອັນ (13:16-41).

ໂປໂລແລະບາຣະນາບາໄດ້ຖືກເຊີນໃຫ້ປະກາດໃນໂຮງທັມອີກເປັນເທື່ອທີສອງຊຶ່ງເປັນວັນຊະບາໂຕ(13:42). ຄົນທັງຫລາຍໂດຍສະເພາະຊາວຕ່າງຊາດໄດ້ພາກັນຟັງການປະກາດພຣະທັມຂອງໂປໂລ ຈົນເປັນເຫດໃຫ້ພວກຊາວຢິວເກີດມີຄວາມເຫິງສາ (13:45). ຊາວຢິວໄດ້ພາກັນຄັດຄ້ານ ແລະໝິ່ນປມາດໂປໂລ; ໃນທີ່ສຸດທ່ານແລະຄະນະກໍໄດ້ອອກຈາກໂຮງທັມເທສນານັ້ນໄປ (13:46). ໂປໂລໄດ້ເລີ້ມປະກາດຂ່າວປະເສີດກັບຊາວຕ່າງຊາດ ເພາະທ່ານເຊື່ອວ່າຄວາມລອດພົ້ນທີ່ຜູ້ປະກາດພຣະທັມເອຊາຢາໄດ້ກ່າວໄວ້ນັ້ນ ພຣະເຈົ້າຊົງປະທານໃຫ້ທຸກຄົນຈົນສຸດປາຍແຜ່ນດິນໂລກ (13:47; ເອຊາຢາ 49:6). ປະຕູນຶ່ງປິດ ແຕ່ອີກປະຕູນຶ່ງໄດ້ຖືກເປີດອອກເພື່ອການປະກາດ.

ການປະກາດໄດ້ພົບກັບອຸປສັກຫລາຍຢ່າງ, ແຕ່ໂປໂລແລະບາຣະນາບາມີຄວາມຊົມຊື່ນຍິນດີທີ່ "ພຣະທັມຂອງອົງພຣະຜູ້ເປັນເຈົ້າໄດ້ແຜ່ໄປທົ່ວຂົງເຂດນັ້ນ" (13:49). ພວກເຂົາເຈົ້າມີໂອກາດປະກາດກັບຄົນທີ່ມີກຽດຕິຍົດ ແລະຜູ້ໃຫຍ່ໃນເມືອງນີ້ ແຕ່ໜ້າເສັຽໃຈເພາະການຕໍ່ຕ້ານຂອງຊາວຢິວເຮັດໃຫ້ທ່ານທັງສອງຕ້ອງໜີອອກຈາກເມືອງນັ້ນດ້ວຍຄວາມຊື່ນຊົມຍິນດີເພາະໄດ້ປະກາດພຣະທັມຂອງພຣະເຈົ້າ (13:52).

<u>**ທໍ້ ແຕ່ບໍ່ຢຸດ**</u> (14:19-22)

ອຸປສັກໄດ້ຕິດຕາມໂປໂລແລະຄະນະເມື່ອອອກຈາກເມືອງອີໂກນີອົນໄປເຖິງເມືອງລີຊະທາ. ເມືອງລີຊະທາເປັນເມືອງຂຶ້ນຂອງກຸງໂຣມ ແລະເມືອງນີ້ຕັ້ງຢູ່ທາງໃຕ້ຂອງເມືອງອີໂກນີອົນ. ການຕໍ່ຕ້ານຄຣິສຕຽນແຂງແຮງຫລາຍໂດຍການ

ນຳຂອງຊາວຢິວຈາກເມືອງອັນຕີໂອເຊັຽ ແລະເມືອງອີໂກນີອົນ. "ເຂົາເອົາກ້ອນຫີນຄວ່າງໃສ່ໂປໂລ ແລະລາກທ່ານອອກໄປນອກເມືອງ ຄິດວ່າທ່ານຕາຍແລ້ວ" (14:19).

ພຣະເຈົ້າໄດ້ຊົງຮັກສາຊີວິດຂອງໂປໂລໄວ້ ເພາະພຣະອົງຍັງມີພັນທະກິດຫລາຍຢ່າງສຳລັບທ່ານ. ທ່ານໝໍລູກາ ຜູ້ບັນທຶກເຫດການບໍ່ໄດ້ບອກວ່າໂປໂລໄດ້ຕາຍຫລືບໍ່ ແຕ່ໂປໂລລຸກຂຶ້ນແລະນຳພວກຄະນະເຂົ້າໄປໃນເມືອງ. ວັນຕໍ່ມາ ໂປໂລແລະຄະນະກໍໄດ້ເດີນທາງໄປເຖິງເມືອງເດຣະເບ. ຫລາຍຄົນໃນເມືອງນີ້ໄດ້ມາເຊື່ອເພາະການເທສນາຂອງໂປໂລ ແລະບາຣະນາບາ (14:21). ນີ້ແມ່ນອີກຕົວຢ່າງນຶ່ງເຣື່ອງປະຕູນຶ່ງປິດ ແຕ່ອີກປະຕູນຶ່ງໄດ້ຖືກເປີດອອກເພື່ອການປະກາດ.

ຫລັງຈາກນັ້ນໂປໂລແລະບາຣະນາບາໄດ້ກັບຄືນໄປຫລາຍເມືອງທີ່ເຄີຍມີຜູ້ຕໍ່ຕ້ານ ເພື່ອຢ້ຽມຢາມຄຣິສຕະຈັກທີ່ໄດ້ຕັ້ງໄວ້ກ່ອນແລ້ວ. ມີເຫດຜົນຢູ່ສອງຢ່າງທີ່ເຮັດໃຫ້ໂປໂລຕ້ອງເຮັດແນວນີ້. ນຶ່ງ, ທ່ານຕ້ອງການໃຫ້ມີການຈັດຕັ້ງໃນແຕ່ລະຄຣິສຕະຈັກ (14:23). ສອງ, ໂປໂລແລະບາຣະນາບາຍັງຕ້ອງການໜູນໃຈພວກຜູ້ເຊື່ອໃໝ່ທັງຫລາຍໃຫ້ຕັ້ງໝັ້ນຢູ່ໃນພຣະທັມຂອງພຣະເຈົ້າ. ໂປໂລໄດ້ເປັນຕົວຢ່າງໃຫ້ພວກສິດທັງຫລາຍໂດຍທາງຊີວິດຂອງທ່ານ ແລະການຮັບໃຊ້.

<u>ຄຳຖາມ:</u>

1. ເວລາທ່ານພິສູດເບິ່ງພັນທະກິດໃນຄຣິສຕະຈັກຂອງທ່ານ, ທ່ານຄິດວ່າທຸກຢ່າງເກີດຂຶ້ນໂດຍບັງເອີນ ຫລືເກີດຈາກຄວາມເຈຕນາ?

2. ມີບົດຮຽນຫຍັງແດ່ທີ່ພວກເຮົາສາມາດຮຽນຈາກຄຣິສຕະຈັກເມືອງອັນຕີໂອເຊັຽເຣື່ອງການເຮັດພັນທະກິດຂອງພຣະເຈົ້າ ຫລືທີ່ພວກເຮົາມັກເອີ້ນວ່າມິດຊັນ?

3. ຄຣິສຕະຈັກຂອງທ່ານເຮັດແນວໃດເພື່ອຈະເອີ້ນຄົນໃຫ້ໄປຮັບໃຊ້ພຣະເຈົ້າ ຊຶ່ງອາດຈະເປັນການຮັບໃຊ້ໃນຄຣິສຕະຈັກຫລືເປັນສາສນາທູດ?

4. ທ່ານຄິດເຫັນຕົວຢ່າງຂອງຄວາມກ້າຫານໃນການຮັບໃຊ້ຂອງຜູ້ໃດຜູ້ນຶ່ງໃນຄຣິສຕະຈັກຂອງທ່ານບໍ່?

5. ທ່ານຄິດວ່າຕົວເອງພ້ອມແລ້ວບໍ່ທີ່ຈະຍອມສ່ຽງເໝືອນຢ່າງໂປໂລແລະບາຣະນາບາໃນບົດຮຽນນີ້ ເພາະຄວາມເຊື່ອ? ເປັນຫຍັງຈຶ່ງກ້າ? ເປັນຫຍັງຈຶ່ງບໍ່ກ້າ?

*ສຈ. ດຣ. ສີດາ ຄານ*

## ບົດຮຽນ 10
## ກັບຄືນເພິ່ງເບິ່ງພຣະເຢຊູ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ກິຈການ 15:1-22

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ກິຈການ 15:1-35

**ຈຸດສໍາຄັນຂອງບົດຮຽນນີ້:** ຄຣິສຕະຈັກຈະຕ້ອງເພິ່ງເບິ່ງພຣະເຢຊູ ແລະປະກາດວ່າຄວາມລອດພົ້ນໄດ້ມາໂດຍທາງຄວາມເຊື່ອ ແລະບໍ່ມີຢ່າງອື່ນເພີ້ມເຕີມ.

**ຄໍາຖາມເພື່ອການສໍາຣວດ:** ມີຫຍັງອີກແດ່ທີ່ຈໍາເປັນສໍາລັບຄວາມລອດພົ້ນ ນອກຈາກຄວາມເຊື່ອໃນອົງພຣະເຢຊູຄຣິດ? ທ່ານເຄີຍຕື່ມຫຍັງໃສ່ບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລູບເບິ່ງຄວາມຫ່ວງໃຍຂອງການປະຊຸມໃນກຸງເຢຣູຊາເລັມ ແລະຢັ້ງຢືນວ່າ ຄວາມພົ້ນໄດ້ມາໂດຍທາງຄວາມເຊື່ອໃນພຣະເຢຊູ, ແລະບໍ່ຕ້ອງຕື່ມຫຍັງໃສ່ອີກ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກ ໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການຕັດສິນໃຈ.
- ຮັບຮູ້ວ່າທຸກຄົນມີຄຸນຄ່າໃນພຣະລັກສະນະຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຜູ້ມີຄວາມຕ້ອງການດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຮັບໃຊ້.

### ຄໍານໍາ

ຈາກການປະຊຸມໃນກຸງເຢຣູຊາເລັມ, ຄຣິສຕະຈັກສມັຍທໍາອິດໄດ້ຢັ້ງຢືນວ່າຄວາມລອດພົ້ນໄດ້ມາໂດຍທາງຄວາມເຊື່ອໃນອົງພຣະເຢຊູຄຣິດເທົ່ານັ້ນ, ແລະບໍ່ມີສິ່ງອື່ນ ໆເພີ້ມເຕີມ.

ການປະຊຸມເປັນໂອກາດສໍາລັບການພິຈາຣະນາເຣື່ອງສໍາຄັນ ບໍ່ວ່າໃນສມັຍປັດຈຸບັນຫລືໃນສມັຍທໍາອິດ. ຄວາມຄິດເຫັນທີ່ແຕກຕ່າງກັນເຣື່ອງຄວາມລອດພົ້ນສາມາດເຮັດໃຫ້ຄຣິສຕະຈັກແຕກແຍກກັນ. ສະນັ້ນພວກບັນດາຜູ້ນໍາຈາກກຸ່ມຕ່າງ ໆ ຕ້ອງໄດ້ເຂົ້າຮ່ວມປະຊຸມກັນໃນປະມານປີ ຄ. ສ 48 ຊຶ່ງເປັນການປະຊຸມຄັ້ງສໍາຄັນທີ່ສຸດສໍາລັບຄຣິສຕະຈັກ.

**ການບໍ່ເຫັນພ້ອມ** (15:1-5)

ສະມາຊິກຂອງຄຣິສຕະຈັກໃນສມັຍທໍາອິດສ່ວນຫລາຍແມ່ນຊາວຢິວທີ່ນັບຖືກົດແລະປະເພນີຢິວຢ່າງເຄັ່ງຄັດ. ແຕ່ສິ່ງ

ໃໝ່ໄດ້ເກີດຂຶ້ນເພາະພຣະທັມຂອງພຣະເຈົ້າໄດ້ແຜ່ອອກໄປນອກຂອບເຂດຂອງກຸງເຢຣູຊາເລັມ ແລະຈາກກຸ່ມຂອງຊາວຢິວ. ຟີລິບໄດ້ປະກາດເຣື່ອງຂ່າວປະເສີດກັບຊາວເອທີໂອເປັຽ; ທ່ານຜູ້ນີ້ໄດ້ຮັບເຊື່ອ ແລະໄດ້ຮັບບັບຕິສະມາ (ກິຈ ການ 8:34-39, ເບິ່ງບົດຮຽນ 5). ເປໂຕໄດ້ປະກາດກັບໂກເນລີໂອທີ່ເມືອງກາຊາເຣັຽ; ໂກເນລີໂອ ແລະຄອບຄົວຂອງລາວໄດ້ຮັບເຊື່ອແລະໄດ້ຮັບບັບຕິສະມາ (10:2); ຄົນຕ່າງຊາດໄດ້ຮັບພຣະວິນຍານບໍຣິສຸດເໝືອນດັ່ງຄົນຢິວ (10:44 -48). ນອກນັ້ນ ພວກຄຣິສຕຽນທີ່ແຕກໜີຈາກກຸງເຢຣູຊາເລັມໄດ້ໄປເຖິງເມືອງອັນຕີໂອເຊັຽແລະໄດ້ປະກາດພຣະທັມຢູ່ທີ່ນັ້ນ; ຊາວຕ່າງຊາດຈຳນວນຫລາຍສົມຄວນໄດ້ຮັບເຊື່ອ (11:21); ບາຣະນາບາເປັນຄົນຮັບຮູ້ຄຣິສຕະຈັກທີ່ເມືອງອັນຕີໂອເຊັຽ (11:23); ສຳຄັນທີ່ສຸດກໍຄືກຸ່ມການປະກາດລຸ້ນທຳອິດໄດ້ເລີ້ມຈາກຄຣິສຕະຈັກແຫ່ງນີ້. ຊາວຢິວແລະຊາວຕ່າງຊາດໄດ້ເຂົ້າເປັນອັນນຶ່ງອັນດຽວກັນໃນຄວາມເຊື່ອ ຊຶ່ງມີລາຍລະອຽດໃນຈົດໝາຍຂອງໂປໂລເຖິງຄຣິສຕະຈັກທີ່ເມືອງເອເຟໂຊ (ເອເຟໂຊ 2:14-18).

ເຫດການເຫລົ່ານັ້ນໄດ້ສ້າງຄວາມບໍ່ພໍໃຈໃຫ້ພວກຜູ້ນຳຄຣິສຕະຈັກທີ່ກຸງເຢຣູຊາເລັມ. ການບໍ່ເຫັນພ້ອມໃນວິທີຂອງຄວາມລອດພົ້ນກໍເກີດມີຂຶ້ນ. ຂ້າງນຶ່ງເຊື່ອວ່າຄວາມລອດພົ້ນຈະຕ້ອງເປັນໄປຕາມທັມນຽມຂອງຊາວຢິວ; ໃນກຸ່ມນີ້ແມ່ນ "ຜູ້ທີ່ເຊື່ອສັງກັດໃນກຸ່ມຂອງພວກຟາຣີຊາຍ" (15:5). ຄົນກຸ່ມນີ້ເຊື່ອວ່າຄວາມເຊື່ອໃນອົງພຣະເຢຊູຄຣິດນັ້ນບໍ່ພຽງພໍສຳລັບຄວາມລອດພົ້ນ; ຜູ້ເຊື່ອໃໝ່ຈະຕ້ອງຮັບພິທີຕັດແລະຖືຮັກສາພຣະບັນຍັດ (15:1, 5). ພວກເຮົາຮູ້ວ່າຄວາມລອດພົ້ນແມ່ນເພື່ອ "ທຸກຄົນທີ່ເຊື່ອ" (ໂຢຮັນ 3:16) ແລະທຸກຄົນ "ທີ່ຮ້ອງອອກພຣະນາມພຣະເຈົ້າ" (ໂຣມ 10:13).

ອີກຂ້າງນຶ່ງຍອມຮັບທຸກຄົນທີ່ເຊື່ອໃນອົງພຣະເຢຊູຄຣິດວ່າເປັນພຣະເຈົ້າ ໃຫ້ເຂົ້າເປັນສະມາຊິກໃນຄຣິສຕະຈັກ (15: 2-4). ຄຣິສຕະຈັກອັນຕີໂອເຊັຽເປັນນຶ່ງໃນຜູ້ທີ່ເຊື່ອໃນທຳນອງນີ້. ສະນັ້ນຄຣິສຕະຈັກກຸ່ມນີ້ຈຶ່ງໄດ້ແຕ່ງຕັ້ງໂປໂລແລະບາຣະນາບາໃຫ້ເປັນຜູ້ຕາງໜ້າຂອງເຂົາເຈົ້າ ໃນຖານະຜູ້ຮູ້ເຣື່ອງຂ່າວປະເສີດດີ.

ຈົ່ງສັງເກດເບິ່ງຄຳຖແລງຂອງໂປໂລແລະບາຣະນາບາ; ທ່ານທັງສອງບໍ່ໄດ້ໂຕ້ຖຽງເຣື່ອງພຣະສັນຍາເດີມ, ແຕ່ທ່ານໄດ້ເນັ້ນເຣື່ອງການປະກາດຂອງເຂົາເຈົ້າໃນຂົງເຂດເອເຊັຽນ້ອຍ (15:4).

ຫລາຍຄັ້ງ ພວກເຮົາມັກຫລຽວເບິ່ງແຕ່ສິ່ງເກົ່າໆທີ່ເກີດຂຶ້ນມານານແລ້ວ; ພວກເຮົາມັກເບິ່ງຄືນຫາສມັຍທີ່ທຸກຄົນໃນຄຣິສຕະຈັກໄດ້ຮັກແພງກັນ ແລະເປັນອັນນຶ່ງອັນດຽວກັນ. ຄວາມຈິງແລ້ວສິ່ງເຫລົ່ານັ້ນເປັນພຽງຄວາມຝັນ; ການບໍ່ເຫັນພ້ອມໄດ້ມີຂຶ້ນແຕ່ວັນຄຣິສຕະຈັກເກີດໃໝ່; ສະມາຊິກໃນຄອບຄົວຂອງພຣະເຈົ້າບໍ່ອາດຈະເຫັນພ້ອມນຳກັນໄດ້ທຸກຢ່າງ ແຕ່ສາມາດຢູ່ດ້ວຍກັນຢ່າງສັນຕິສຸກ ເພາະພຣະຄຣິດຊົງເປັນພຣະເຈົ້າຂອງທຸກຄົນ.

ຄຣິສຕະຈັກເມືອງອັນຕີໂອເຊັຽໄດ້ເປັນຕົວຢ່າງທີ່ດີໃນການແກ້ໄຂການບໍ່ເຫັນພ້ອມ. ພວກເຂົາເຈົ້າບໍ່ໄດ້ເມີນເສີຽຕໍ່ບັນຫາ ຫລືຄວາມບໍ່ເຫັນພ້ອມທີ່ມີລະຫວ່າງຄຣິສຕະຈັກກຸງເຢຣູຊາເລັມ ແລະກຸ່ມໃນອັນຕີໂອເຊັຽ. ໃນຂະນະດຽວກັນຄຣິສຕະຈັກອັນຕີໂອເຊັຽກໍບໍ່ຍອມທີ່ຈະຮັບຄວາມເຊື່ອຂອງກຸ່ມເຢຣູຊາເລັມຢ່າງງ່າຍໆ. ສະນັ້ນພວກເຂົາເຈົ້າຈຶ່ງໄດ້ສົ່ງຜູ້ຕາງໜ້າໄປປະຊຸມແລະທຳຄວາມເຂົ້າໃຈກັບກຸ່ມທີ່ເຢຣູຊາເລັມ.

**<u>ການສົນທະນາ</u>** (15:6-12)

ທ່ານລູກາຊຶ່ງເປັນຜູ້ຂຽນບໍ່ໄດ້ກ່າວໄວ້ວ່າຈຳນວນຄົນທີ່ມາຮ່ວມປະຊຸມມີຫລາຍປານໃດ ແຕ່ທ່ານໄດ້ບອກວ່າພວກອັຄສາວົກແລະພວກເຖົ້າແກ່ໄດ້ປະຊຸມກັນເພື່ອພິຈາຣະນາບັນຫາ (15:6). ອັຄສາວົກມີຢູ່ດ້ວຍກັນທັງໝົດສິບສອງຄົນ

(**ມັດທັຽ** ໄດ້ມາແທນ ຢູດາ - 1:26). ສ່ວນພວກເຖົ້າແກ່ກໍຄືຈະແມ່ນພວກຜູ້ນຳທີ່ໄດ້ຖືກແຕ່ງຕັ້ງຈາກຫລາຍໆກຸ່ມໃນສມັຍນັ້ນ (14:23).
ຫລັງຈາກການໂຕ້ຖຽງກັນຫລາຍສົມຄວນແລ້ວ, ເປໂຕກໍໄດ້ຂຶ້ນກ່າວເຖິງປະສົບການຂອງທ່ານທີ່ເມືອງກາຊາເຣັຽ ແລະການປະກາດຂອງທ່ານກັບຄອບຄົວຂອງໂກເນຣີໂອ (10:24; 15:7-11). ທີ່ຈິງແລ້ວບໍ່ແມ່ນເຣື່ອງຂອງເປໂຕ ແຕ່ເປັນເຣື່ອງທີ່ພຣະເຈົ້າໄດ້ຊົງທຳງານ ແລະໄດ້ຊົງປະທານຄວາມພົ້ນ ແລະພຣະວິນຍານບໍຣິສຸດໃຫ້ແກ່ຄົນຕ່າງຊາດ. ເປໂຕເຄີຍໄດ້ກ່າວໃນຕອນນີ້ວ່າ, "ຝ່າຍຂ້າພຣະເຈົ້າເປັນຜູ້ໃດທີ່ຈະສາມາດຂັດຂວາງພຣະເຈົ້າໄດ້" (11:17).

ຝ່າຍບາຣະນາບາແລະໂປໂລກໍໄດ້ເລົ່າເຣື່ອງ "ໝາຍສຳຄັນແລະການອັສຈັນຕ່າງໆ ທີ່ພຣະເຈົ້າໄດ້ຊົງກະທຳໂດຍຜ່ານທາງຊີວິດຂອງເຂົາເຈົ້າໃນໝູ່ຄົນຕ່າງຊາດ" (15:12). ຄ້າຍໆກັບຄຳເລົ່າຂອງເປໂຕ, ບາຣະນາບາ ແລະໂປໂລບໍ່ໄດ້ເນັ້ນໃນສິ່ງທີ່ເຂົາເຈົ້າໄດ້ເຮັດ ແຕ່ເນັ້ນເຖິງສິ່ງທີ່ພຣະເຈົ້າໄດ້ຊົງກະທຳກັບຄົນຕ່າງຊາດ.

ພວກເຮົາສາມາດຮຽນຮູ້ຈາກຄຳພຍານຂອງພວກອັຄສາວົກໃນກອງປະຊຸມເທື່ອນີ້ເຊັ່ນ: ຢ່າເນັ້ນເຖິງເຣື່ອງທີ່ພວກເຮົາໄດ້ກະທຳເພື່ອພຣະເຈົ້າ ແຕ່ໃຫ້ເນັ້ນເຣື່ອງທີ່ພຣະເຈົ້າໄດ້ຊົງກະທຳຜ່ານການຮັບໃຊ້ຂອງພວກເຮົາ. ພວກເຮົາບໍ່ສາມາດທີ່ຈະເຮັດໃຫ້ຄົນມາເຊື່ອ ແຕ່ພຣະເຈົ້າຕ່າງຫາກທີ່ເປັນຜູ້ປ່ຽນແປງຈິດໃຈມະນຸດ.

**<u>ຄວາມເຫັນ</u>** (15:13-22)
ຢາໂກໂບຊຶ່ງອາດຈະເປັນປະທານໃນກອງປະຊຸມ ໄດ້ສລູບຄວາມເຫັນຂອງທີ່ປະຊຸມ. ພວກເຮົາສັງເກດໄດ້ວ່າທີ່ປະຊຸມບໍ່ໄດ້ມີການອອກສຽງລົງຄະແນນເພື່ອເລືອກເອົາຄວາມເຫັນ ແຕ່ຫລັງຈາກການໂອ້ລົມພໍສົມຄວນແລ້ວ ຢາໂກໂບກໍສລູບແລະໃຫ້ຄວາມເຫັນ ຊຶ່ງປາກົດແຈ້ງເຣື່ອງການຊົງທຳງານຂອງພຣະເຈົ້າຜ່ານເປໂຕ ແລະຄະນະຂອງໂປໂລ.

ຢາໂກໂບສລູບຄວາມເຫັນໂດຍອີງໃສ່ພຣະທັມອາໂມດ 9:11-12, ເຢເຣມີຢາ 12:15, ແລະເອຊາຢາ 45:21; ທ່ານກ່າວຕໍ່ກອງປະຊຸມວ່າທຸກຢ່າງທີ່ເກີດຂຶ້ນແມ່ນການສຳເຣັດຕາມຄຳຂອງຜູ້ປະກາດພຣະທັມໄດ້ຂຽນໄວ້. ສຳລັບເຣື່ອງເງື່ອນໄຂຂອງຄວາມພົ້ນ, ຢາໂກໂບໄດ້ກ່າວແບບບໍ່ມີຂໍ້ສົງສັຍວ່າ ຢ່າເພີ້ມເຕີມໃນສິ່ງທີ່ພຣະເຈົ້າໄດ້ຊົງສະແດງໃຫ້ເຫັນແລ້ວໃນກຸ່ມຄົນຕ່າງຊາດ (15:19). ຄວາມລອດພົ້ນຜ່ານທາງພຣະເຢຊູຄຣິດ ມີໄວ້ສຳລັບທຸກຄົນທີ່ເຊື່ອ.

ກອງປະຊຸມໄດ້ຂຽນຈົດໝາຍເຖິງຄົນຕ່າງຊາດເພື່ອບໍ່ໃຫ້ພວກເຂົາເກີດຄວາມປັ່ນປ່ວນ (15:20-21). ຈົດໝາຍນີ້ປະກອບດ້ວຍຄຳແນະນຳສີ່ຢ່າງແລະຄຳແນະນຳນີ້ບໍ່ໄດ້ມີສ່ວນກ່ຽວຂ້ອງກັບຄວາມລອດພົ້ນ ແຕ່ເປັນພຽງຄຳແນະນຳສຳລັບການດຳເນີນຊີວິດຄຣິສຕຽນ. ທ່ານຄິດວ່າບັນຫານີ້ໄດ້ໝົດສິ້ນໄປບໍ່ຫລັງຈາກກອງປະຊຸມໃນເທື່ອນີ້? ຄຳຕອບກໍຄື "ບໍ່" ເພາະການໂຕ້ວາທີ ແລະການບໍ່ເຫັນພ້ອມເຣື່ອງຫລັກຄວາມເຊື່ອຄຣິສຕຽນ ຍັງມີຢູ່ຈົນມາເຖິງສມັຍປັດຈຸບັນ.

ກອງປະຊຸມທີ່ກຸງເຢຣູຊາເລັມໃນເທື່ອນີ້ມີຄວາມສຳຄັນທີ່ສຸດສຳລັບຄຣິສຕະຈັກທີ່ເລີ່ມໃໝ່ໃນສມັຍທຳອິດ. ຈຸດສຳຄັນທີ່ສຸດແມ່ນກອງປະຊຸມໄດ້ຕົກລົງເປັນເອກສັນເຖິງເຣື່ອງຄວາມລອດພົ້ນແມ່ນຕ້ອງເຮັດວິທີໃດ. ຄວາມເຊື່ອໃນອົງພຣະເຢຊູຄຣິດເປັນເຫດຂອງຄວາມພົ້ນ ບໍ່ຕ້ອງເພີ້ມການບັບຕິສະມາ, ການຮັບພິທີຕັດ, ຫລືການເປັນສະມາຊິກໃນຄຣິສຕະຈັກເຂົ້າຕື່ມໃສ່. ຄວາມລອດພົ້ນໄດ້ມາໂດຍທາງຄວາມເຊື່ອຢ່າງດຽວ.

**<u>ຄຳຖາມ:</u>**

1. ທ່ານເຄີຍເຫັນຄຣິສຕະຈັກໃນສມັຍນີ້ ທີ່ໄດ້ພຍາຍາມເພີ້ມສິ່ງອື່ນໆໃສ່ຄວາມເຊື່ອໃນພຣະເຢຊູ ສຳລັບຄວາມລອດ

ພົ້ນບໍ່?

2. ເປັນຫຍັງຄວາມຄິດໃນປະເພດນີ້ຍັງມີຢູ່ເຖິງສມັຍປັດຈຸບັນ?

3. ທ່ານສາມາດເຮັດຫຍັງແດ່ເພື່ອຢັ້ງຢືນ ຫລືຮັບຮູ້ຄວາມເຫັນທີ່ກອງປະຊຸມທີ່ກຸງເຢຣູຊາເລັມ ຊຶ່ງລົງມະຕິໄວ້ກ່ຽວກັບເຣື່ອງຄວາມລອດພົ້ນ?

4. ຄຣິສຕະຈັກຂອງທ່ານແກ້ໄຂຄວາມຄັດແຍ່ງ ຫລືການບໍ່ເຫັນພ້ອມ ຕາມຕົວຢ່າງຂອງຄຣິສຕະຈັກໃນສມັຍທຳອິດທີ່ເຫັນໃນພຣະທັມຕອນນີ້ບໍ່?

*ສຈ. ດຣ. ສີດນີ ຄານ*

# ບົດຮຽນທີ 11
# ປໂຍດຂອງຂ່າວປະເສີດ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ກິຈການ 16:1-40
**ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:** ກິຈການ 15:36--16:40
**ຈຸດສໍາຄັນຂອງບົດຮຽນນີ້:** ສອນໃຫ້ຮູ້ວ່າຂ່າວປະເສີດເຣື່ອງພຣະເຢຊູດີສໍາລັບທຸກຄົນ.
**ຄໍາຖາມເພື່ອການສໍາຣວດ:** ໂບດຂອງທ່ານໄດ້ປະກາດກັບທຸກຊົນຊັ້ນບໍ່?
**ຈຸດປະສົງຂອງບົດຮຽນນີ້:** ສົນທຽບນາງລີເດັຽແລະນາຍທັມມະໂຮງຮັບເຊື່ອ.

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ວຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.
- ຝຶກຫັດ, ສິດສອນໃຫ້ການເປັນຜູ້ຮັບໃຊ້.

## ບົດນໍາ

ໃນໂບດແຕ່ລະໂບດມີຄົນທຸກປະເພດມາຮ່ວມກັນນະມັສການພຣະເຈົ້າ ຊຶ່ງເປັນການບົ່ງບອກວ່າພຣະທັມຂອງພຣະເຈົ້າເປັນຜົນປໂຍດແກ່ຄົນທຸກຊາດທຸກພາສາ ແລະທຸກຕໍາແໜ່ງການງານອີກດ້ວຍ. ໃນບົດຮຽນວັນນີ້ເຮົາຈະເວົ້າກັນເຣື່ອງໂປໂລແລະຊີລາພາກັນເດີນທາງປະກາດພຣະທັມຂອງພຣະເຈົ້າແກ່ຄົນສອງປະເພດຄື; 1. ຄົນຮັ່ງມີ 2. ນາຍທັມມະໂຮງ.

**ໂປໂລແລະຊີລາໄປເມືອງຟີລິບປອຍ** (16:1-12)

ໃນຂະນະທີ່ເດີນທາງຜ່ານເມືອງເດຣະເບແລະເມືອງລີຊະທາ ໂປໂລໄດ້ພົບກັບຊາຍໜຸ່ມຜູ້ນຶ່ງທີ່ເປັນຄົນມີຄວາມເຊື່ອດີເປັນລູກເຄິ່ງຢິວເຄິ່ງກຣີກ ຊາຍໜຸ່ມຜູ້ນີ້ເປັນຄົນມີຊື່ສຽງດີ, ດັ່ງນັ້ນໂປໂລຈຶ່ງຢາກເອົາລາວເຂົ້າຮ່ວມໃນຈໍານວນພວກຜູ້ປະກາດຈຶ່ງເຮັດພິທີຕັດໃຫ້ລາວເພື່ອຈະໄດ້ລາວໄປນໍາ, ທັງນີ້ກໍເນື່ອງຈາກວ່າລາວບໍ່ແມ່ນຄົນຢິວແທ້ຈໍາເປັນຈະຕ້ອງເຮັດພິທີຕັດເສັຽກ່ອນຈຶ່ງຈະໄປນໍາໄດ້, ລາວມີຊື່ວ່າ ຕີໂມທຽວ. ການປະກາດຂອງໂປໂລໄດ້ກ່າວໄວ້ດັ່ງນີ້; *"ເມື່ອທ່ານເຫລົ່ານັ້ນກໍາລັງຜ່ານໄປຕາມເມືອງຕ່າງ ໆ ກໍໄດ້ມອບຂໍ້ບັງຄັບທີ່ພວກສາວົກແລະພວກເຖົ້າແກ່ ທີ່ຢູ່ໃນກຸງເຢຣູຊາເລັມ ໄດ້ຕົກລົງກັນໃຫ້ເຂົາຮັກສາ"* (ຂໍ້ 4). ຂໍ້ຕົກລົງກັນໃນກຸງເຢຣູຊາເລັມແມ່ນກິຈການ 15:1-35 ມີໃຈຄວາມສໍາຄັນວ່າ ຄວາມລອດພົ້ນນັ້ນມີມາຍ້ອນຄວາມເຊື່ອ ບໍ່ແມ່ນການປະຕິບັດກົດ *"ດ້ວຍເຫດນີ້ຄຣິສຕະຈັກທັງຫລາຍຈຶ່ງເຂັ້ມແຂງຂຶ້ນໃນຄວາມເຊື່ອ ແລະຈໍານວນຄຣິສຕະສະມາຊິກກໍທະວີຂຶ້ນທຸກໆວັນ"* (ຂໍ້ 6).

ໂປໂລສັງເກດເຫັນວ່າພຣະວິນຍານຂອງພຣະເຈົ້າບໍ່ຊົງອະນຸຍາດໃຫ້ປະກາດທີ່ແຂວງອາເຊັຽ *"ເມື່ອພຣະວິນຍານບໍ່ຣີ*

*ສຸດຊິງຫ້າມບໍ່ໃຫ້ກ່າວພຣະທັມໃນແຂວງເອເຊັຽ ທ່ານທັງສອງໄດ້ໄປທົ່ວເຂດແດນເມືອງຟີເຄັຽແລະເມືອງຄາລາເຕັຽ ເມື່ອມາເຖິງເຂດເມືອງມີເຊັຽແລ້ວກໍພະຍາຍາມເຂົ້າໄປໃນເຂດແດນເມືອງເບທາເນັຽ ແຕ່ພຣະວິນຍານພຣະເຢຊູບໍ່ຊົງອະນຸຍາດ "* (ຂໍ້ 6-7). ເປັນການເຂົ້າໃຈຍາກວ່າພຣະວິນຍານຂອງພຣະເຈົ້າຫລືພຣະວິນຍານພຣະເຢຊູຊົງຫ້າມການປະກາດຂອງໂປໂລຢ່າງໃດ? ເພາະຕາມທັມະດາພຣະວິນຍານຈະຊົງນຳໃຫ້ປະກາດໃນທຸກສະຖານະການ ມາເຖິງຕອນນີ້ພຣະຄັມພີບອກວ່າພຣະວິນຍານຊົງຫ້າມບໍ່ໃຫ້ປະກາດອາດຈະເປັນເພາະວ່າບໍ່ທັນເຖິງເວລາຈະປະກາດ ຫຼືເພື່ອປົກປ້ອງໂປໂລບໍ່ໃຫ້ມີອັນຕະລາຍ ຫລືພຣະວິນຍານອາດຈະມີບ່ອນອື່ນໃຫ້ປະກາດກໍເປັນໄປໄດ້ ດັ່ງມີຫລັກຖານຕໍ່ໄປນີ້;

*"ໃນກາງຄືນໂປໂລໄດ້ເຫັນນິມິດ ມີຊາຍຊາວມາເກໂດເນັຽຄົນນຶ່ງຢືນຢູ່ອ້ອນວອນວ່າ, ຂໍຂ້າມມາເຖິງເມືອງມັກກາໂດເນັຽນີ້ ເພື່ອຊ່ອຍພວກຂ້ານ້ອຍແດ່ທ້ອນ "* (ຂໍ້ 9). ຄຳວ່າໃນກາງຄືນໂປໂລເຫັນນິມິດໝາຍຄວາມວ່າເພິ່ນນອນຝັນນັ້ນເອງ, ແລະການຝັນຂອງເພິ່ນແມ່ນນິມິດທີ່ພຣະເຈົ້າໄດ້ນິມິດໃຫ້ເພິ່ນໄດ້ເຫັນຄວາມຮຽກຮ້ອງຕ້ອງການຂອງຊາວມາກາໂດເນັຽດັ່ງນັ້ນເພິ່ນຈຶ່ງຕັດສິນໃຈຂ້າມນ້ຳໄປຍັງເມືອງນັ້ນ *"ເມື່ອທ່ານເຫັນນິມິດແລ້ວ ພວກເຮົາຈຶ່ງພະຍາຍາມທັນທີທີ່ຈະອອກໄປເຖິງເມືອງມາກາໂດເນັຽ ດ້ວຍເຫັນແນ່ວ່າພຣະເຈົ້າຊົງເອີ້ນພວກເຮົາໃຫ້ໄປປະກາດຂ່າວປະເສີດແກ່ຊາວ ເມືອງນັ້ນ "* (ຂໍ້ 10). ດັ່ງນັ້ນໂປໂລແລະຜູ້ປະກາດອື່ນໆກໍເດີນທາງມາເຖິງເມືອງຟີລິບປອຍ ເມືອງເອກຂອງມາເກໂດເນັຽ (ຂໍ້ 12).

**<u>ພຣະທັມສຳລັບຄົນລວຍ</u>** (16:13-15)

ຜູ້ປະກາດໄດ້ມາເຖິງເມືອງຟີລິປອຍ ເມືອງເອກຂອງມາກາໂດເນັຽແລ້ວກໍຊອກບ່ອນໄຫວ້ວອນເປັນເຣື່ອງທັມມະດາຂອງຜູ້ປະກາດ, ໃນເມືອງນີ້ບໍ່ມີໂບດໃດໆຕາມຄຳເຫັນຂອງນັກສາສນາສາດໂບຮານ ດັ່ງນັ້ນໂປໂລຈຶ່ງມຸ່ງໜ້າໄປຍັງແຄມນ້ຳເພື່ອຈະໄຫວ້ວອນໃນວັນສະບາໂຕ ແຕ່ເພິ່ນໄດ້ພົບກັບຜູ້ຍິງກຸ່ມນຶ່ງຢູ່ທີ່ນັ້ນ *"ອັນນຶ່ງໃນວັນສະບາໂຕພວກເຮົາໄດ້ອອກໄປນອກປະຕູເມືອງເຖິງຝັ່ງແມ່ນ້ຳ ທີ່ເຮົາຄຶດວ່າມີບ່ອນລຳລັບໄຫວ້ວອນ ຈຶ່ງນັ່ງສົນທະນາກັບພວກຜູ້ຍິງທີ່ໂຮມກັນ "* (ຂໍ້ 13). ຫລັກສະນະຂອງຜູ້ປະກາດພຣະທັມພຣະເຈົ້າແທ້ຈິງມັກຈະຊອກສແວງຫາບ່ອນນະມັສການໃນຂະນະທີ່ບໍ່ຢູ່ບ້ານເມືອງຂອງຕົນເອງແລະໃນເວລາດຽວກັນການປະກາດກໍຈະໄປນຳສເມີ ດັ່ງທີ່ໂປໂລໄດ້ເຮັດໃນເວລານີ້. *"ແລະມີຍິງຄົນນຶ່ງຊື່ລີເດັຽມາຈາກເມືອງທົວເຕຣາ ເປັນຄົນຂາຍຜ້າສີມ່ວງອ່ອນ "* ( ຂໍ້ 14ກ). ຜ້າສີມ່ວງອ່ອນເປັນຜ້າທີ່ພວກເຈົ້ານາຍແລະຄົນຮັ່ງມີນິຍົມກັນໃຊ້ຈຶ່ງເປັນຜ້າທີ່ມີຣາຄາແພງກວ່າຜ້າອື່ນໆ ດັ່ງນັ້ນຄົນຂາຍຜ້າສີມ່ວງກໍນັບວ່າເປັນຄົນຮັ່ງມີສົມຄວນຈຶ່ງເຮັດການຄ້າຜ້າຣາຄາແພງໄດ້.

ໃນຂະນະທີ່ໂປໂລກຳລັງສົນທະນາກັບນາງເຣື່ອງຂອງພຣະເຢຊູຄຣິດໂປໂລສັງເກດເຫັນວ່ານາງມີໃຈຈົດຈໍ່ກັບພຣະທັມນັ້ນ *"ນາງມີໃຈຢຳເກງພຣະເຈົ້າ ແລະນາງຟັງເຮົາຢູ່ດ້ວຍພຣະເຈົ້າໄດ້ຊົງໄຂໃຈຂອງນາງໃຫ້ເອົາໃຈໃສ່ໃນຖ້ອຍຄຳທີ່ໂປໂລກຳລັງກ່າວນັ້ນ "* (ຂໍ້ 14). ມາເຖິງຕອນນີ້ເຮົາຮູ້ແລະແນ່ໃຈແລ້ວວ່າຜູ້ທີ່ເປີດໃຈຟັງພຣະທັມພຣະເຈົ້ານັ້ນແມ່ນພຣະເຈົ້າຊົງເປັນຜູ້ເປີດໃຈຄົນນັ້ນດັ່ງທີ່ມີຫລັກຖານໃນຂໍ້ 14. ດ້ວຍເຫດນີ້ຜູ້ປະກາດບໍ່ຄວນນ້ອຍໃຈເມື່ອເຂົາບໍ່ຟັງແຕ່ຈົ່ງເຂົ້າໃຈເສັຽວ່າພຣະເຈົ້າບໍ່ໄດ້ເປີດໃຈຄົນນັ້ນ. ຈົ່ງສັງເກດເບິ່ງໂປໂລປະກາດກັບພວກຜູ້ຍິງກຸ່ມນຶ່ງ ແຕ່ມີຜູ້ດຽວທີ່ຮັບຟັງແລ້ວກໍຮັບເຊື່ອພ້ອມທັງຮັບບັບຕິສະມາທັນທີ. ອີກອັນນຶ່ງບັບຕິສະມາໃນສມັຍໂບຮານແລະສມັຍນີ້ບໍ່ມີຫຍັງແຕກຕ່າງກັນ ນອກຈາກວ່າໃນສມັຍໂບຮານຫາກຜູ້ໃດຮັບເຊື່ອແລ້ວກໍໃຫ້ ບັບຕິສມາທັນທີດັ່ງທີ່ຈະກ່າວຕໍ່ໄປນີ້; *"ເມື່ອນາງພ້ອມກັບໄທເຮືອນຂອງຕົນໄດ້ຮັບບັບຕິສະມາແລ້ວ ກໍເຊີນພວກເຮົາວ່າຖ້າພວກທ່ານເຫັນວ່າຂ້ານ້ອຍເປັນຜູ້ເຊື່ອໃນອົງພຣະຜູ້ເປັນເຈົ້າ ເຊີນເຂົ້າມາພັກອາສັຍໃນເຮືອນຂອງຂ້ານ້ອຍ ແລະນາງໄດ້ອ້ອນວອນຈົນເຮົາຂັດບໍ່ໄດ້ "* (ຂໍ້ 15). ຄຳວ່ານາງແລະໄທເຮືອນຂອງນາງແປວ່າໝົດທັງຄອບຄົວໄດ້ຮັບບັບຕິສະມາພ້ອມກັນ ແລ້ວກໍເຊີນໂປໂລແລະຕີໂມທຽວໄປພັກທີ່ບ້ານຂອງນາງເພື່ອນາງຈະໄດ້ບົວລະບັດຮັບໃຊ້ຜູ້ຮັບໃຊ້ພຣະເຈົ້າ, ຊຶ່ງເປັນການສົມຄວນທີ່ເຮົາທັງຫາຍ

ຄວນຈະເຮັດດ້ວຍວ່າພຣະເຈົ້າສົ່ງເພິ່ນມາເພື່ອເຮົາຈະໄດ້ລອດຍ້ອນການປະກາດຂອງເພິ່ນ ແລະຍັງເປັນການສົ່ງເສີມຂ່າວປະເສີດອີກ.

**<u>ພຣະທັມປາບອຳນາດຜີແລະຊ່ອຍຄົນ</u>** (16: 16-40)

ຫລັງຈາກນາງລີເດັຽຮັບເຊື່ອແລ້ວໂປໂລພົບກັບຍິງທີ່ມີຜີສິງ, ຍິງນີ້ໃຊ້ວິຊາໝໍດູຫາເງິນໃຫ້ນາຍຂອງຕົນ ຍິງນີ້ໄດ້ຮ້ອງຂຶ້ນວ່າ *"ຄົນເຫລົ່ານີ້ແມ່ນຂ້ອຍໃຊ້ຂອງພຣະເຈົ້າສູງສຸດໄດ້ມາປະກາດເຣື່ອງທາງພົ້ນໃຫ້ທ່ານທັງຫລາຍ"* (ຂໍ້ 17) ນາງໄດ້ເຮັດດັ່ງນີ້ເປັນປະຈຳ ດັ່ງນັ້ນໂປໂລຈຶ່ງສັ່ງວ່າ *"ໃນພຣະນາມແຫ່ງພຣະເຢຊູຄຣິດ ກູສັ່ງມຶງອອກຈາກຍິງນັ້ນເສັຽ ມັນກໍອອກມາໃນເວລານັ້ນ"* (ຂໍ້ 18). ເມື່ອຜີອອກຈາກນາງແລ້ວພວກເຈົ້ານາຍຂອງນາງກໍເຫລືອໃຈເພາະເຂົາໝົດຫວັງທີ່ຈະໃຫ້ນາງເປັນຄົນຫາເງິນມາໃຫ້ຈຶ່ງຈັບໂປໂລແລະຊີລາໄປຫາເຈົ້ານາຍ *"ແຕ່ເມື່ອພວກນາຍຂອງຍິງນັ້ນເຫັນວ່າພວກຕົນໝົດຫວັງທີ່ຈະໄດ້ເງິນແລ້ວ ກໍໄດ້ຈັບໂປໂລແລະຊີລາໄປຫາພວກຜູ້ປົກຄອງໃນບ່ອນຊຸມນຸມ* (ຂໍ້ 19). ແລ້ວເຂົາກໍຫາເຣື່ອງໃສ່ທ່ານທັງສອງຈົນທີ່ຊຸມນຸມໄດ້ລຸກຂຶ້ນຕໍ່ສູ້ໂປໂລແລະຊີລາແລະຂ້ຽນຕີທ່ານທັງສອງແລະນຳໄປຂັງຄຸກໄວ້ໃນຫ້ອງຊັ້ນໃນພ້ອມທັງໃສ່ໂສ້ເຫລັກແຂວນຂື່ໄວ້ (ຂໍ້ 20-24).

ໃນຂະນະທີ່ທັງສອງກຳລັງຢູ່ໃນຄຸກຢ່າງທໍຣະມານນັ້ນ ທັງສອງບໍ່ໄດ້ຈົ່ມຫລືປ້ອຍດ່າປະການໃດ ແຕ່ກັບຮ້ອງເພງສັຣເສີນພຣະເຈົ້າ ແລະພວກອື່ນໆກໍຟັງເພງທີ່ທ່ານທັງສອງສັຣເສີນພຣະເຈົ້າຢູ່ *"ແຕ່ປະມານທ່ຽງຄືນໂປໂລກັບຊີລາກໍພາກັນອ້ອນວອນແລະຮ້ອງເພງສັຣເສີນພຣະເຈົ້າ ພວກນັກໂທດກໍຟັງຢູ່"* (ຂໍ້ 25). ເຣື່ອງນີ້ສອນໃຫ້ເຮົາຮູ້ວ່າເຮົາຄວນອ້ອນວອນແລະສັຣເສີນພຣະເຈົ້າທຸກໂອກາດ ບໍ່ສົມຄວນທີ່ຈະຈົ່ມທຸກເມື່ອພົບກັບຄວາມຍາກລຳບາກຫຼືຍາມອັດຕະຄັດ ເຮົາຈະເຫັນຕໍ່ໄປວ່າຫລັງຈາກໂປໂລແລະຊີລາເຮັດດັ່ງນັ້ນແລ້ວມີຫຍັງເກີດຂຶ້ນແດ່. *ໃນປັດຈຸບັນນັ້ນກໍເກີດແຜ່ນດິນໄຫວໃຫຍ່ຈົນຮາກຄຸກສະທ້ານສະເທືອນ ແລະໃນທັນໃດນັ້ນປະຕູຄຸກກໍໄຂອອກທຸກບານ ແລະເຄື່ອງຜູກມັດທຸກຄົນກໍຫລຸດເສັຽ"* (ຂໍ້ 26). ນັບວ່າເປັນການອັສຈັນອັນໃຫຍ່ຫລວງທີ່ບໍ່ເຄີຍມີມາກ່ອນຍ້ອນຄົນຂອງພຣະເຈົ້າໄດ້ອ້ອນວອນແລະສັຣເສີນພຣະອົງໃນຂະນະຕົນເອງຖືກຈຳຈອງດ້ວຍໂສ້ເຫລັກ ແລະໂສ້ເຫລັກນັ້ນກໍຫລຸດອອກຈາກຂາຂອງເຂົາ, ປະຕູຄຸກກໍເປີດອອກທຸກບານ ເປັນຮູບພາບໃຫ້ເຫັນວ່າຫາກເຮົາທັງຫລາຍອ້ອນວອນແລະສັຣະເສີນພຣະເຈົ້າເມື່ອເວລາເຮົາຢູ່ໃນພາວະຄັບຂັນພຣະເຈົ້າຈະຊົງປົດປ່ອຍເຮົາຈາກການນັ້ນ.

*"ເມື່ອທັມມະໂຮງຕື່ນຂຶ້ນກໍເຫັນປະຕູຄຸກໄຂ ຈຶ່ງຄິດວ່ານັກໂທດໜີໄປໝົດແລ້ວ ເລີຍຊັກດາບອອກຈວນຈະຂ້າຕົວເສັຽ"* (ຂໍ້ 27). ທັມມະໂຮງອາດຈະນອນຫລັບໃນເວລາທ່ຽງຄືນແລະກໍຕື່ນຕົກໃຈດ້ວຍແຜ່ນດິນໄຫວຢ່າງໜັກຈົນຫລຽວໄປເຫັນປະຕູຄຸກເປີດອອກ ຈຶ່ງຄິດວ່ານັກໂທດທັງໝົດໜີໄປແລ້ວ ຈຶ່ງຄິດຈະຂ້າຕົວເອງກ່ອນທາງການຈະສັ່ງຂ້າເມື່ອຮັກສານັກໂທດໄວ້ບໍ່ໄດ້. *"ແຕ່ໂປໂລໄດ້ຮ້ອງສຽງດັງວ່າ ຢ່າເຮັດຮ້າຍໃດໆແກ່ຕົວເທາະ ພວກເຮົາຍັງຢູ່ທີ່ນີ້ທຸກຄົນເມື່ອທັມມະໂຮງໄດ້ເອີ້ນເອົາໄຟມາແລ້ວ ກໍແລ່ນໂດດເຂົ້າໄປດ້ວຍຕົວສັ່ນຂາບລົງທີ່ຕີນຂອງໂປໂລແລະຊີລາ"* (ຂໍ້ 28-29). ຂ້າພະເຈົ້າອາດພາບວ່າ ຖ້າຂ້າພະເຈົ້າເປັນນາຍທັມມະໂຮງຄົນນັ້ນ ຂ້າພະເຈົ້າເອງກໍຈະເຮັດເຊັ່ນດຽວກັບລາວ ດ້ວຍວ່າຫາກນັກໂທດໜີໄປຕົວເອງ ຈະຕ້ອງຖືກປະຫານແນ່ນອນ ດ້ວຍເຫດນີ້ຈຶ່ງເປັນການສົມຄວນທີ່ຈະຂາບຂອບພຣະຄຸນຜູ້ໄວ້ຊີວິດຂອງຕົນຄືພຣະເຢຊູ ຊຶ່ງຜ່ານທາງຊີວິດຜູ້ຮັບໃຊ້ພຣະອົງ. ຈາກນັ້ນນາຍທັມມະໂຮງຈຶ່ງພາໂປໂລແລະຊີລາອອກມາແລ້ວຖາມວ່າ *"ທ່ານເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຕໍ່ໄປຈຶ່ງຈະພົ້ນໄດ້"* (ຂໍ້ 30). ເປັນຄຳຖາມທີ່ທຸກຄົນໃນໂລກນີ້ຈະຕ້ອງຖາມ *"ໂປໂລກັບຊີລາຕອບວ່າ, ຈົ່ງເຊື່ອວາງໃຈໃນພຣະເຢູແລ້ວທ່ານຈະພົ້ນໄດ້ທັງຄົວເຮືອນຂອງທ່ານ ດ້ວຍທ່ານທັງສອງໄດ້ກ່າວພຣະທັມຂອງພຣະຜູ້ເປັນເຈົ້າໃຫ້ທັມມະໂຮງກັບຄອບຄົວເຮືອນທຸກຄົນຂອງທ່ານຟັງ, ແລະໃນທັນໃດນັ້ນທັມມະໂຮງໄດ້ຮັບບັບຕິສະມາກັບທັງຄົວເຮືອນຂອງຕົນ"* (ຂໍ້ 31-33). ຕໍ່ມາຄອບຄົວທັມມະໂຮງກໍພາກັນກິນລ້ຽງສລອງຄວາມພົ້ນຂອງຕົນດ້ວຍຄວາມຍິນດີທີ່ໄດ້ວາງໃຈເຊື່ອໃນພຣະເຈົ້າ, ແລະໃນວັນຮຸ່ງເຊົ້າທາງເຈົ້າໜ້າທີ່ກໍສັ່ງປ່ອຍໂປໂລແລະຊີລາອອກຈາກຄຸກຢ່າງເປັນທາງການ ແລ້ວທ່ານທັງສອງກໍກັບໄປຍັງເຮືອນຂອງນາງລີເດັຽແມ່ຍິງຂາຍຜ້າສີມ່ວງອ່ອນເພື່ອແຈ້ງຂ່າວແກ່ນາງ ແລະຄອບຄົວແລ້ວໂປໂລແລະຊີລາກໍເດີນ

ທາງໄປປະກາດທີ່ອື່ນຕໍ່ໄປ (ຂໍ້ 35-40).

<u>**ຄຳຖາມ:**</u>

1. ທ່ານຄິດວ່າຄົນທີ່ເວົ້າວ່າຜູ້ນັ້ນຫລືຜູ້ນີ້ຈັ່ງແມ່ນບໍ່ຖືກນິສັຍຂ້ອຍ ເປັນຄຣິສຕຽນແນວໃດ?

2. ທ່ານຄິດວ່າຄົນປະເພດໃດທີ່ໂບດເຮົາສົມຄວນຈະປະກາດເຣື່ອງພຣະເຢຊູຄຣິດ?

3. ວັນນີ້ທ່ານຈະເຮັດແນວໃດກັບຄົນແຕ່ງຕົວຫລືນຸ່ງຖືບໍ່ຄືເຮົາຕລອດທັງຊີວິດຜິວບໍ່ຄືເຮົາ?

4. ບົດຮຽນຈາກນາງລີເດັຽແລະນາຍທັມມະໂຮງສອນຫຍັງທ່ານແດ່?

5. ພຣະວິນຍານພຣະເຈົ້າຊົງຫ້າມໂປໂລບໍ່ໃຫ້ໄປຢ່າງໃດ?

6. ເຮັດແນວໃດເຮົາຈຶ່ງຈະຮູ້ວ່າພຣະວິນຍານຊົງຫ້າມບໍ່ໃຫ້ປະກາດ?

7. ເຮັດແນວໃດຈຶ່ງຈະຮູ້ວ່າພຣະວິນຍານສັ່ງໄປປະກາດອີກບ່ອນນຶ່ງ?

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນທີ 12
# ປະກາດກັບຜູ້ບໍ່ເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 17:10-11, 16-34
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ກິຈການ 17:10--34
**ຈຸດສຳຄັນຂອງບົດຮຽນນີ້:** ສອນໃຫ້ຄົນໃນໂບດແບ່ງປັນຂ່າວປະເສີດແກ່ຜູ້ບໍ່ເຊື່ອ
**ຄຳຖາມເພື່ອການສຳຣວດ:** ເຮົາຈະປະກາດແກ່ຜູ້ບໍ່ເຊື່ອແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທາງປະກາດກັບຜູ້ບໍ່ເຊື່ອ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.

## ບົດນຳ

ຫລັງຈາກໂປໂລແລະຊີລາຖືກປ່ອຍອອກຈາກຄຸກແລ້ວກໍພາກັນເດີນທາງໄປເມືອງເທຊະໂລນີກ ເພື່ອອະທິບາຍພຣະທັມພຣະເຈົ້າທີ່ໂຮງທັມມະເທສນາໃຫ້ພວກຢິວຟັງ ແລະຕໍ່ມາເຂົາກໍຊອກຈັບໂປໂລແລະຊີລາໂດຍກ່າວຫາວ່າ (ຄົນເຫລົ່ານີ້ເປັນຜູ້ຂວ້ຳໂລກມະນຸດ 17:6) ໃນເວລານັ້ນໂປໂລແລະຊີລາໄດ້ອອກໄປຍັງເມືອງເບຣອຍອາໃນເວລາກາງຄືນ ໄປອະທິບາຍພຣະທັມພຣະເຈົ້າທີ່ໂຮງທັມມະເທສນາຕາມເຄີຍ ແຕ່ພວກຢິວໃນເມືອງນີ້ຟັງຄຳອະທິບາຍຂອງໂປໂລແລະຊີລາ.

**ເທສນາໃນໂຮງທັມເບອາຣອຍ** (17:10-11)

ກ່ອນທີ່ໂປໂລແລະຊີລາໄປເຖິງກຸງອາແຖນ ທ່ານທັງສອງໄດ້ແວ່ໄປຢ້ຽມຢາມເມືອງເບຣອຍອາ ຊຶ່ງເປັນເມືອງນຶ່ງໃນແຂວງມາກາໂດເນັຽ, ມີຄົນສົນໃຈແລະເຂົ້າໃຈໃນຄຳເທສນາຂອງໂປໂລຫລາຍກວ່າຄົນໃນເມືອງເທຊະໂລນີກ *"ທ່ານທັງສອງໄດ້ເຂົ້າໄປໃນໂຮງທັມມະເທສນາຂອງຊາດຢິວ ພວກຢິວເຫລົ່ານີ້ມີໃຈສູງສົ່ງກວ່າຊາວເມືອງເທຊະໂລນີກ ເພາະເຂົາມີໃຈເຫລື້ອມໃສຮັບເອົາພຣະທັມ ແລະຄົ້ນເບິ່ງພຣະຄັມພີທຸກວັນເພື່ອຢາກຮູ້ຂໍ້ຄວາມນັ້ນເປັນຈິງດັ່ງກ່າວຫລືບໍ່"* (ຂໍ້ 11). ລູກາຜູ້ບັນທຶກພຣະຄັມພີຕອນນີ້ໄດ້ຊີ້ແຈງວ່າຄົນເມືອງນີ້ມີໃຈສູງສົ່ງ Noble-minded ເປັນການເຂົ້າໃຈຍາກ ແຕ່ລູກາອະທິບາຍຕໍ່ໄປວ່າ *ເພາະເຂົາມີໃຈເຫລື້ອມໃສຮັບເອົາພຣະທັມ ແລະຄົ້ນເບິ່ງພຣະຄັມພີທຸກວັນເພື່ອຢາກຮູ້ຂໍ້ຄວາມນັ້ນເປັນຈິງດັ່ງກ່າວຫລືບໍ່?* ນີ້ແມ່ນໃຈສູງສົ່ງທີ່ລູກາພະຍາຍາມອະທິບາຍໃນພຣະຄັມພີ.

ຖ້າຈະເວົ້າພາສາທັມມະດາເຮົາໃນເວລານີ້ແລ້ວແປວ່າຈິດໃຈມີເຫດມີຜົນນັ້ນເອງ ຈຶ່ງຟັງແລະຄົ້ນຄວ້າຫາຄວາມຈິງໃນສິ່ງທີ່ໄດ້ເຫັນແລະໄດ້ຍິນ, ຍິ່ງໄປກວ່ານັ້ນລູກາຍັງບອກອີກວ່າກຸ່ມຄົນທີ່ມີໃຈສູງສົ່ງເຫລົ່ານີ້ໄດ້ຄົ້ນເບິ່ງພຣະຄັມພີແປວ່າອ່ານແລະສຶກສາພ້ອມທັງພິຈາຣະນາແຕ່ລະຂໍ້ຄວາມ. ດັ່ງຄຳທີ່ກ່າວໄວ້ວ່າ ບຸກຄົນທີ່ບໍ່ກິນຂອງທີ່ວາງເທິງໂຕະ

ກິນເຂົ້າຈະຮູ້ໄດ້ແນວໃດວ່າມັນແຊບຫລືບໍ່ແຊບ, ດັ່ງນັ້ນຈິດໃຈສູງສົ່ງ (Quality heart) ຈະຕ້ອງເປັນຄືລູກາໄດ້ກ່າວໃນພຣະທັມນີ້ ຄືຟັງເບິ່ງກ່ອນຈະໄດ້ຮູ້ວ່າດີຫລືບໍ່ດີ.

*"ພຣະທັມຂອງພຣະເຈົ້າປະກອບດ້ວຍຊີວິດແລະຣິດເດດ, ຄົມກວ່າດາບສອງຄົມທຸກດວງ ແທງຊອດເຖິງຈິດໃຈແລະຈິດວິນຍານຕລອດທັງຄໍ່ກະດູກແລະໄຂມັນໃນກະດູກຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄິດແລະຄວາມມຸ້ງໝາຍໃນໃຈໄດ້"* (ເຮັບເຣີ 4: 12). ມີຄວາມໝາຍວ່າພຣະທັມຂອງພຣະເຈົ້າເປັນພຣະທັມທີ່ໃຫ້ຊີວິດດ້ວຍການປະຕິບັດ ຊຶ່ງມີອຳນາດເໜືອຈິດໃຈທີ່ຢູ່ພາຍໃນຂອງມະນຸດ ດ້ວຍວ່າບໍ່ມີອຳນາດໃດສາມາດບັງຄັບໃຈໄດ້ນອກຈາກພຣະທັມພຣະອົງຈະຊົງປ່ຽນແປງຈິດໃຈສ່ວນເລິກຂອງມະນຸດ ດ້ວຍເຫດນີ້ໃຜກໍຕາມຫາກອ່ານແລະສຶກສາພຣະທັມຂອງພຣະອົງຜູ້ນັ້ນຈະໄດ້ຮັບການປ່ຽນແປງໃນຊີວິດເໝືອນດັ່ງຄົນໃນເມືອງເບຣອຍອາທີ່ກ່າວມາແລ້ວພາກັນສົນໃຈອ່ານແລະຄົ້ນຄວ້າພຣະທັມພຣະເຈົ້າ, ລູກາບັນທຶກວ່າ "ໃຈສູງສົ່ງ" ແປວ່າໃຈທີ່ມີຄຸນນະພາບສູງ.

**<u>ໂປໂລທີ່ກຸງອາແຖນ</u>** (17:16-18)

ໂປໂລເດີນທາງມາເຖິງກຸງອາແຖນກ່ອນຊີລາແລະຕີໂມທຽວຈຶ່ງທ່ອງທຽວເມືອງນັ້ນ ເພື່ອລໍຖ້າຊີລາແລະທີໂມທຽວມາເຖິງ, ໂປໂລເຄືອງໃຈຫລາຍທີ່ເຫັນເມືອງນັ້ນພາກັນຂາບໄຫວ້ພຣະທຽມ ຈຶ່ງເຂົ້າໄປຖົກຖຽງກັບພວກຢິວແລະຜູ້ເຊື່ອໃນພຣະເຈົ້າທີ່ໂຮງທັມ *"ຂະນະທີ່ໂປໂລຍັງລໍຖ້າຊີລາກັບຕີໂມທຽວຢູ່ກຸງອາແຖນນັ້ນ ທ່ານມີຄວາມເດືອດຮ້ອນເຄືອງໃຈ ເພາະໄດ້ເຫັນເມືອງນັ້ນເຕັມໄປດ້ວຍພຣະທຽມ ເຫດສັນນັ້ນທ່ານຈຶ່ງໄດ້ໂຕ້ຖຽງກັບພວກຢິວ ແລະພວກຜູ້ຢຳເກງພຣະເຈົ້າໃນໂຮງທັມ ແລະກັບບຸກຄົນທີ່ພົບໃນບ່ອນຊຸມນຸມທຸກວັນ"* (ຂໍ້ 16-18). ການໂຕ້ຖຽງຂອງໂປໂລກັບພວກຢິວແລະຄົນເຊື່ອພຣະເຈົ້ານັ້ນແມ່ນຊາວຢູໂຣບແລະນັກປຣັຊຍາ (Philosophers) ພຣະຄັມພີຮ້ອງວ່ານັກປາດ. ມີການໂຕ້ຖຽງກັນໃນໂບດແລະກາງເມືອງນັ້ນບໍ່ແມ່ນຜິດຖຽງກັນ ແຕ່ແມ່ນການໂຕ້ຖຽງຫາເຫດຫາຜົນໃນເຣື່ອງຄວາມເຂົ້າໃຈໃນພຣະທັມ, ຝ່າຍໂປໂລບໍ່ເຫັນດີກັບການດຳຣົງຊີວິດແລະວິທີການປະກາດອັນບໍ່ຖືກຕ້ອງຂອງພວກເຂົາ ແລະເຂົາກໍບໍ່ເຫັນດີກັບຄຳເຫັນຂອງໂປໂລທີ່ຫາວິທີທາງອື່ນໃນການປະກາດ ດ້ວຍວ່າເມືອງນີ້ເຕັມໄປດ້ວຍພຣະທຽມ ສລຸບແລ້ວຄວາມໝາຍຂອງໂປໂລມີຢູ່ວ່າ ໃຫ້ຄຣິສຕຽນກຸງອາແຖນຫາວິທາງແລະເອົາໃຈໃສ່ໃນການປະກາດໃຫ້ຫລາຍຂຶ້ນ.

*"ມີນັກປາດລາງຄົນໃນພວກເອປີກູຣຽວ ແລະໃນພວກຊະໂຕອີໂກໄດ້ມາພົບທ່ານ ລາງຄົນກ່າວວ່າຄົນເກັບເລັມຄວາມຮູ້ຜູ້ນີ້ຢາກເວົ້າອັນໃດ ລາງຄົນກ່າວວ່າເໝືອນຜູ້ປະກາດພຣະທັມຕ່າງດ້າວ ເພາະໂປໂລກ່າວເຖິງເຣື່ອງພຣະເຢຊູແລະການຄືນມາຈາກຕາຍ"* (ຂໍ້ 18). ກຸ່ມນັກປາດຫລືນັກປຣັຊຍາກຸ່ມນີ້ເປັນຄົນທີ່ມີຄວາມຮູ້ສູງສົ່ງ ແລະພວກເຂົາເຂົ້າໃຈວ່າບໍ່ມີພຣະເຈົ້າ, ບໍ່ມີການຄືນມາຈາກຕາຍຂອງພຣະເຢຊູແຕ່ຢ່າງໃດ ຊີວິດເມື່ອຕາຍຈາກໂລກນີ້ໄປແລ້ວກໍໝົດທຸກບໍ່ຈຳເປັນຕ້ອງທຳມາຫາກິນຫລືຄິດໃຫ້ຍາກລຳບາກ ດ້ວຍເຂົາມີຄວາມຄິດຢ່າງນີ້ເຂົາຈຶ່ງຮ້ອງໂປໂລວ່າຄົນເກັບເລັມຄວາມຮູ້ ແລະລາງຄົນຮ້ອງໂປໂລວ່າຜູ້ປະກາດພຣະຕ່າງດ້າວ. ເຣື່ອງນີ້ບໍ່ແມ່ນເກີດຂຶ້ນແຕ່ໃນສມັຍຂອງໂປໂລ ມັນຍັງມີມາເຖິງສມັຍນີ້ດ້ວຍ, ເຮົາໄດ້ຮຽນຮູ້ຈາກໂລໂປວ່າຫາກເຮົາບໍ່ຕັ້ງໃຈໃນການປະກາດ ຄົນທັງຫລາຍກໍຈະພາກັນໂຄຣົບພຣະທຽມກັນໝົດ ເພາະເຂົາບໍ່ຮູ້ຈັກວ່າພຣະແທ້ມີລັກສະນະຢ່າງໃດ ເຮົາທັງຫລາຍຈຳຕ້ອງເທສນາແລະປະກາດເຣື່ອງພຣະເຢຊູຊົງເປັນ ພຣະເຈົ້າຢູ່ທຸກຫົນແຫ່ງທີ່ເຮົາໄປ.

**<u>ໂປໂລເວົ້າໃຫ້ນັກປາດຟັງ</u>** (17:19-34)

*"ດັ່ງນັ້ນເຂົາຈັບໂປໂລພາໄປຍັງສະພາອາເຣໂອປາໂຄ ແລ້ວຖາມວ່າ ເຮົາຂໍຮູ້ໄດ້ຫລືບໍ່ວ່າຄວາມສອນອັນໃໝ່ທີ່ທ່ານກ່າວນັ້ນເປັນຢ່າງໃດ ດ້ວຍວ່າທ່ານນຳເຣື່ອງແປກປລາດມາເຖິງຫູຂອງເຮົາ ເຫດນັ້ນພວກເຮົາຢາກຊາບວ່າເຣື່ອງເຫລົ່ານີ້ມີຄວາມໝາຍຢ່າງໃດ"* (ຂໍ້ 1-20). ສະພາອາເຣໂອປາໂຄ(Areopagus) ແມ່ນສະພາຂອງຜູ້ຕັດສິນຄວາມກ່ຽວກັບເຣື່ອງສາສນາ, ເປັນສານສູງສຸດຂອງກຸງອາແຖນ, ໃນເວລານີ້ໂປໂລເປັນນັກໂທດກ່ຽວກັບສາສນາຈຶ່ງໄດ້ມາ

ທີ່ນີ້ ເນື່ອງຈາກວ່າເຂົາຢາກຮູ້ຄຳສອນທີ່ໂປໂລໄດ້ສອນໄປແລ້ວນັ້ນເອົາມາແຕ່ໃສ ເພາະເປັນເຣື່ອງທີ່ເຂົາບໍ່ເຄີຽໄດ້ຍິນ ຈຶ່ງເຂົາຮ້ອງວ່າເປັນເຣື່ອງແປກປລາດມາເຖິງຫູຂອງເຂົາດ້ວຍເຂົາຢ້ານວ່າການເທສນາຂອງໂປໂລອາດເຮັດໃຫ້ພວກເຂົາຫລົງທາງ. ເຂົາບອກໂປໂລຕໍ່ໄປວ່າ *"ເພາະຊາວອາແທນທັງປວງກັບພວກຕ່າງປະເທດຊຶ່ງອາສັຍຢູ່ທີ່ນັ້ນບໍ່ເຄີຽເສັຍເວລາກ່ຽວກັບເຣື່ອງອື່ນໃດ ນອກຈາກຈະກ່າວຫລືຟັງສິ່ງໃໝ່ໆ"* (ຂໍ້ 21). ອີງຕາມຄຳເວົ້າຂອງສະພາອາເຣໂອປາໂຄ ກໍເຫັນວ່າຄົນໃນກຸງອາແທນນີ້ສົນໃຈໃນຄຳເທສນາຂອງໂປໂລ ແຕ່ພວກສະພາບໍ່ເຂົ້າໃຈວ່າເປັນດ້ວຍເຫດໃດເຂົາຈຶ່ງສົນໃຈ ເພາະວ່າຄົນເມືອງນີ້ເປັນຄົນເມືອງໃຫຍ່ບໍ່ຄ່ອຍສົນໃຈກັບເຣື່ອງໄຮ້ສາຣະ ແຕ່ວັນນີ້ເຂົາກັບສົນໃຈຈຶ່ງເປັນການແປກປລາດສຳລັບຄະນະສະພາອາເຣໂອປາໂຄ.

*"ຝ່າຍໂປໂລຈຶ່ງຢືນຂຶ້ນຖ້າມກາງສະພາອາເຣໂອປາໂຄ ແລ້ວກ່າວວ່າ ທ່ານຊາວກຸງອາແທນເອີຽ, ໃນທຸກສິ່ງທຸກປະການທີ່ຂ້າພະເຈົ້າເຫັນວ່າ ພວກທ່ານຜູ້ປະຕິບັດພຣະຕ່າງໆຢ່າງເຄັ່ງຄັດ ເພາະວ່າເມື່ອຂ້າພະເຈົ້າເຂົ້າຜ່ານມາສັງເກດເບິ່ງສິ່ງທັງປວງທີ່ພວກທ່ານນະມັສການ ກໍໄດ້ເຫັນແທ່ນອັນນຶ່ງມີຄຳຈາລຶກວ່າ ແດ່ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ ເຫດສັນນັ້ນພວກທ່ານທັງຫລາຍນະມັສການເມື່ອຍັງບໍ່ຮູ້ຈັກ ພຣະເຈົ້າອົງນັ້ນແຫລະທີ່ຂ້າພະເຈົ້າມາປະກາດແກ່ພວກທ່ານ"* (ຂໍ້ 22-23). ໂປໂລຍົກຕົວຢ່າງໃນສິ່ງທີ່ເຂົາຮູ້ຈັກກັນດີຄືແທ່ນບູຊາໃຈກາງເມືອງທີ່ຈາຣຶກວ່າ *ແດ່ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ* ເພື່ອສອນເຂົາໃຫ້ຮູ້ຈັກກັບພຣະເຈົ້າອົງທ່ຽງແທ້ທີ່ພວກເຂົາໄດ້ຊອກຄົ້ນຫາຢູ່, ໂປໂລບອກເຂົາວ່າ *ພຣະເຈົ້າອົງນັ້ນແຫລະ, ທີ່ຂ້າພະເຈົ້າມາປະກາດແກ່ພວກທ່ານ.* ມີຄວາມໝາຍວ່າພວກທ່ານນະມັສການພຣະອົງໂດຍບໍ່ຮູ້ຈັກພຣະອົງແຕ່ໂປໂລຮູ້ຈັກພຣະອົງ.

ໂປໂລບອກເຂົາຕໍ່ໄປວ່າພຣະເຈົ້າອົງນີ້ແມ່ນ *"ພຣະເຈົ້າຜູ້ສ້າງໂລກກັບສິ່ງທັງປວງທີ່ຢູ່ໃນໂລກນັ້ນ ຄືຜູ້ຊົງເປັນເຈົ້າສວັນແລະແຜ່ນດິນໂລກ ພຣະອົງນັ້ນແຫລະ, ບໍ່ໄດ້ຊົງສະຖິດຢູ່ໃນພຣະວິຫານທີ່ມືມະນຸດສ້າງໄວ້ ພຣະອົງບໍ່ຈຳເປັນໃຫ້ມະນຸດປະຕິບັດພຣະອົງ ເໝືອນວ່າຊົງມີພຣະປະສົງສິ່ງນຶ່ງສິ່ງໃດ ເພາະພຣະອົງນັ້ນແຫລະຊົງເປັນຊີວິດ, ລົມຫາຍ ໃຈ, ແລະສິ່ງສາຣະພັດແກ່ຄົນທັງປວງ"* (ຂໍ້ 24-25). ຄຳເທສນາກ່ຽວກັບການຊົງສ້າງແນວນີ້ພວກຄະນະສານອາເຣໂອປາໂຄ ບໍ່ເຄີຽໄດ້ຍິນມາກ່ອນ ເນື່ອງຈາກວ່າເຂົາບໍ່ແມ່ນຄົນຊາດຢິວຈຶ່ງບໍ່ຮູ້ເຣື່ອງນີ້ ຈຶ່ງພາກັນຕົກຕະລຶງທີ່ໄດ້ຍິນຄຳແປກໆເຊັ່ນນີ້, ອີກປະການນຶ່ງພວກເຂົາກໍຊອກສແວງຫາພຣະເຈົ້າອົງທ່ຽງແທ້ຈຶ່ງໄດ້ສລັກແທ່ນບູຊາວ່າ *ແດ່ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ* ແປວ່ານະມັສການພຣະເຈົ້າທີ່ຍັງບໍ່ທັນຮູ້ຈັກ, ຮູ້ແຕ່ວ່າມີພຣະເຈົ້າ. ໂປໂລເລົ່າເຣື່ອງພຣະເຈົ້າຜູ້ຊົງສ້າງຈາກຂໍ້ 24 ຈົນເຖິງຂໍ້ 28.

ໂປໂລອ້າງເຖິງນັກແຕ່ງກາບກອນຂອງຊາວກຣີກວ່າ *"ພວກເຮົາເປັນເຊື້ອສາຍຂອງພຣະອົງເໝືອນກັນ ເຫດສັນນັ້ນເມື່ອເຮົາເປັນເຊື້ອສາຍຂອງພຣະເຈົ້າແລ້ວ ພວກເຮົາກໍບໍ່ຄວນຖືວ່າພຣະເຈົ້າຊົງເປັນເໝືອນຄຳ, ເງິນ, ຫລືຫີນ ທີ່ສລັກຄວັດຫລືແຕ້ມດ້ວຍສິລປະແລະຄວາມນຶກຄິດຂອງມະນຸດ"* (ຂໍ້ 29). ເຮົາເປັນເຊື້ອສາຍຂອງພຣະເຈົ້າກໍສູງກວ່າເງິນຄຳແລະຮູບແຕ້ມຫລືຮູບປັ້ນທີ່ສ້າງດ້ວຍມືມະນຸດ ເຮົາບໍ່ສົມຄວນຂາບໄຫວ້ເພາະວ່າສິ່ງເຫລົ່ານີ້ບໍ່ມີຄຸນຄ່າເໝືອໄປກວ່າຄວາມເປັນເຊື້ອສາຍຂອງພຣະເຈົ້າ ນັກກາບກອນຊາວກຣີກກໍຮູ້ຢູ່ແລ້ວວ່າເຮົາທັງຫລາຍເປັນເຊື້ອສາຍຂອງພຣະເຈົ້າດັ່ງນັ້ນເຮົາຈຶ່ງມີຄຸນຄ່າຫລາຍກວ່າພະຮູບປັ້ນເຫລົ່ານັ້ນ. ໂປໂລຍັງກ່າວອີກວ່າ *"ໃນສມັຍມະນຸດ ຍັງໂງ່ບໍ່ຮູ້ຈັກພຣະເຈົ້າພຣະອົງກໍບໍ່ຊົງຖືໂທດ ແຕ່ບັດນີ້ພຣະອົງຊົງສັ່ງແກ່ມະນຸດທັງປວງໃນທົ່ວທຸກບ່ອນໃຫ້ຖິ້ມໃຈ ເກົ່າເອົາໃຈໃໝ່ ເພາະວ່າພຣະອົງໄດ້ຊົງກຳນົດວັນນຶ່ງໄວ້ ໃນວັນນັ້ນພຣະອົງຈະຊົງພິພາກສາໂລກຕາມຍຸດຕິທັມ ໂດຍມະນຸດຜູ້ນຶ່ງຊຶ່ງພຣະອົງຊົງຕັ້ງໄວ້ ແລະພຣະເຈົ້າຈະຊົງໂຜດໃຫ້ຄົນທັງປວງມີຄວາມແນ່ໃຈໃນເຣື່ອງນີ້ ໂດຍບັນດານໃຫ້ມະນຸດຜູ້ນັ້ນຄືນມາຈາກຕາຍ"* (ຂໍ້ 30-31). ໂປໂລໄດ້ຕີຄວາມຫມາຍວ່າ ເມື່ອກ່ອນຄົນເຫລົ່ານີ້ບໍ່ຮູ້ຈັກພຣະອົງ ຈຶ່ງສລັກແທ່ນບູຊາວ່າ *ແດ່ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ* ແຕ່ບັດນີ້ພວກທີ່ຟັງໂປໂລຢູ່ໄດ້ຮູ້ຈັກພຣະເຈົ້າແລ້ວ ດັ່ງນັ້ນໃຫ້ພາກັນປ່ຽນໃຈສາຖ້າຫາກບໍ່

ປ່ຽນໃຈກໍຈະມີການພິພາກສາລົງໂທດຕາມການຂອງໃຜລາວ, ແຕ່ພໍມາເຖິງຄໍາວ່າ ຄືນມາຈາກຕາຍ ພວກເຂົາກໍເວົ້າເຍາະເຍີ້ຍວ່າ "*ພວກເຮົາຈະຄອຍຟັງທ່ານກ່າວເຣື່ອງນີ້ອີກ*" (ຂໍ້ 32). ແລະກໍມີລາງຄົນຮັບເຊື່ອໃນເວລານັ້ນ ແລ້ວເຂົາກໍປ່ອຍໂປໂລອອກໄປ.

**<u>ຄໍາຖາມ:</u>**

1. ເຮົາໄດ້ຮຽນຮູ້ອັນໃດຈາກຄົນເມືອງ ເບອາຮອຍ ທີ່ພຣະຄັມພີເອີ້ນວ່າໃຈສູງສົ່ງ?

2. ທ່ານເຂົ້າໃຈຄໍາວ່າໃຈສູງສົ່ງແມ່ນໃຈແນວໃດ?

3. ເປັນຫຍັງໂປໂລຈຶ່ງມີຄວາມເດືອດຮ້ອນເມື່ອມາເຖິງກຸງອາແຖນ?

4. ໃນແທ່ນບູຊາກາງເມືອງເຂົາສລັກວ່າແນວໃດ? ແປວ່າຫຍັງ?

5. ເຂົາຮ້ອງໂປໂລວ່າແນວໃດທີ່ກຸງອາແຖນ? ເປັນຫຍັງຈຶ່ງຮ້ອງແນວນັ້ນ?

6. ການທີ່ເຂົາຮ້ອງໂປໂລແນວນັ້ນສອນຫຍັງເຮົາແດ່?

7. ເປັນຫຍັງພວກນັກປາດຈຶ່ງຢາກຟັງໂປໂລກ່າວ? ເມື່ອຟັງແລ້ວມີຫຍັງເກີດຂຶ້ນ?

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 13
# ຊຸກຍູ້ຄົນໃນປະກາດກັບຄົນນອກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ 19:8-10; 20:18-35
**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** ກິຈການ 19-20
**ຈຸດສຳຄັນຂອງບົດຮຽນນີ້:** ໂບດຄວນມີການຊ່ອຍເຫລືອແລະປະກາດໄປພ້ອມກັນ
**ຄຳຖາມເພື່ອການສຳຣວດ:** ໂບດຂອງເຮົາມີຫຍັງຈະຕ້ອງດັດແປງບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີຊ່ອຍຄົນໃນແລະຫາວິທີປະກາດຄົນນອກ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍຊ່ອຍເຫລືອຜູ້ອື່ນດ້ານຮ່າງກາຍ, ຈິນວິນຍານ
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ.

## ບົດນຳ

ການປະກາດຂອງໂປໂລພົບກັບອຸປສັກເລີ້ມແຕ່ການເດີນທາງດ້ວຍຄວາມຍາກລຳບາກ ເມື່ອໄປເຖິງໂຮງທັມມະເທສນາຂອງພວກຢິວແລ້ວເພິ່ນໄດ້ໂຕ້ຖຽງກັບເຂົາໃນເຣື່ອງຣາຊແຜ່ນດິນຂອງພຣະເຈົ້າທີ່ພວກຄົນຢິວບໍ່ເຂົ້າໃຈ ມີລາງຄົນຢາກຟັງຄຳເທສນາຂອງເພິ່ນອີກ ມີລາງຄົນກໍໄລ່ເພິ່ນໜີ, ມີລາງຄົນກໍຫາເຣື່ອງໃສ່ເພິ່ນ, ມີລາງຄົນກໍດ່າວ່າປະນາມເພິ່ນ, ລາງຄົນກໍປອງຂ້າເພິ່ນ ແຕ່ເພິ່ນບໍ່ເຄີຍຢຸດເວົ້າເຣື່ອງຄວາມຈິງໃຫ້ຄົນທັງຫລາຍເຂົ້າໃຈ.

**ການສອນຂອງໂປໂລ** ( 19:8-10 )
ເມື່ອໂປໂລໄປເຖິງເມືອງເອເຟໂຊ ທ່ານກໍເລີ້ມຕົ້ນທີ່ໂຮງທັມມະເທສນາທັນທີ ເພາະທ່ານໄດ້ສັນຍາວ່າຈະກັບມາຢາມອີກໃນ 18:19-21. ຫລາຍຄົນໃນໂຮງທັມມະເທສນາໄດ້ຂໍຮ້ອງໂປໂລໃຫ້ຢູ່ຕໍ່ເພື່ອຈະໄດ້ສອນເຂົາອີກ ແລະມີລາງຄົນກໍລຸກຂຶ້ນຕໍ່ສູ້ໂປໂລ ດັ່ງນັ້ນໂປໂລຈຶ່ງແຍກອອກຈາກເຂົາແລ້ວໄປເທສນາທີ່ອື່ນ *"ຝ່າຍໂປໂລໄດ້ເຂົ້າໄປກ່າວສັ່ງສອນທະນາໃນໂຮງທັມດ້ວຍໃຈກ້າໃນຣະຫວ່າງສາມເດືອນ ໂຈດຖຽງແລະຊັກຊວນໃຫ້ເຊື່ອໃນສິ່ງທີ່ກ່າວເຖິງຣາຊແຜ່ນດິນຂອງພຣະເຈົ້າ "* ຂໍ້ 8). ດັ່ງທີ່ຮູ້ກັນແລ້ວວ່າພວກຢິວເຊື່ອໃນບັນຍັດຂອງໂມເຊ ແຕ່ບໍ່ໄດ້ເຊື່ອໃນພຣະເຢຊູວ່າເປັນພຣະຜູ້ໂຜດໃຫ້ພົ້ນທີ່ຊົງຖືກເຈີມແລະສົ່ງມາຈາກສວັນ ໂປໂລໃຊ້ເວລາສາມເດືອນພະຍາຍາມສອນແລະຊັກຊວນຄົນຢິວໃນເມືອງນີ້ໃຫ້ເຊື່ອວ່າພຣະເຢຊູຊົງເປັນພຣະຜູ້ຊ່ອຍ ແຕ່ມີຫລາຍຄົນລຸກຂຶ້ນຕໍ່ສູ້ຂັດຂວາງບໍ່ໃຫ້ຄົນເຊື່ອຟັງໂປໂລ. ໃນຂໍ້ 8 ຂໍ້ດຽວເວົ້າເຖິງສາມເດືອນທີ່ໂປໂລຫວຽນໄປເທສນາທີ່ໂຮງທັມມະເທສນາທີ່ເມືອງເອເຟໂຊ ແລະເມື່ອມີການຖົກຖຽງກັນຫລາຍໂປໂລຈຶ່ງຖອນຕົວໄປສອນຢູ່ບ່ອນອື່ນ.

ກ່ອນໜ້າອອກຈາກໂຮງທັມມະເທສນາເມືອງເອເຟ ໂຊໂປໂລໄດ້ເລືອກເອົາສາວົກບາງຄົນທີ່ເຊື່ອໃນຄຳສອນຈາກທ່ານໄປທີ່ຫ້ອງປະຊຸມຂອງທ່ານຕີຣາໂນ ແລະທ່ານກໍໃຊ້ເວລາມາເທສນາແລະຖົກຖຽງກັນຢູ່ທີ່ນີ້ເປັນເວລາສອງປີ. *"ແລະລາງຄົນມີໃຈແຂງກະດ້າງບໍ່ຍອມເຊື່ອ ແລະກ່າວຫຍາບຊ້າເຣື່ອງທາງນັ້ນຕໍ່ໜ້າຄົນທັງຫລາຍ ໂປໂລຈຶ່ງແຍກອອກຈາກເຂົາແລະຄັດເອົາພວກລູກສິດໄປນຳ ແລະທ່ານໄດ້ໂຕ້ຖຽງໃນຫ້ອງປະຊຸມຂອງທ່ານຕີຣາໂນທຸກໆວັນ"* (ຂໍ້ 9). ທ່ານຕີຣາໂນແມ່ນເຈົ້ານາຍຜູ້ນຶ່ງຊຶ່ງເພິ່ນເປັນນາຍໃນຫ້ອງປະຊຸມ, ນັກສາສນາສາດເວົ້າວ່າເພິ່ນອາຈເປັນເຈົ້າຂອງຕຶກນີ້ ດັ່ງນັ້ນເພິ່ນຈຶ່ງໃຊ້ໂປໂລມາສອນທີ່ຫ້ອງປະຊຸມນີ້ທຸກໆວັນເປັນເວລາສອງປີຈາກ 11 ໂມງເຊົ້າເຖິງ 4 ໂມງແລງເພາະວ່າເປັນເວລາຄົນບໍ່ເຮັດວຽກຈຶ່ງພາກັນມາຟັງຄຳເທສນາຂອງໂປໂລ. ເຮົາເຫັນວ່າໂປໂລຕັ້ງໃຈໃນການປະກາດເຣື່ອງຣາຊແຜ່ນດິນສວັນຂອງພຣະເຈົ້າໂດຍການຖວາຍຕົນເອງຮັບໃຊ້ຢູ່ທີ່ນີ້ເປັນເວລາສອງປີ.

__ຄຳປາສັຍຂອງໂປໂລ__ (20:18-21)

ໃນສອງປີທີ່ໂປໂລໃຊ້ເວລາເທສນາສັ່ງສອນທີ່ຫ້ອງປະຊຸມທ່ານຕີຣາໂນ, ເມືອງເອເຟໂຊຜູ້ເຊື່ອກໍມີຫລາຍ ຜູ້ຕໍ່ສູ້ກໍທະວີຂຶ້ນເປັນລຳດັບ ໂປໂລຈຶ່ງຕັດສິນໃຈໄປແຂວງມາເກໂດເນັຽແລະປະເທດກຣີກຊົ່ວຣະຍະນຶ່ງ ຈຶ່ງມີໂອກາດກັບຄືນມາຢ້ຽມຢາມເມືອງເອເຟໂຊອີກກ່ອນໜ້າເພິ່ນຈະເດີນທາງໄປຍັງກຸງເຢຣູຊາເລັມ. ໃນຂນະທີ່ແວ່ຢ້ຽມຢາມນັ້ນເພິ່ນໄດ້ພົບກັບພວກເຖົ້າແກ່ໃນຄຣິສຕະຈັກເມືອງເອເຟໂຊ ແລ້ວເພິ່ນກໍກ່າວດ້ວຍຄວາມໂສກເສົ້າວ່າ *"ຝ່າຍທ່ານທັງຫລາຍກໍຊາບຢູ່ແລ້ວວ່າ ຕັ້ງແຕ່ວັນທຳອິດທີ່ເຮົາຢ່າງເຂົ້າມາໃນແຂວງເອເຊັຽ ທຸກເວລາທີ່ເຮົາຢູ່ກັບພວກທ່ານເຮົາໄດ້ເຮັດແນວໃດເຮົາຮັບໃຊ້ອົງພຣະຜູ້ເປັນເຈົ້າດ້ວຍການຖ່ອມໃຈທຸກຢ່າງ, ດ້ວຍນ້ຳຕາໄຫລ, ແລະດ້ວຍການຖືກທົດລອງທີ່ບັງເກີດແກ່ເຮົາ ສິ່ງນຶ່ງສິ່ງໃດເປັນຄຸນປໂຍດແກ່ພວກທ່ານ ເຮົາບໍ່ໄດ້ທໍ້ຖອຍຈາກການປະກາດແລະສັ່ງສອນພວກທ່ານ ໃນທີ່ປະຊຸມແລະຕາມບ້ານເຮືອນ ທັງເຕືອນສະຕິຢ່າງໜັກແໜ້ນໃຫ້ພວກຢິວແລະພວກກຣີກ ເຖິງການຖິ້ມໃຈເກົ່າເອົາໃຈໃໝ່ຈຳເພາະພຣະເຈົ້າ ແລະຄວາມເຊື່ອຈຳເພາະພຣະເຢຊູເຈົ້າຂອງພວກເຮົາ"* (ຂໍ້ 18-21).

ການກ່າວຂອງໂປໂລເພື່ອເລົ່າເຣື່ອງເພິ່ນເປັນຕົວຢ່າງໃນການເສັຍສະລະທີ່ໄດ້ເຮັດຜ່ານມາ, ໂປໂລໄດ້ຮັບໃຊ້ພຣະເຈົ້າດ້ວຍຄວາມຖ່ອມໃຈ ມີຄວາມໝາຍວ່າຍອມເຊື່ອຟັງພຣະເຈົ້າທຸກປະການ, ລາງເທື່ອເພິ່ນກໍຮັບໃຊ້ດ້ວຍນ້ຳຕາໄຫລ, ດ້ວຍການຖືກຂົ່ມເຫັງ, ຖືກດ່າວ່າແລະຖືກຂ້ຽນຕີຈົນໄດ້ຂຶ້ນລ້າຂື້ນສານ, ລາງເທື່ອເພິ່ນກໍພົບການທົດລອງດ້ານຄວາມເຊື່ອ, ໂປໂລບອກພວກເຖົ້າແກ່ທຸກສິ່ງຢ່າງທີ່ເພິ່ນໄດ້ເຮັດ ແລະເຮັດທຸກຢ່າງບໍ່ແມ່ນເພື່ອຜົນປໂຍດສ່ວນຕົວຂອງເພິ່ນແຕ່ແມ່ນເຮັດເພື່ອປໂຍດຂອງພີ່ນ້ອງໃນໂບດແລະເພື່ອຂ່າວປະເສີດເຣື່ອງພຣະເຢຊູຄຣິດໃຫ້ໄປເຖິງຫູຂອງຜູ້ບໍ່ເຊື່ອການທີ່ໂປໂລກ່າວເຊັ່ນນີ້ກໍຍ້ອນວ່າເພິ່ນຢາກກ່າວເລົ້າໂລມໃຈພວກເຖົ້າແກ່ໃນຍາມຍາກລຳບາກ ແລະກໍເພື່ອໃຫ້ພວກເຖົ້າແກ່ພາກັນເອົາໃຈໃສ່ຮັບໃຊ້ພຣະເຈົ້າໃຫ້ຫລາຍກວ່າເກົ່າ.

__ໜ້າທີ່ຂອງໂປໂລ__ (20:22-27)

ໂປໂລເລົ່າໃຫ້ພວກເຖົ້າແກ່ຟັງອີກວ່າ ພຣະວິນຍານບໍຣິສຸດຂອງພຣະເຈົ້າຈະນຳພາເພິ່ນຂຶ້ນໄປຍັງກຸງເຢຣູຊາເລັມແລະບໍ່ຮູ້ວ່າຈະມີຫຍັງເກີດຂຶ້ນ ແມ່ນວ່າຈະມີຫຍັງເກດຂຶ້ນເພິ່ນກໍບໍ່ງຶດໃນການເດີນທາງໄປກຸງເຢຣູຊາເລັມ ດ້ວຍວ່າເພິ່ນຖວາຍຊີວິດໃນການຮັບໃຊ້ອົງພຣະຜູ້ເປັນເຈົ້າແລ້ວ, ເຖິງແມ່ນຄວາມທຸກຍາກລຳບາກຈະຄອຍຖ້າເພິ່ນໆກໍຍອມເພາະເພິ່ນຄຶດວ່າຊີວິດຂອງເພິ່ນບໍ່ມີຄ່າອັນໃດຫາກປຽບທຽບກັບຂ່າວປະເສີດ ເຣື່ອງພຣະເຢຊູຄຣິດ. ເພິ່ນຍັງບອກອີກວ່າເພິ່ນຈະເຮັດໜ້າທີ່ທີ່ພຣະເຢຊູຄຣິດໄດ້ມອບໝາຍແກ່ເພິ່ນນັ້ນໃຫ້ສຳເຣັດນັ້ນເປັນໃຈຄວາມອັນສຳຄັນທີ່ສຸດ *"ແລະຈະປະຕິບັດງານທີ່ໄດ້ຮັບມອບໝາຍຈາກອົງພຣະຜູ້ເປັນເຈົ້າໃຫ້ສຳເຣັດ ຄືຈະເປັນພຍານຢ່າງຄົບຖ້ວນເຖິງເຣື່ອງຂ່າວປະເສີດກ່ຽວກັບພຣະຄຸນຂອງພຣະເຈົ້ານັ້ນ"* (ຂໍ້ 24). ສະແດງວ່າຈະມີຫຍັງເກີດຂຶ້ນກໍຕາມ ໂປໂລຈະຕ້ອງເຮັດໜ້າທີ່ມອບໝາຍນີ້ຈົນສຳເຣັດ ແຕ່ຄຳວ່າສຳເຣັດນັ້ນແມ່ນສຳເຣັດແນວໃດ? ສາສນາສາດຜູ້ນຶ່ງໄດ້ເວົ້າເຖິງພຣະເຢຊູກ່າວວ່າ *"ສຳເຣັດແລ້ວ"* (ໂຢຮັນ 19:30) ທີ່ບົນກາງແຂນແລ້ວພຣະອົງກໍສິ້ນໃຈ, ບາງທີ່ໂປໂລໃຊ້ຄຳວ່າສຳເຣັດໃນທຳນອງ

ດຽວກັບພຣະເຢຊູ.
*"ເຮົາຜູ້ທຽວໄປປະກາດເລື່ອງຣາຊອານາຈັກຂອງພຣະເຈົ້າໃນຖ້າມກາງທ່ານທັງຫລາຍນັ້ນ ບັດນີ້ເຮົາຊາບຢູ່ແລ້ວວ່າ ຝ່າຍພວກທ່ານຈະບໍ່ໄດ້ເຫັນໜ້າເຮົາອີກຕໍ່ໄປ ເຫດສັນນັ້ນວັນນີ້ເຮົາຢືນຢັນຕໍ່ທ່ານທັງຫລາຍວ່າເຮົາບໍ່ມີໂທດໃນຊາຕາກັມຂອງທ່ານທຸກຄົນ "* (ຂໍ້ 25-26). ໂປໂລພະຍານບອກພວກເຖົ້າແກ່ວ່ານີ້ເປັນເທື່ອສຸດທ້າຍທີ່ຈະໄດ້ພົບເຫັນກັນແລ້ວຈະບໍ່ມີໂອກາດເຫັນກັນອີກຕໍ່ໄປ ໂປໂລຍັງບອກອີກວ່າເພິ່ນບໍ່ມີໂທດໃນຊະຕາກັມຂອງພວກເຂົາອີກແປວ່າເພິ່ນໄດ້ປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າໃຫ້ເຂົາຟັງໝົດແລ້ວ ພຣະເຈົ້າກໍຈະບໍ່ຖືໂທດເພິ່ນເພາະໄດ້ປະກາດໃຫ້ຟັງແລ້ວ *"ດ້ວຍວ່າເຮົາບໍ່ໄດ້ທໍ້ຖອຍຈາກການປະກາດພຣະປະສົງຂອງພຣະເຈົ້າໃຫ້ພວກທ່ານຮູ້"* (ຂໍ້ 27). ແປວ່າເພິ່ນໄດ້ປະກາດໂດຍຜ່ານຜ່າອຸປສັກທຸກຢ່າງທີ່ກີດຂວາງມາແລ້ວ.

<u>**ຄຳຕັກເຕືອນຂອງໂປໂລ**</u> (20:28-31)
ໂປໂລລົງທ້າຍດ້ວຍການເຕືອນສະຕິພວກເຖົ້າແກ່ວ່າ *"ທ່ານທັງຫລາຍຈົ່ງຣະວັງຕົວເອງໃຫ້ດີ ແລະລະວັງຮັກສາຝູງແກະທີ່ພຣະວິນຍານບໍຣິສຸດຊົງຕັ້ງພວກທ່ານໄວ້ໃຫ້ເປັນຜູ້ດູແລ ເພື່ອບຳຣຸງລ້ຽງຄຣິສຕະຈັກຂອງພຣະເຈົ້າ ທີ່ພຣະອົງຊົງໄຖ່ມາດ້ວຍພຣະໂລຫິດຂອງພຣະອົງເອງ "* (ຂໍ້ 28). ໂປໂລກ່າວດ້ວຍຄວາມເປັນຫ່ວງພວກເຖົ້າແກ່ເຫລົ່ານີ້ໃນຖານະເປັນຜູ້ດູແລຄຣິສຕະຈັກຂອງພຣະເຈົ້າ ຢ້ານວ່າພວກເຖົ້າແກ່ຈະຫລົງທາງຫລືບໍ່ກໍອາດຈະຖືກການທົດລອງຫລືຖືກຂົ່ມເຫັງແລ້ວກໍປະລະໜ້າທີ່ຜູ້ລ້ຽງແກະຂອງພຣະເຈົ້າທີ່ໄດ້ມອບໝາຍໃຫ້ເປັນຜູ້ດູແລແກະນັ້ນ. ສລູບແລ້ວພວກເຖົ້າແກ່ເຫລົ່ານີ້ມີໜ້າທີ່ສອງຢ່າງຄື; 1. ພຣະເຈົ້າຊົງເອີ້ນໃຫ້ມາເປັນເຖົ້າແກ່ເພື່ອປົກຄອງລູກແກະ. 2. ພຣະເຈົ້າມອບໝາຍຝູງແກະແປວ່າຄົນໃນໂບດໃຫ້ລ້ຽງດູບໍ່ໃຫ້ຕົກເຮັ່ຣເສັຽຫາຍ, ໂປໂລບອກຄວາມສຳຄັນຂອງແກະກຸ່ມນີ້ກ່ອນຈະໄດ້ມາແມ່ນພຣະເຢຊູເປັນຜູ້ໄຖ່ດ້ວຍພຣະໂລຫິດ ຫລືຊີວິດຂອງພຣະອົງເອງ.

*"ເຮົາຮູ້ຢູ່ວ່າເມື່ອເຮົາຈາກໄປແລ້ວ ຈະມີໝາໄນຮ້າຍເຂົ້າມາໃນຖ້າມກາງພວກທ່ານ ມັນຈະບໍ່ເວັ້ນຊີວິດຂອງຝູງແກະ ຈະມີຊາຍລາງຄົນເກີດມາຈາກພວກທ່ານເອງປັ້ນຄວາມຈິງ ເພື່ອຊັກຊວນລູກສິດໃຫ້ຫລົງຕາມເຂົາໄປ "* (ຂໍ້ 29-30). ໂປໂລໄດ້ປຽບທຽບຄົນໃນໂບດເປັນແກະ ແລະປຽບທຽບຄົນກໍ່ຄວາມຫວຸ້ນວາຍເປັນໝາໄນ ດ້ວຍວ່າໝາໄນທີ່ແທ້ຈິງນັ້ນ ມັນມັກຊອກກັດແກະໃຫ້ຕາຍໂດຍບໍ່ມີເຫດຜົນ ເຖິງແມ່ນວ່າຈະມີແກະເປັນຝູງຢ່າງຫລວງຫລາຍແລະມີໝາໄນໂຕດຽວມັນກໍສາມາດກັດແກະໃຫ້ຕາຍຫລາຍໂຕໄດ້ ເພາະວ່າແກະເປັນສັດອ່ອນໂຍນບໍ່ຕໍ່ສູ້ໝາໄນ, ນອກນັ້ນໂປໂລຍັງກ່າວເຕືອນລ່ວງໜ້າວ່າຈະມີຄົນໃນໂບດປັ້ນຄວາມຈິງ ແລ້ວຊັກຊວນໃຫ້ຄົນໃນໂບດຫລົງຕາມເຂົາໄປຫລືອາດຈະໜີໂບດໄປເລີຍ.

<u>**ຝາກໄວ້ກັບພຣະເຈົ້າ**</u> (20:32-35)
ແຕ່ກ່ອນຈາກພວກເຖົ້າແກ່ໄປໂດຍບໍ່ຄິດວ່າຈະໄດ້ກັບມາອີກໂປໂລຈຶ່ງກ່າວວ່າ *"ບັດນີ້ເຮົາຝາກທ່ານທັງຫລາຍໄວ້ກັບພຣະເຈົ້າ ແລະກັບພຣະທັມອັນປະກອບດ້ວຍພຣະຄຸນຂອງພຣະອົງ ຊຶ່ງມີຣິດອາດສາມາດສ້າງພວກທ່ານຂຶ້ນໄດ້ແລະໃຫ້ພວກທ່ານໄດ້ຮັບມໍຣະດົກດ້ວຍກັນກັບບັນດາຜູ້ຖືກຊົງຊຳຣະໃຫ້ບໍຣິສຸດ"* ຂໍ້ 32). ມີຄວາມໝາຍວ່າຂໍພຣະເຈົ້າອວຍພອນແລະຊົງປົກປ້ອງຄຸ້ມຄອງແລະຊ່ອຍທ່ານໃຫ້ພົ້ນຈາກການດ່າງພ້ອຍທຸກປະການ ເພື່ອທ່ານຈະໄດ້ຮ່ວມສຸກກັບບັນດາຜູ້ທີ່ພຣະເຈົ້າຊົງຊຳຣະລ້າງໃຫ້ບໍຣິສຸດໃນຟ້າສວັນ. *"ເຮົາບໍ່ໄດ້ໂລບເອົາເງິນ, ເອົາຄຳ, ຫລືເສື້ອຜ້າຂອງຜູ້ໃດຝ່າຍທ່ານ ທັງຫລາຍກໍຊາບຢູ່ແລ້ວວ່າ ມືທັງສອງຂອງເຮົານີ້ແຫລະ, ໄດ້ຮັບໃຊ້ຈັດຫາສິ່ງທີ່ເຮົາຕ້ອງການ "* (ຂໍ້ 34).

ໂປໂລໄດ້ໃຫ້ ຕົວຢ່າງຄວາມບໍຣິສຸດຂອງເພິ່ນເພື່ອພວກເຖົ້າແກ່ເຫລົ່ານັ້ນຈະໄດ້ຮຽນເອົາແບບຢ່າງບໍ່ໃຫ້ລັກໂລບຂອງຜູ້ໃດ ດ້ວຍວ່າເພິ່ນໄດ້ລະນຶກເຖິງພຣະທັມຂອງພຣະເຈົ້າຢູ່ສເມີ *"ໂດຍລະນຶກເຖິງພຣະທັມຂອງພຣະເຈົ້າທີ່ກ່າວແລ້ວວ່າການໃຫ້ເປັນເຫດໃຫ້ມີຄວາມສຸກຫລາຍກວ່າໄດ້ຮັບ "* (ຂໍ້ 35). ໃນພຣະຄັມພີບໍ່ມີບ່ອນໃດບັນທຶກເຣື່ອງການໃຫ້ມີ

ຄວາມສຸກຫລາຍກວ່າການຮັບ ນອກຈາກໃນພຣະທັມລູກາກ່າວວ່າ *"ຈົ່ງໃຫ້ເຂົາ ແລະພຣະເຈົ້າຈະຊົງໃຫ້ທ່ານແລະໃນຕັກຂອງທ່ານຈະໄດ້ຮັບຕວງດ້ວຍເຄື່ອງຜອງຍັດສັ່ນລົງແໜ້ນຈົນລົ້ນ ເພາະວ່າພວກທ່ານຈະຕວງໃຫ້ເຂົາ ດ້ວຍເຄື່ອງຜອງອັນໃດ ພຣະເຈົ້າຈະຊົງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ "* (ລູກາ 6: 38). ໂປໂລອາດຈະລະນຶກເຖິງພຣະທັມຕອນນີ້ ແລະເພິ່ນອາດຈະໃຊ້ຕົວຢ່າງເພິ່ນເອງຖ້າເພິ່ນໄດ້ເອົາສິ່ງໃດໃຫ້ໃຜເພິ່ນກໍມີຄວາມສຸກເຊັ່ນເພິ່ນໄດ້ເອົາພຣະທັມອັນປະກອບດ້ວຍຊີວິດໃຫ້ແກ່ຜູ້ອື່ນແລ້ວ ເພິ່ນກໍມີຄວາມສຸກໃຈ.

**ຄຳຖາມ:**

1. ໂປໂລສອນພຣະທັມຂອງພຣະເຈົ້າທີ່ເມືອງເອເຟໂຊແລ້ວມີຫຍັງເກີດຂຶ້ນ?

2. ເມື່ອມີເຫດການເກີດຂຶ້ນແລ້ວ ໂປໂລເຮັດແນວໃດ?

3. ຫລັງຈາກນັ້ນເພິ່ນໄປໃສ? ເພິ່ນເອົາໃຜໄປນຳແດ່? ເປັນຫຍັງຈຶ່ງເອົາໄປ?

4. ໂປໂລໃຊ້ເວລາສອນຢູ່ຫ້ອງປະຊຸມຂອງທ່ານຕີຣາໂນ ດົນປານໃດ?

5. ໂປໂລຈະຂຶ້ນໄປຍັງກຸງເຢຣູຊາເລັມແລະແວ່ຢາມພວກໃດ?

6. ໂປໂລໄດ້ເວົ້າຫຍັງກັບພວກເຖົ້າແກ່ແດ່?

7. ໂປໂລໄດ້ຝາກພວກເຖົ້າແກ່ໄວ້ກັບໃຜ? ເປັນຫຍັງ?

*ສຈ. ດຣ. ທຸນພັນ ວົງສິດຣິດທ໌*

# <u>ບົດຮຽນເລື່ອງການຄືນພຣະຊົນ</u>
# <u>ພຣະເຢຊູຄືນພຣະຊົນແທ້</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ລູກາ 24:13-35

**<u>ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້:</u>** ລູກາ 24

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ເຮົາຮູ້ວ່າພຣະອົງຄືນພຣະຊົນແລ້ວເຮົາຕ້ອງບອກຜູ້ອື່ນ.

**<u>ຄໍາຖາມເພື່ອການສໍາຣວດ:</u>** ເຮົາຈະເຮັດແນວໃດຈຶ່ງຈະບອກຜູ້ອື່ນໄດ້.

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊອກຫາຊ່ອງທາງບອກຜູ້ອື່ນກ່ຽວກັບເລື່ອງນີ້

**<u>ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## <u>ບົດນໍາ</u>

ວັນອິສເຕີເປັນວັນສໍາຄັນທີ່ສຸດສໍາລັບຊາວຄຣິສຕຽນດ້ວຍວ່າເປັນວັນຄືນພຣະຊົນ (ຄືນມາຈາກຕາຍ) ຂອງອົງພຣະເຢຊູຄຣິດຜູ້ຊົງເປັນພຣະເຈົ້າຂອງມະນຸດທັງປວງ. ບົດຮຽນເລື່ອງການຄືນພຣະຊົນວັນນີ້ເຮົາຈະເວົ້າຕອນພຣະອົງຊົງຄືນພຣະຊົນແລ້ວ ແລະພົບກັບສາວົກສອງຄົນຂອງພຣະອົງທີ່ຍ່າງກັບບ້ານຈາກການມາເບິ່ງພຣະອົງຕາຍທີ່ໄມ້ກາງແຂນ.

<u>ຊົງບັງຕາ</u> (24:13-16)

ໃນວັນດຽວກັນມີສອງຄົນທີ່ເຊື່ອພຣະເຢຊູກໍາລັງເດີນທາງໄກຈາກເຢຣູຊາເລັມໄປເມືອງເອມາອູດເພື່ອກັບໄປບ້ານຂອງເຂົາຫລັງຈາກມາເບິ່ງພຣະເຢຊູຕາຍທີ່ໄມ້ກາງແຂນ. ທັງສອງຄົນນີ້ພຣະຄັມພີບອກວ່າແມ່ນສາວົກ ແຕ່ບໍ່ແມ່ນສາວົກສິບສອງຄົນ, ຜູ້ທີນຶ່ງຊື່ ກະໂລປາ (ຂໍ້ 18). ສ່ວນອີກຜູ້ນຶ່ງນັ້ນອີງຕາມນັກສາສນາສາດກ່າວວ່າແມ່ນເມັຽຂອງເພິ່ນເອງ ເພາະພຣະຄັມພີເວົ້າວ່າ "*ໃຈຂອງເຮົາ*" (ຂໍ້ 32). ພຣະຄັມພີຍັ້ງຢືນວ່າຍິງນີ້ແມ່ນເມັຽຂອງກະໂລປາ. "*ນາງມາຣີອາ ເມັຽຂອງກະໂລປາ*" (ໂຢຮັນ 19: 25). ເພາະວ່າທັງສອງຜົວເມັຽນີ້ໄດ້ ຢືນເຝົ້າພຣະເຢຊູທີ່ໄມ້ກາງແຂນ. ໃນຂະນະສອງຜົວເມັຽລົມກັນເຣື່ອງການຕາຍແລະການຟື້ນພຣະຊົນຢູ່ ໃນທັນໃດພຣະເຢຊູກໍປາກົດຍ່າງໄປກັບເຂົາແຕ່ເຂົາທັງສອງບໍ່ຮູ້ວ່າແມ່ນພຣະເຢຊູ "*ເມື່ອເຂົາກໍາລັງສົນທະນາໄຕ່ຖາມກັນຢູ່ພຣະເຢຊູກໍສະເດັດມາໃກ້ເຂົາແລ້ວສະເດັດຮ່ວມທາງກັບເຂົາໄປ ແຕ່ຕາຂອງເຂົາໄດ້ຖືກຊົງບັງໄວ້ເພື່ອບໍ່ໃຫ້ເຂົາຮູ້ຈັກພຣະອົງ*" (ຂໍ້ 16).

ເມື່ອເຮົາອ່ານພຣະຄັມພີເຮົາເຫັນວ່າສາວົກທັງສອງເດີນທາງກັບບ້ານດ້ວຍຄວາມງ່ວມເຫງົາ ເພາະຄິດວ່າໝົດຫວັງເສັຽແລ້ວເມື່ອເຫັນພຣະອາຈານຕາຍທີ່ໄມ້ກາງແຂນ, ແມ່ນແລ້ວຫາກພຣະເຢຊູຕາຍແລ້ວບໍ່ຄືນມາອີກເຮົາກໍຈະໝົດຫວັງ. ຫວັງທີ່ເຮົາເວົ້າກັນນີ້ແມ່ນຫວັງວ່າວັນນຶ່ງຫລັງຈາກຊີວິດນີ້ຈະຕ້ອງໄປຢູ່ສວັນຊັ້ນຟ້າເປັນນິດ. ແຕ່ເມື່ອເຮົາອ່ານພຣະຄັມພີຕໍ່ໄປເຮົາເຫັນວ່າພຣະເຢຊູປາກົດຕົວແລະຍ່າງໄປນໍາສາວົກທັງສອງແຕ່ສາວົກບໍ່ຮູ້ວ່າແມ່ນພຣະອົງ, ດຽວນີ້ພຣະອົງຄືນພຣະຊົນແລ້ວແລະຊົງຍ່າງໄປກັບເຮົາທຸກໆວັນ ແຕ່ເຮົາບໍ່ຮູ້ຈັກວ່າແມ່ນພຣະອົງຄືສາວົກສອງຄົນບໍ່ຮູ້ນັ້ນ. ພຣະອົງຊົງຍ່າງກັບເຮົາ, ສົນທະນາກັບເຮົາ ແລະເຕືອນສະຕິເຮົາທາງຈິດວິນຍານໃຫ້ເຮົາຮູ້ວ່າອັນໃດດີ, ອັນໃດບໍ່ດີ

ຈຶ່ງສຳນຶກວ່າສາວົກສອງຄົນເວົ້າເຣື່ອງພຣະອົງໃນຂະນະທີ່ຍ່າງຕາມທາງພຣະອົງກໍຊົງປາກົດຕົວໄປກັບເຂົາ, ຫາກເຮົາມີພຣະອົງໃນໃຈ ອ້ອນວອນໃນນາມພຣະອົງ, ຊຸມນຸມກັນໃນນາມພຣະອົງໆກໍຊົງຢູ່ທີ່ນັ້ນກັບເຮົາ ເພາະພຣະອົງຊົງເປັນພຣະເຈົ້າອົງດຽວທີ່ຕາຍແລ້ວເປັນຄືນມາອີກ ການເປັນຄືນມາຂອງພຣະອົງຊົງພິສູດວ່າພຣະອົງນັ້ນແຫລະຊົງເປັນພຣະເຈົ້າອົງທ່ຽງແທ້.

<u>ເຫດການທັງໝົດ</u> (24:17-27)

ພຣະເຢຊູຮ່ວມເດີນທາງກັບສອງຜົວເມັຽໃນຖານະເປັນຄົນແປກໜ້າດ້ວຍວ່າທັງສອງບໍ່ຮູ້ຈັກພຣະອົງ ດັ່ງນັ້ນພຣະອົງຈຶ່ງຖາມເຂົາວ່າ *"ເມື່ອຕາມທາງພວກທ່ານໄຕ່ຖາມກັນເຣື່ອງໃດ "* (ຂໍ້ 17) ຫາກຈະເວົ້າພາສາພື້ນບ້ານເຮົາແລ້ວແມ່ນພຣະອົງຖາມວ່າ ລົມກັນເຣື່ອງຫຍັງ? ແຕ່ພໍເມື່ອທັງສອງໄດ້ຍິນຄຳຖາມແລ້ວບໍ່ຮູ້ວ່າໃຈເຂົາເຈົ້າຄິດແນວໃດ ແຕ່ລູກາບອກວ່າ *"ເຂົາກໍຢຸດຢືນດ້ວຍໜ້າໂສກເສົ້າ "* (ຂໍ້ 17ຂ). ແລ້ວທ່ານກະໂລປາຈຶ່ງເວົ້າກັບພຣະອົງວ່າ *"ໃນບັນດາແຂກເມືອງທີ່ອາສັຍຢູ່ໃນກຸງເຢຣູຊາເລັມ ມີແຕ່ທ່ານຜູ້ດຽວຫລືທີ່ບໍ່ຮູ້ເຫດການຊຶ່ງເກີດຂຶ້ນໃນລະຫວ່າງວັນເຫລົ່ານີ້ "*. (ຂໍ້ 18). ຖ້າເຮົາຫາກຟັງຄຳເວົ້ານີ້ຢ່າງຄັກແນ່ແລ້ວແມ່ນຄຳເວົ້າທີ່ບໍ່ພໍໃຈເທົ່າໃດ ຫລືເວົ້າວ່າເຈົ້າເຮັດຫຍັງຢູ່ໃສ? ເປັນຫຍັງບໍ່ຮູ້ເຣື່ອງນີ້ ໃນທຳນອງນັ້ນ. ຄຳຕອບຂອງເຂົາກໍບໍ່ແຕກຕ່າງຫຍັງກັບຄົນໃນໂລກເວລານີ້ທີ່ຕອບພຣະອົງດ້ວຍໃຈແຂງກະດ້າງດ້ວຍວ່າໂລກນີ້ບໍ່ຮູ້ຈັກພຣະອົງ ຫາກໂລກນີ້ຮູ້ຈັກພຣະອົງຄົງກໍບໍ່ຕອບແນວນັ້ນ. ພຣະເຢຊູກໍທຳທ່າຖາມອີກວ່າ *"ເຫດອັນໃດ? "* (ຂໍ້ 19ກ). ເຂົາຈຶ່ງເວົ້າກັບພຣະອົງວ່າ *"ເຣື່ອງເຢຊູໄທນາຊາເຣັດທີ່ສະແດງຕົວເປັນຜູ້ປະກາດພຣະທັມປະກອບ ດ້ວຍຣິດເດດໃນກິຈການແລະຖ້ອຍຄຳຕໍ່ພຣະພັກພຣະເຈົ້າແລະຕໍ່ພົລເມືອງທັງໝົດຄືຜູ້ທີ່ປະໂລຫິດຕົນໃຫຍ່ ແລະພວກເຈົ້ານາຍຂອງເຮົາໄດ້ມອບເພິ່ນໄວ້ໃຫ້ຕັດສິນລົງໂທດເຖິງຕາຍ ແລະຄຶງໄວ້ທີ່ໄມ້ກາງແຂນແຕ່ເຮົາທັງຫລາຍຫວັງໃຈວ່າ ຈະແມ່ນທ່ານຜູ້ນີ້ແຫລະທີ່ຈະໄຖ່ຊົນຊາດອິສຣາເອນໃຫ້ພົ້ນ "* (ຂໍ້ 19-21).

ເມື່ອເຂົາເລົ່າເຫດການທີ່ເກີດຂຶ້ນຈົບແລ້ວພຣະອົງຊົງກ່າວວ່າ *"ໂອ ຄົນໂງ່, ຜູ້ມີໃຈເສັຍຊ້າໃນການເຊື່ອບັນດາຖ້ອຍຄຳຊຶ່ງພວກຜູ້ປະກາດພຣະທັມໄດ້ກ່າວໄວ້ນັ້ນ ຈຳເປັນທີ່ພຣະຄຣິດຈະຕ້ອງທົນທຸກທໍຣະມານຢ່າງນັ້ນ ແລ້ວເຂົ້າໄປໃນຣັສມີຂອງພຣະອົງບໍ່ແມ່ນຫລື ພຣະອົງຈຶ່ງຊົງອະທິບາຍພຣະຄັມພີທັງໝົດທີ່ກ່ຽວກັບພຣະອົງໃຫ້ເຂົາຟັງຕັ້ງແຕ່ໂມເຊແລະບັນດາຜູ້ປະກາດພຣະທັມ "* (ຂໍ້ 25-27). ຄຳຖາມມີຢູ່ວ່າ ເປັນຫຍັງພຣະເຢຊູຈຶ່ງເອີ້ນເຂົາວ່າເປັນຄົນໂງ່ເມື່ອເຂົາສາມາດເລົ່າເຫດການທີ່ເກີດຂຶ້ນຢ່າງລະອຽດ ແລະເຂົາກໍຮູ້ເຣື່ອງຜູ້ປະກາດພຣະທັມໄດ້ກ່າວໄວ້ກ່ອນແລ້ວວ່າຈຳເປັນທີ່ພຣະຄຣິດຈະຕ້ອງທົນທຸກທໍຣະມານຢ່າງນັ້ນ, ສາສນາສາດຜູ້ນຶ່ງອອກຄຳເຫັນວ່າ ເຫດຜົນທີ່ພຣະເຢຊູເອີ້ນເຂົາວ່າຄົນໂງ່ກໍເພາະວ່າເຂົາຮູ້ເຣື່ອງ ແຕ່ບໍ່ເຂົ້າໃຈພຣະເຢຊູ, ສາສນາຈານຜູ້ນັ້ນຍັງເວົ້າອີກວ່າ ເຮົາທັງຫລາຍທີ່ຮູ້ເຣື່ອງພຣະເຢຊູຫລາຍສົມຄວນເພາະມາໂບດເລື້ອຍໆ ສິ່ງສຳຄັນນັ້ນແມ່ນເຮົາເຂົ້າໃຈພຣະອົງຫລືບໍ່? ພະຍາມານກໍຮູ້ພຣະອົງຄືກັນແຕ່ ມັນບໍ່ເຂົ້າໃຈທຸກຢ່າງທີ່ພຣະອົງຊົງເຮັດ ແລະສິ່ງທີ່ພຣະອົງຈະຊົງເຮັດຕໍ່ໄປ. ຈາກບົດຮຽນຕອນນີ້ເຮົາບໍ່ຄວນຈະຮຽນຮູ້ພຣະອົງເທົ່ານັ້ນ ແຕ່ເຮົາຕ້ອງຮຽນເຂົ້າໃຈພຣະອົງດ້ວຍ ເຮົາຈຶ່ງຈະບໍ່ຖືກເອີ້ນວ່າ ຄົນໂງ່ເອີຍ.

<u>ຊົງໄປໄກກວ່າທ່ານຄິດ</u> (24:28-35 )

ເມື່ອເດີນທາງມາເຖິງໝູ່ບ້ານແຫ່ງນຶ່ງສາວົກທັງສອງກໍເຊີນພຣະເຢຊູພັກເຊົາກັບເຂົາ, ໃນຂະນະທີ່ຮ່ວມຮັບທານອາຫານແລງວັນນັ້ນ ພຣະເຢຊູກໍຊົງເປີດເຜີຽໃຫ້ເຂົາຮູ້ວ່າຄົນແປກໜ້າຜູ້ນີ້ແມ່ນພຣະເຢຊູ ໂດຍການໂມທະນາພຣະຄຸນແລ້ວຊົງຫັກເຂົ້າຈີ່ແລະຫາຍຕົວໄປໃນພິບຕາ *"ເມື່ອນັ່ງໂຕະຮ່ວມເຂົາ ພຣະອົງຊົງຈັບເອົາເຂົ້າຈີ່ມາໂມທະນາພຣະຄຸນແລະຊົງຫັກຍື່ນໃຫ້ເຂົາ ແລະຕາຂອງເຂົາກໍຖືກຊົງເປີດອອກ ແລ້ວພຣະອົງກໍຊົງຫາຍໄປຈາກເຂົາ "* (ຂໍ້ 30). ການຫັກເຂົ້າຈີ່ເປັນສັນຍາລັກທີ່ພຣະອົງຊົງຫັກເຂົ້າຈີ່ຮ່ວມກັບພວກສາວົກສິບສອງຄົນຂອງພຣະອົງມີຄວາມໝາຍວ່າຮ່າງກາຍຂອງພຣະອົງໄດ້ແຕກຫັກເພື່ອຄົນທັງຫລາຍທີ່ເຊື່ອໃນພຣະອົງ, ພຣະອົງຊົງບັງຕາເຂົາໄວ້ຕັ້ງແຕ່ເລີ້ມຕົ້ນທີ່ພົບກັນຈາກການຍ່າງລົມກັນມາຕັ້ງແຕ່ກຸງເຢຣູຊາເລັມຈົນມາຮອດບ້ານຂອງເຂົາທີ່ເອມາອູດປະມານສິບຫ້າໄມ ເຂົາບໍ່ຮູ້ຈັກວ່າ

ພຣະອົງແມ່ນໃຜ ແຕ່ການເປັນສາວົກຂອງເຂົາເຮັດໃຫ້ເຂົາມີໃຈກວ້າງຂວາງພໍທີ່ຈະເຊີນຄົນແປກໜ້າເຂົ້າຮ່ວມຮັບປະທານອາຫານນຳເຂົາ, ໃນຂະນະຮັບປະທານອາຫານນັ້ນເອງພຣະເຢຊູໄດ້ຊົງເປີດຕາເຂົາໂດຍສຳແດງໃຫ້ເຂົາເຫັນດ້ວຍພິທີສິນມະຫາສນິດ ໃນເວລານັ້ນເຂົາທັງສອງຈຶ່ງຮູ້ວ່າຊາຍແປກໜ້າຜູ້ນີ້ແມ່ນພຣະເຢຊູຄຣິດຜູ້ຊົງເປັນພຣະເຈົ້າທີ່ຟື້ນຄືນມາຈາກຕາຍແລ້ວ. ທັງສອງຈຶ່ງຊວາດຮູ້ເມື່ອຄຶງແລະເວົ້າກັນວ່າ *"ເມື່ອພຣະອົງຊົງເວົ້າກັບເຮົາຕາມທາງ ແລະໄດ້ຊົງອະທິບາຍພຣະຄຳພີໃຫ້ເຮົາຟັງນັ້ນໃຈຂອງເຮົາກໍຮ້ອນຮົນເໝືອນ ໄຟພາຍໃນເຮົາບໍ່ແມ່ນຫລື"* (ຂໍ້ 32). ວ່າແລ້ວເຂົາກໍພາກັນລຸກເດີນທາງໄປຍັງເຢຣູຊາເລັມແລະເວົ້າເຫດການທັງປວງໃຫ້ພວກສາວົກສິບເອັດຄົນຟັງ. ດ້ວຍຄວາມປິ້ມປິຕິຍິນດີທີ່ສາວົກທັງສອງພົບກັບພຣະເຢຊູ ທັງສອງຈຶ່ງຟ້າວຍ່າງຄືນໄປບອກເຣື່ອງນີ້ກັບສາວົກທີ່ກຸງເຢຣູຊາເລັມ, ທັງສອງບໍ່ຮູ້ຈັກອິດເມື່ອຍ ເມື່ອຍ່າງມາຮອດບ້ານແລ້ວກັບຄືນໄປເຢຣູຊາເລັມບ່ອນທີ່ເຂົາຫາກໍຍ່າງມາສິບຫ້າໄມ ລູບແລ້ວທັງສອງຍ່າງສາມສິບໄມໃນວັນສອງວັນນີ້, ສ່ວນພຣະເຢຊູກໍຊົງສະເດັດໄປຕໍ່.

**<u>ຄຳຖາມ:</u>**

1. ວັນອິສເຕີເປັນວັນສຳຄັນອັນໃດສຳລັບທ່ານ?

2. ທ່ານກະໂລປາແລະເມັຽຂອງເພິ່ນມາກຸງເຢຣູຊາເລັມເຮັດຫຍັງ?

3. ທັງສອງຍ່າງຈາກກຸງເຢຣູຊາເລັມໄປໃສ? ລະຍະທາງໄກປານໃດ? ເຂົາລົມກັນເຣື່ອງຫຍັງ?

4. ເປັນຫຍັງພຣະເຢຊູຄຣິດຈຶ່ງບັງຕາເຂົາບໍ່ເຂົາໃຫ້ເຂົາຮູ້ວ່າແມ່ນພຣະອົງ?

5. ເມື່ອພຣະເຢຊູຖາມເຂົາວ່າ *ເມື່ອຕາມທາງພວກທ່ານໄຕ່ຖາມກັນເຣື່ອງໃດ* ເຂົາຕອບພຣະອົງແນວໃດ? ທ່ານຄິດວ່າເຂົາມີທ່າທີແນວໃດ?

6. ເປັນຫຍັງເຂົາຈຶ່ງຕອບພຣະອົງໃນຂໍ້ 18 ແນວນັ້ນ?

7. ສຸດທ້າຍເມື່ອເຂົາຮູ້ວ່າແມ່ນພຣະອົງແລ້ວເຂົາເຮັດຫຍັງ? ເຣື່ອງນີ້ສອນຫຍັງທ່ານແດ່?

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*